ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

07- 17 ກໍລະກົດ 2023
ປີທີ 12
ສະບັບທີ 930
ລາຍສັປະດາ

## ຫຼາຍບັນຫາສຳຄັນນຳເຂົ້າພິຈາລະນາ ໃນກອງປະຊຸມສະໄໝສາມັນເທື່ອທີ 5

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນມາເປັນອາທິດທີ 2 ລະຫວ່າງວັນທີ 3-7 ກໍລະກົດ 2023 ເຊິ່ງເປັນວາລະພິຈາລະນາວຽກງານຂອງລັດຖະບານ ແລະ ຮັບຟັງການຊີ້ແຈງຈາກທ່ານນາຍົກລັດຖະມົນຕີ, ບັນດາທ່ານລັດຖະມົນຕີທີ່ກ່ຽວຂ້ອງ; ປະເມີນຜົນການຈັດຕັ້ງປະຕິບັດຂົງເຂດຍຸຕິທຳ 4 ສະບັບ; ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ໄລຍະ 2 ກອງປະຊຸມທີ່ຜ່ານມາ ແລະ ທິດທາງແຜນການ 6 ເດືອນ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 5 ຮອດເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ການພິຈາລະນາກົດໝາຍຈຳນວນໜຶ່ງ ພາຍໃຕ້ການຜັດປ່ຽນກັນເປັນປະທານກອງປະຊຸມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ແລະ ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໂດຍມີບັນດາທ່ານຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມເປັນຄະນະປະທານຂອງກອງປະຊຸມ ແລະ ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທົ່ວປະເທດ ເຂົ້າຮ່ວມຢ່າງພ້ອມພຽງ.






ໃນວັນທີ3-5ກໍລະກົດ 2023 ກອງປະຊຸມໄດ້ຮັບຟັງການລາຍງານ ກ່ຽວກັບຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ແລະ ບົດລາຍງານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດຂົງເຂດຍຸຕິທຳ 4 ສະບັບຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ຮັບຟັງການຊີ້ແຈງຕໍ່ວຽກງານຂອງລັດຖະບານ. ພ້ອມນັ້ນ, ໄດ້ຮັບຟັງການປະກອບຄຳເຫັນຈາກຄະນະປະຈຳສະພາແຫ່ງຊາດ, ບັນດາ ສສຊ ກໍໄດ້ສຸມໃສ່ປະກອບຄຳຄິດຄຳເຫັນໃສ່ບັນຫາຕ່າງໆຢ່າງກົງໄປກົງມາ ແລະ ກອງເລຂານຸການກອງປະຊຸມໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ 4 ສະບັບຄື: ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະຍາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030; ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ທິດທາງການລົງທຶນຂອງລັດ ປະຈຳປີ 2024; ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວ

ອ່ານຕໍ່ໜ້າ 2

## ພິຈາລະນາຮັບຮອງເອົາການເຄື່ອນໄຫວ ວຽກງານຂອງສະພາແຫ່ງຊາດ



(ສພຊ) ໃນວັນທີ 5 ກໍລະກົດ 2023 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນວ່າ: ເພື່ອເປັນຂໍ້ມູນໃນການໂຄສະນາເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ແລະ ພໍ່ແມ່ພີ່ນ້ອງຊາວລາວ ທີ່ອາໄສຢູ່ຕ່າງປະເທດ ຮັບຊາບກ່ຽວກັບຜົນສຳເລັດການພິຈາລະນາຮັບຮອງເອົາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ນັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາ ເທື່ອທີ 5

ອ່ານຕໍ່ໜ້າ 2

## ສະເໜີໃຫ້ລັດຖະບານເອົາໃຈໃສ່ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ



(ສພຊ) ທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຖະແຫຼງຂ່າວໃນວັນທີ 4 ກໍລະກົດ 2023 ກ່ຽວກັບຜົນສຳເລັດການພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດວ່າ: ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ມີຄວາມຍິນດີ ແລະ ຖືເປັນກຽດຢ່າງສູງ, ແຈ້ງມາຍັງພະນັກງານ-ລັດຖະກອນ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າ ໃນທົ່ວປະເທດ ແລະ ພີ່ນ້ອງເຊື້ອຊາດລາວທີ່ອາໃສຢູ່ຕ່າງປະເທດ ຮັບຊາບຕໍ່ຜົນສຳເລັດຂອງການຄົ້ນຄວ້າ ແລະ ພິຈາລະນາວຽກງານໃນຂົງເຂດວັດທະນະທຳ-ສັງຄົມກ່ຽວກັບ

ອ່ານຕໍ່ໜ້າ 3

## ຖະແຫຼງຜົນສຳເລັດການພິຈາລະນາ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສດຕິດ



(ສພຊ) ທ່ານ ພົນໂທ ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ໃນວັນທີ 3 ກໍລະກົດຜ່ານມາ, ກ່ຽວກັບຜົນສຳເລັດການພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ວ່າ: ຂ້າພະເຈົ້າມີຄວາມຍິນດີ ແລະ ຖືເປັນກຽດຢ່າງສູງ ແຈ້ງມາຍັງພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ກໍຄືພີ່ນ້ອງເຊື້ອຊາດລາວທີ່ອາໃສຢູ່ຕ່າງປະເທດ ໄດ້ຮັບຊາບຢ່າງທົ່ວເຖິງຕໍ່ຜົນ

ອ່ານຕໍ່ໜ້າ 3

## ສານປະຊາຊົນສູງສຸດລາຍງານການປະເມີນກົດໝາຍ

(ສພຊ) ໃນວັນທີ 4 ກໍລະກົດ 2023 ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ທ່ານ ສຈ. ປອ. ນາງ ວຽງທອງ ສີພັນດອນ ປະທານສານປະຊາຊົນສູງສຸດ ໄດ້ລາຍງານກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ



5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກົດໝາຍວ່າດ້ວຍສານປະຊາຊົນ ສະບັບທຳອິດ ໄດ້ຖືກຮັບຮອງໃນກອງປະຊຸມສະໄໝສາມັນຄົບຄະນະເທື່ອທີ 2 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໃນປີ 1989 ແລະ ປະກາດນຳໃຊ້ຢ່າງເປັນທາງການ ຕາມດຳລັດຂອງປະທານປະເທດ ສະບັບເລກທີ 06, ລົງວັນທີ 09 ມັງກອນ 1990 ປະກອບມີ 6 ພາກ, 38 ມາດຕາ; ກົດໝາຍສະບັບນີ້ ຖືເປັນນິຕິກຳ ທີ່ມີຄວາມໝາຍສຳຄັນ ແລະ ເປັນເຄື່ອງມືພື້ນຖານໃນການສ້າງຕັ້ງ ແລະ ພັດທະ

ອ່ານຕໍ່ໜ້າ 9

## ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 2 ສະບັບ

(ສພຊ) ໃນວັນທີ 4 ກໍລະກົດ 2023 ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ທ່ານ ໄຊຊະນະ ໂຄດພູທອນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໄດ້ລາຍງານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຕໍ່ກອງປະຊຸມສະໄໝສາ



ມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ພາຍຫຼັງ ສປປ ລາວ ໄດ້ຫັນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລັດຖະທຳມະນູນ ແລະ ກົດໝາຍ ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໄດ້ຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບທຳອິດ, ຕາມມະຕິຂອງສະພາປະຊາຊົນສູງສຸດ ສະບັບເລກທີ 30/ສປສ

ອ່ານຕໍ່ໜ້າ 11

**ຊົມເຊີຍ ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

## ຫຼາຍບັນຫາ...

(ຕໍ່ຈາກໜ້າ 1)

ກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ແລະ ວ່າດ້ວຍການຮັບຮອງເອົາບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດຂົງເຂດຍຸຕິທຳ 4 ສະບັບຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ຫຼັງຈາກນັ້ນ, ໄດ້ຮັບຟັງການຊີ້ແຈງຕໍ່ວຽກງານຂອງລັດຖະບານ.

ສຳລັບຕອນບ່າຍຂອງວັນທີ 5 ກໍລະກົດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດໄດ້ສະເໜີບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ໄລຍະ 2 ກອງປະຊຸມທີ່ຜ່ານມາ ແລະ ທິດທາງແຜນການ 6 ເດືອນ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX. ຈາກນັ້ນ, ບັນດາທ່ານ ສສຊ ກໍໄດ້ປະກອບຄຳຄິດຄຳເຫັນຕາມການເຈາະຈີ້ມຂອງປະທານກອງປະຊຸມ ແລະ ທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ໃນນາມຫົວໜ້າກອງເລຂານຸການກອງປະຊຸມ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການ ເຄື່ອນໄຫວວຽກງານ ໄລຍະ 2 ກອງປະຊຸມທີ່ຜ່ານມາ ແລະ ທິດທາງແຜນການ 6 ເດືອນ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີIX.

ສ່ວນວາລະຂອງວັນທີ 6-7 ກໍລະກົດ, ກອງປະຊຸມໄດ້ພິຈາລະນາກ່ຽວກັບກົດໝາຍສ້າງໃໝ່ ຈຳນວນ 2 ສະບັບຄື: ກົດໝາຍວ່າດ້ວຍອາກອນທີ່ດິນ ແລະ ກົດໝາຍວ່າດ້ວຍເຍົາວະຊົນລາວ.

**(ນາງ ປາກາລັກ ພົມມີໄຊ)**

## ພິຈາລະນາ...

(ຕໍ່ຈາກໜ້າ 1)

ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີວຽກງານພົ້ນເດັ່ນ ດັ່ງນີ້:

**1. ດ້ານນິຕິບັນຍັດ**

1) ສຳເລັດການປັບປຸງ, ຮຽບຮຽງກົດໝາຍ ຈຳນວນ 12 ສະບັບ ທີ່ຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ແລະ ໄດ້ນຳສະເໜີປະທານປະເທດ ອອກລັດຖະດຳລັດປະກາດໃຊ້ຕາມກົດໝາຍກຳນົດ, ໃນນີ້ ກົດໝາຍສ້າງໃໝ່ 3 ສະບັບ ແລະ ກົດໝາຍປັບປຸງ 9 ສະບັບ ກວມເອົາ 4 ຂົງເຂດ ຄື: ຂົງເຂດການປົກຄອງ 3 ສະບັບ, ຂົງເຂດເສດຖະກິດ-ການເງິນ 4 ສະບັບ, ຂົງເຂດວັດທະນະທຳ-ສັງຄົມ 4 ສະບັບ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 1 ສະບັບ;

2) ພິຈາລະນາຮັບຮອງເອົາກົດໝາຍ ຈຳນວນ 10 ສະບັບ, ໃນນີ້ ກົດໝາຍສ້າງໃໝ່ 4 ສະບັບ ແລະ ກົດໝາຍປັບປຸງ 6 ສະບັບ;

3) ຄົ້ນຄວ້າ ແລະ ກະກຽມການປະເມີນປັບປຸງກົດໝາຍຂົງເຂດສະພາແຫ່ງຊາດ ຈຳນວນ 4 ສະບັບ ຄື: ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

4) ຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ ຈຳນວນ 3 ຫົວຂໍ້ທີ່ພົວພັນກັບປະມວນກົດໝາຍອາຍາ; ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ດຳລັດຂອງລັດຖະບານ;

5) ໄດ້ໂຄສະນາເຜີຍແຜ່ບາງມາດຕາຂອງກົດໝາຍທີ່ຕິດພັນກັບບັນຫາເຄັ່ງຮ້ອນຂອງສັງຄົມຜ່ານສື່ມວນຊົນຂອງສະພາແຫ່ງຊາດ; ປະສານສົມທົບ ແລະ ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງການລົງໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ຢູ່ບັນດາກະຊວງ, ອົງການ ໄດ້ຈຳນວນ 6 ພາກສ່ວນ; ຈັດກອງປະຊຸມເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໄດ້ຈຳນວນ 2 ຄັ້ງ;

6) ຈັດຕັ້ງປະເມີນຜົນການປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໃຫ້ແກ່ເປົ້າໝາຍຕ່າງໆຢູ່ຈຳນວນ 9 ແຂວງ;

7) ຄົ້ນຄວ້າການໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຕາມການສະເໜີຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ຈຳນວນ 3 ສະບັບ;

**2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ** ເອົາໃຈໃສ່ຄົ້ນຄວ້າຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດ ດັ່ງນີ້:

1) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາ 23 ເນື້ອໃນ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 20 ສະບັບ ໃນນີ້, ວຽກງານລັດຖະບານ 5 ສະບັບ, ວຽກງານສະພາແຫ່ງຊາດ 1 ສະບັບ; ວຽກງານອົງການໄອຍະການປະຊາຊົນສູງສຸດ ແລະ ວຽກງານສານປະຊາຊົນສູງສຸດ 4 ສະບັບ, ວຽກງານການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ;

2) ໄດ້ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຈຳນວນ 7 ຄັ້ງ ເຊິ່ງໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງບັນດາເນື້ອໃນຕ່າງໆ ຈຳນວນ 110 ເນື້ອໃນ ແລະ ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ຈຳນວນ 101 ສະບັບ.

3. ດ້ານການຕິດຕາມກວດກາ

1) ການເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ ແລະ ເກັບກຳຂໍ້ມູນວຽກງານຕ່າງໆ ໄດ້ຈຳນວນ 10 ຄັ້ງ ທີ່ພົວພັນກັບການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຜັນຂະຫຍາຍເນື້ອໃນກົດໝາຍ ທີ່ເປັນນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຕິດພັນກັບຄວາມຄືບໜ້າໃນການປະຕິບັດສອງວາລະແຫ່ງຊາດ, ການຊົດເຊີຍຜົນກະທົບຈາກການລົງທຶນຂອງລັດ;

2) ໄດ້ກະກຽມຄຳຊັກຖາມທີ່ເປັນບັນຫາເຄັ່ງຮ້ອນຂອງສັງຄົມ ເປັນຕົ້ນ ການຂຸດຄົ້ນແຮ່ທາດ, ການເໜັງຕີງຂອງລາຄາສິນຄ້າ, ບັນຫາອັດຕາແລກປ່ຽນ, ການຜະລິດເປັນສິນຄ້າທົດແທນການນຳເຂົ້າ, ບັນຫາໂກຕາຄູ, ການປະລະການຮຽນ ແລະ ບັນຫາແຮງງານທີ່ຫຼັ່ງໄຫຼໄປເຮັດວຽກຢູ່ປະເທດໃກ້ຄຽງ ເພື່ອໃຫ້ລັດຖະບານ, ພາກສ່ວນກ່ຽວຂ້ອງ ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX;

3) ຄົ້ນຄວ້າຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ທີ່ສົ່ງເຖິງກອງປະຊຸມສະໄໝສາມັນເທື່ອທີ 4 ສະພາແຫ່ງຊາດ ຊຸດທີ IX ເຊິ່ງສັງລວມເອົາບັນຫາຕ່າງໆ ຈຳນວນ 352 ເນື້ອໃນ ສົ່ງໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ. ນອກນັ້ນ, ໄດ້ດຳເນີນກອງປະຊຸມຮ່ວມລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ກັບຄະນະລັດຖະບານ ເພື່ອພິຈາລະນາເນື້ອໃນສຳຄັນຕ່າງໆ;

4) ໄດ້ຄົ້ນຄວ້າ, ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ໄດ້ຈຳນວນ 304 ເລື່ອງ; ຕ້ອນຮັບ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ ໄດ້ຈຳນວນ 136 ຄັ້ງ.

ນອກຈາກການປະຕິບັດພາລະບົດບາດຂອງສະພາແຫ່ງຊາດແລ້ວ ຍັງໄດ້ປະຕິບັດໜ້າທີ່ວຽກງານປິ່ນອ້ອມ ຈຳນວນໜຶ່ງ ດັ່ງນີ້:

5) ດຳເນີນການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ; ປະຕິບັດນະໂຍບາຍໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ຈຳນວນໜຶ່ງ; ສຳເລັດການຂຽນຕຳແໜ່ງງານຕິດພັນກັບການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງສະພາແຫ່ງຊາດ; ເອົາໃຈໃສ່ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານ-ລັດຖະກອນ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ຈຳນວນ 16 ຄັ້ງ; ຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳຂອງສະພາແຫ່ງຊາດ ຈຳນວນ 14 ສະບັບ;

6) ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງປະຈຳເຂດເລືອກຕັ້ງ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ຕິດພັນກັບການລົງພົບປະປະຊາຊົນຜູ້ມີສິດເລືອກຕັ້ງ ສຳເລັດໃນຂອບເຂດທົ່ວປະເທດ ໄດ້ຈຳນວນ 1.191 ຈຸດ, ມີຜູ້ເຂົ້າຮ່ວມ 125.162 ເທື່ອຄົນ, ຍິງ 59.658 ເທື່ອຄົນ; ນອກນັ້ນ, ຍັງໄດ້ລະດົມທຶນຊ່ວຍເຫຼືອດ້ານທຶນຮອນ ແລະ ວັດຖຸເຄື່ອງໃຊ້ຕ່າງໆໃຫ້ແກ່ປະຊາຊົນ ລວມເປັນມູນຄ່າທັງໝົດ 1.026.747.000 ກີບ; ສຳເລັດການດຳເນີນກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ປະຈຳປີ 2022;

7) ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕ່າງປະເທດ ຮັບຜົນສຳເລັດເປັນຢ່າງດີ ເປັນຕົ້ນ ຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ຕ່າງປະເທດ 8 ຄັ້ງ; ເຂົ້າຮ່ວມກອງປະຊຸມລະດັບຕ່າງໆ ໃນພາກພື້ນ ແລະ ສາກົນ 15 ຄັ້ງ; ຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງປະເທດຕ່າງໆ 9 ຄະນະ ແລະ ຮັບການເຂົ້າຢ້ຽມຂ່ຳນັບ ຂອງຄະນະຜູ້ແທນປະເທດຕ່າງໆ 19 ຄະນະ ແລະ ອື່ນໆ;

ໃນ 6 ເດືອນຕໍ່ໜ້າ ສະພາແຫ່ງຊາດຈະໄດ້ສືບຕໍ່ເຄື່ອນໄຫວວຽກງານແຕ່ນີ້ຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຕາມພາລະບົດບາດຂອງຕົນໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ດັ່ງນີ້:

1. ດ້ານນິຕິບັນຍັດ

1) ປັບປຸງ ແລະ ຮຽບຮຽງເນື້ອໃນກົດໝາຍ 10 ສະບັບ ທີ່ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີIX; ກະກຽມຮ່າງກົດໝາຍ 12 ສະບັບ, ໃນນີ້, ກົດໝາຍສ້າງໃໝ່ 3 ສະບັບ, ກົດໝາຍປັບປຸງ 9 ສະບັບ ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX; ຄົ້ນຄວ້າ ແລະ ປະເມີນກ້າວໄປເຖິງການປັບປຸງກົດໝາຍຂົງເຂດຂອງສະພາແຫ່ງຊາດ 4 ສະບັບ;

2) ກະກຽມປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ ຄື: ກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍປ້ອງກັນຄວາມສະຫງົບປະຊາຊົນ;

3) ຄົ້ນຄວ້າຕີຄວາມໝາຍ ຫຼື ອະທິບາຍກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ; ຄົ້ນຄວ້າ, ໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນທີ່ສປປ ລາວ ເປັນພາຄີ ໃຫ້ມີຄຸນນະພາບຕາມກົດໝາຍກຳນົດ; ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕໍ່ເປົ້າໝາຍຕ່າງໆໃຫ້ໄດ້ຢ່າງກວ້າງຂວາງ.

2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

1) ຮັບປະກັນການພິຈາລະນາຮັບຮອງເອົາບັນດາເນື້ອໃນສຳຄັນຕ່າງໆ ທີ່ນຳມາຜ່ານກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ເປັນຕົ້ນ ສະຫຼຸບການຈັດຕັ້ງປະຕິບັດແຜນການ 5 ປີ ກາງສະໄໝ ຂອງແຕ່ລະພາກສ່ວນ, ການປະເມີນຜົນຄວາມໄວ້ວາງໃຈຕໍ່ບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ແລະ ວຽກງານອື່ນໆ;

2) ເອົາໃຈໃສ່ພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ.

**3. ດ້ານການຕິດຕາມກວດກາ**

1) ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ;

2) ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ຕິດພັນກັບວາລະແຫ່ງຊາດ; ການຈັດຕັ້ງປະຕິບັດໜ້າທີ່ຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການສືບສວນ-ສອບສວນ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອເປັນຂໍ້ມູນໃຫ້ແກ່ກອງປະຊຸມສະພາແຫ່ງຊາດ ໃນຄັ້ງຕໍ່ໄປ;

3) ຕິດຕາມກວດກາໂຄງການລົງທຶນຂະໜາດໃຫຍ່ທີ່ສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ ແລະ ຕິດຕາມກວດກາວຽກງານອື່ນໆ ຈຳນວນໜຶ່ງ;

4) ຕິດຕາມກວດກາຜ່ານກົນໄກການຮັບ ແລະ ພິຈາລະນາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໃຫ້ໄດ້ 80% ຂຶ້ນໄປຂອງຈຳນວນຄຳຮ້ອງທີ່ເຂົ້າມາສະພາແຫ່ງຊາດ.

**4. ການປະຕິບັດວຽກງານປິ່ນອ້ອມຕ່າງໆ**

1) ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຫົວຂໍ້ຕ່າງໆ; ຄົ້ນຄວ້າຫົວຂໍ້ວິທະຍາສາດ, ທັກສະ ແລະ ສ້າງປຶ້ມຄູ່ມື ທີ່ພົວພັນກັບພາລະບົດບາດ ຂອງສະພາແຫ່ງຊາດ ແລະ ວິທີການບໍລິການ, ບໍລິຫານຮັບໃຊ້ຕ່າງໆ; ດຳເນີນກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ທົ່ວປະເທດ; ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຕ່າງໆຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

2) ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເອົາໃຈໃສ່ປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຮັບປະກັນການປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ຢູ່ແຕ່ລະທ້ອງຖິ່ນ ຕາມກົດໝາຍກຳນົດ.

3) ເອົາໃຈໃສ່ເຄື່ອນໄຫວວຽກງານການຕ່າງປະເທດໃຫ້ສອດຄ່ອງຕາມແນວທາງການຕ່າງປະເທດຂອງພັກ ດ້ວຍຄວາມເປັນເຈົ້າການ ແລະ ມີຜົນສຳເລັດເປັນຢ່າງດີ ເປັນຕົ້ນວຽກງານພົວພັນຮ່ວມມືໃນຂອບສອງຝ່າຍແລະຫຼາຍຝ່າຍ. ອັນພົ້ນເດັ່ນແມ່ນກະກຽມເປັນເຈົ້າພາບກອງປະຊຸມສຸດຍອດລັດຖະສະພາ 3 ປະເທດ ລາວ-ຫວຽດນາມ-ກຳປູເຈຍ; ກະກຽມເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 44 ຢູ່ປະເທດອິນໂດເນເຊຍ ແລະ ເລີ່ມກະກຽມຮອບດ້ານໃຫ້ແກ່ການເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ຢູ່ ສປປ ລາວ.

## ສະເໜີ...

(ຕໍ່ຈາກໜ້າ 1)

ການຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ.

ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງວັນທີ 30 ມິຖຸນາ 2023 ໄດ້ຮັບຟັງການລາຍງານໂດຍສັງເຂບຈາກລັດຖະບານ ທີ່ນຳສະເໜີໂດຍທ່ານລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫຼັງຈາກນັ້ນ ຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ຂຶ້ນມີຄຳເຫັນຕໍ່ບົດລາຍງານດັ່ງກ່າວ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ສຸມໃສ່ຄົ້ນຄວ້າ ແລະ ປະກອບຄວາມຄິດເຫັນຢ່າງກົງໄປກົງມາດ້ວຍຄວາມຮັບຜິດຊອບສູງ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ, ພ້ອມທັງສະເໜີວິທີການ ແລະ ມາດຕະການ ເພື່ອໃຫ້ລັດຖະບານ ກໍຄືພາກສ່ວນກ່ຽວຂ້ອງນຳໄປຄົ້ນຄວ້າ, ປັບປຸງ ວຽກງານດັ່ງກ່າວໃຫ້ມີຜົນສຳເລັດດີຂຶ້ນ.

ຜູ້ແທນກອງປະຊຸມສ່ວນຫຼາຍ ແມ່ນເຫັນດີເປັນເອກະພາບຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເຊິ່ງໄລຍະຜ່ານມາ, ລັດຖະບານ ໄດ້ມີຄວາມພະຍາຍາມສ້າງ ແລະ ນຳພາຈັດຕັ້ງປະຕິບັດແຜນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ມີຜົນສຳເລັດຫຼາຍດ້ານ ແລະ ໄດ້ປະກອບສ່ວນສຳຄັນເຂົ້າໃນການປົກປ້ອງພົນລະເມືອງ ຈາກຜົນກະທົບທາງດ້ານເສດຖະກິດ-ສັງຄົມ, ໄພພິບັດທຳມະຊາດ ແລະ ກໍລະນີ ອື່ນໆ. ແຕ່ເຖິງຢ່າງໃດກໍຕາມ ຜ່ານການຕິດຕາມກວດກາຕົວຈິງຂອງສະພາແຫ່ງຊາດ, ຜູ້ແທນ ຍັງສະແດງຄວາມເປັນຫ່ວງເປັນໃຍ ແລະ ສະເໜີໃຫ້ລັດຖະບານ ເອົາໃຈໃສ່ແກ້ໄຂບາງດ້ານດັ່ງນີ້:

1. ໃຫ້ລັດຖະບານ ດຳເນີນການຕິດຕາມກວດກາ ແລະ ປະເມີນຜົນວຽກງານປະກັນສຸຂະພາບ, ປະກັນສັງຄົມ ເພື່ອຊອກໃຫ້ເຫັນດ້ານດີ, ຂໍ້ຄົງຄ້າງ, ສາເຫດ ແລະ ວິທີແກ້ໄຂໃນຕໍ່ໜ້າ ໂດຍສະເພາະໃນເງື່ອນໄຂທີ່ປະເທດເຮົາຍັງມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ຊີວິດການເປັນຢູ່ຂອງປະຊາຊົນຍັງມີຄວາມຫຍຸ້ງຍາກ, ການຕອບສະໜອງງົບປະມານຂອງລັດໃຫ້ແກ່ກອງທຶນປະກັນສຸຂະພາບ ແລະ ກອງທຶນປະກັນສັງຄົມ ຍັງມີຄວາມຈຳກັດ, ກອງປະຊຸມສະເໜີລັດຖະບານຄົ້ນຄວ້າໂຮມສອງກອງທຶນດັ່ງກ່າວ ໃຫ້ຂຶ້ນກັບອົງການຄຸ້ມຄອງດຽວກັນ ພາຍໃຕ້ການຊີ້ນຳໂດຍກົງຂອງລັດຖະບານ ເພື່ອເຮັດໃຫ້ວຽກງານປະກັນສຸຂະພາບ, ປະກັນສັງຄົມ ມີຄວາມເຂັ້ມແຂງ ແລະ ຍືນຍົງ, ຫຼຸດຜ່ອນການແບກຫາບດ້ານງົບປະມານຂອງລັດ;

2. ໃຫ້ລັດຖະບານສ້າງ ແລະ ປັບປຸງລະບົບຖານຂໍ້ມູນລະດັບຊາດ ກ່ຽວກັບວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໃຫ້ລວມສູນ, ທັນສະໄໝ ແລະ ສາມາດເຊື່ອມຕໍ່ກັນໄດ້ລະຫວ່າງຂະແໜງການ, ທ້ອງຖິ່ນໃນຂອບເຂດທົ່ວປະເທດ, ສາມາດກຳນົດໄດ້ກຸ່ມເປົ້າໝາຍທີ່ຈະໄດ້ຮັບການຊ່ວຍເຫຼືອ ເປັນຕົ້ນ: ຜູ້ທີ່ມີຖານະເສດຖະກິດ ທຸກຍາກ, ປານກາງ, ຜູ້ມີຖານະດີ, ກຸ່ມເປົ້າໝາຍທີ່ດ້ອຍໂອກາດ, ກຸ່ມທີ່ໄດ້ຮັບການປົກປ້ອງພິເສດ;

3. ໃຫ້ລັດຖະບານ ເອົາໃຈໃສ່ປັບປຸງກົນໄກການຄຸ້ມຄອງບໍລິຫານ, ບັນຫາຄຸນນະພາບການບໍລິການຂອງລະບົບປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ລວມທັງການປັບປຸງຈັນຍາບັນ, ຈັນຍາທຳຂອງບຸກຄະລາກອນ ໃຫ້ມີນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ; ຄົ້ນຄວ້າການອອກບັດປະກັນສຸຂະພາບໃຫ້ທົ່ວເຖິງ, ປັບປຸງບັດປະກັນສັງຄົມ, ບັດປະກັນສຸຂະພາບ ໃຫ້ສາມາດນຳໃຊ້ໄດ້ຢ່າງສະດວກຢູ່ທຸກສະຖານທີ່ບໍລິການປິ່ນປົວສຸຂະພາບ ໃນຂອບເຂດທົ່ວປະເທດ;

4. ໃຫ້ລັດຖະບານ ຄົ້ນຄວ້າຈັດສັນງົບປະມານ ເພື່ອແກ້ໄຂບັນຫາໜີ້ສິນທີ່ສະສົມມາຫຼາຍປີ ຂອງກອງທຶນປະກັນສຸຂະພາບ ເພື່ອບໍ່ໃຫ້ເກີດມີໜີ້ສິນສະສົມໄປເລື້ອຍໆ ແລະ ເພີ່ມງົບປະມານໃຫ້ແກ່ວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໂດຍສະເພາະແມ່ນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ຄຸນງາມຄວາມດີ ໃນພາລະກິດປະຕິວັດຊາດ ປະຊາທິປະໄຕ ໃຫ້ສຳເລັດໂດຍໄວ;

5. ໃຫ້ລັດຖະບານ ເອົາໃຈໃສ່ຊີ້ນຳບັນດາຂະແໜງການກ່ຽວຂ້ອງ ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ສະພາບຄວາມເປັນຈິງຂອງແຕ່ລະໄລຍະ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາການໂຄສະນາເຜີຍແຜ່ ແລະ ການຈັດຕັ້ງປະຕິບັດໃຫ້ແຂງແຮງ;

6. ໃຫ້ລັດຖະບານ ຊີ້ນຳຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເພື່ອປັບປຸງວິທີການ, ມາດຕະການຈັດຕັ້ງປະຕິບັດ 20 ກິດຈະກຳທີ່ກຳນົດໄວ້ໃນແຜນຍຸດທະສາດດັ່ງກ່າວໃຫ້ເກີດຜົນເປັນຈິງ;

7. ໃຫ້ລັດຖະບານ ຊີ້ນຳການຄົ້ນຄວ້າ ແລະ ປັບປຸງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມາທິການເພື່ອປົກປ້ອງສັງຄົມ, ປັບປຸງກົນໄກປະສານງານໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ລະຫວ່າງ ບັນດາຂະແໜງການຂັ້ນສູນກາງດ້ວຍກັນ ແລະ ລະຫວ່າງ ສູນກາງກັບທ້ອງຖິ່ນ ໃຫ້ມີຄວາມໂລ່ງລ່ຽນ, ກົມກຽວກັນ, ມີປະສິດທິພາບ ແລະ ປະສິດທິຜົນກວ່າເກົ່າ.

ທັງໝົດນັ້ນ, ແມ່ນໄດ້ສະແດງເຖິງຄວາມຮັບຜິດຊອບໜ້າທີ່ການເມືອງຂອງລັດຖະບານ ໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເພື່ອຮັບປະກັນໃຫ້ບັນດາຄາດໝາຍທີ່ກຳນົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ບັນລຸຕາມແຜນການທີ່ວາງໄວ້.

## ຖະແຫຼງຜົນ...

(ຕໍ່ຈາກໜ້າ 1)

ສຳເລັດກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະເກືອບ 2 ປີຜ່ານມາ (ແຕ່ເດືອນກໍລະກົດ 2021 ເຖິງ ເດືອນມິຖຸນາ 2023). ຄືດັ່ງບັນດາທ່ານໄດ້ຮັບຊາບໄປແລ້ວ ໃນຕອນບ່າຍ ຂອງວັນທີ 29 ມິຖຸນາ 2023 ທີ່ຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຟັງລາຍງານຂອງລັດຖະບານ ກ່ຽວກັບຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະເກືອບ 2 ປີທີ່ຜ່ານມາ ແລະ ຮັບຟັງບົດປະກອບຄວາມເຫັນ ຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ຈຳນວນ 9 ທ່ານ, ຍິງ 1 ທ່ານ ຕໍ່ບົດລາຍງານດັ່ງກ່າວ.

ກອງປະຊຸມ ໄດ້ສະແດງຄວາມຊົມເຊີຍຕໍ່ລັດຖະບານທີ່ໄດ້ມີຄວາມພະຍາຍາມຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ໃນເງື່ອນໄຂທີ່ປະເທດເຮົາພວມປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຜົນກະທົບຈາກການແຜ່ລະບາດ ຂອງພະຍາດໂຄວິດ-19, ແຕ່ລັດຖະບານ ກໍຄືຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໄດ້ມີຄວາມຕັດສິນໃຈ ແລະ ມີຄວາມຮັບຜິດຊອບສູງໃນການຊີ້ນຳເຊິ່ງສາມາດຈັດຕັ້ງປະຕິບັດແຜນການຕາມ 6 ວຽກຈຸດສຸມ ຂອງວາລະແຫ່ງຊາດ ໄດ້ມີຄວາມຄືບໜ້າຢ່າງຕໍ່ເນື່ອງ ແລະ ມີຜົນສຳເລັດຫຼາຍດ້ານ, ອັນພົ້ນເດັ່ນແມ່ນໄດ້ເຮັດໃຫ້ປະຊາຊົນບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ ຮັບຮູ້ ເຂົ້າໃຈ ຕໍ່ຄວາມສຳຄັນໃນການຍົກລະດັບການແກ້ໄຂບັນຫາຢາເສບຕິດ ເປັນວາລະແຫ່ງຊາດ, ຮັບຮູ້ຜົນຮ້າຍ ແລະ ຄວາມອັນຕະລາຍ ຂອງຢາເສບຕິດ ແລະ ມີຄວາມຈຳເປັນຕ້ອງເພີ່ມທະວີການມີສະຕິຕໍ່ການເຄົາລົບກົດໝາຍ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດວາລະແຫ່ງຊາດດັ່ງກ່າວຢ່າງເປັນຂະບວນການກວ້າງຂວາງ; ຕະຫຼອດໄລຍະເກືອບ 2 ປີຜ່ານມາ, ຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ກໍຄືເຈົ້າໜ້າທີ່ທຸກພາກສ່ວນໄດ້ເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມສາມາດຂອງຕົນສູງຂຶ້ນ ຕໍ່ການແກ້ໄຂບັນຫາຢາເສບຕິດ ເຊິ່ງຜ່ານການປະຕິບັດຕົວຈິງ ກໍສາມາດແກ້ໄຂມ້າງລາຍຄະດີຢາເສບຕິດໄດ້ຫຼວງຫຼາຍພໍສົມຄວນ ເຊິ່ງໄດ້ເຮັດໃຫ້ກຸ່ມເສບ, ຂົນສົ່ງ-ຄ້າຂາຍຢາເສບຕິດມີຄວາມຢ້ານກົວ, ຈຳນວນໜຶ່ງໄດ້ຢຸດເຊົາ; ຜູ້ເສບຢາເສບຕິດ ຫຼື ຜູ້ຖືກເຄາະຮ້າຍ ຈຳນວນບໍ່ໜ້ອຍ ໄດ້ຮັບການບຳບັດ, ປິ່ນປົວ ແລ້ວກັບຄືນເປັນພົນລະເມືອງດີ; ບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນໄດ້ໃຫ້ການສະໜັບສະໜູນ, ຊ່ວຍເຫຼືອ ແລະ ຮ່ວມມື ເພື່ອແກ້ໄຂບັນຫາຢາເສບຕິດ, ສາມາດແກ້ໄຂສະພາບຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມໄດ້ໂດຍພື້ນຖານ ແລະ ປະກອບສ່ວນໃນການສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ແກ່ການປົກປັກຮັກສາປະເທດຊາດ, ການພັດທະນາເສດຖະກິດ-ສັງຄົມ ແລະ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ.

ກອງປະຊຸມຍັງຍົກໃຫ້ເຫັນດ້ານອ່ອນ-ຄົງຄ້າງ, ທີ່ລັດຖະບານຕ້ອງໄດ້ສູ້ຊົນແກ້ໄຂໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ ເປັນຕົ້ນແມ່ນ: ການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາ ຍັງຊັກຊ້າ, ການໂຄສະນາສ້າງຄວາມຮັບຮູ້ໃນທົ່ວສັງຄົມ ຍັງບໍ່ທັນເລິກເຊິ່ງ ແລະ ທົ່ວເຖິງ, ຄວາມເປັນເຈົ້າການຂອງຄະນະນຳບາງຂະແໜງການ, ບາງທ້ອງຖິ່ນຍັງບໍ່ສູງ; ຂະບວນການລວມຍັງບໍ່ທັນຟົດຟື້ນແຂງແຮງ, ການສະໜອງບຸກຄະລາກອນ, ງົບປະມານ, ວັດຖຸ, ອຸປະກອນ, ພາຫະນະທີ່ຈຳເປັນ ເພື່ອຮັບໃຊ້ໃນການປະຕິບັດວາລະແຫ່ງຊາດ ຍັງຊັກຊ້າ ແລະ ມີຄວາມຈຳກັດຫຼາຍ;

ບັນດານິຕິກຳ ຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດ ຍັງບໍ່ທັນລະອຽດ, ຄົບຖ້ວນ; ການປັບປຸງກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກຂອງພາກສ່ວນເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຢູ່ຂັ້ນຮາກຖານ ເປັນຕົ້ນ ຂັ້ນເມືອງ, ຂັ້ນບ້ານ ຍັງບໍ່ທັນໄດ້ຮັບການປັບປຸງໃຫ້ໜັກແໜ້ນເທົ່າທີ່ຄວນ; ຂອດປະສານງານຍັງບໍ່ທັນດີ; ການແກ້ໄຂບັນຫາຢາເສບຕິດຕົວຈິງ ສ່ວນຫຼາຍແກ້ໄຂໄດ້ແຕ່ເປົ້າໝາຍລາຍຍ່ອຍ ແລະ ເປົ້າໝາຍຮັບຈ້າງຂົນສົ່ງ, ຍັງບໍ່ທັນສາມາດແກ້ໄຂເປົ້າໝາຍໃຫຍ່ທີ່ເປັນຫົວໂປ່ໂຕການ; ພື້ນຖານໂຄງລ່າງ ເປັນຕົ້ນ ສະຖານທີ່ຄຸມຂັງ, ສູນບຳບັດ-ປິ່ນປົວ ຢູ່ຂັ້ນແຂວງ, ຂັ້ນເມືອງ ຍັງຄັບແຄບແອອັດ, ການສ້າງວິຊາອາຊີບ, ການຝຶກສີມືແຮງງານຢູ່ຄ້າຍຄຸມຂັງ ແລະ ສູນບຳບັດປິ່ນປົວ ຍັງເຮັດບໍ່ທັນໄດ້ດີ ແລະ ບໍ່ທັນມີຄຸນນະພາບ, ສັງຄົມຍັງມີສ່ວນຮ່ວມບໍ່ຫຼາຍ.

ການດຳເນີນຄະດີກ່ຽວກັບຢາເສບຕິດຍັງຊັກຊ້າ, ການກັກຂັງພາຍເກີນກຳນົດ, ການກວດວິໄຈສານເສບຕິດຊັກຊ້າ, ກົນໄກການປະສານສົມທົບລະຫວ່າງເຈົ້າໜ້າທີ່ກ່ຽວຂ້ອງບໍ່ທັນຮັດກຸມ, ບໍ່ທັນຈອດກັນ ໂດຍສະເພາະແມ່ນຄະດີທີ່ເກີດຂຶ້ນຢູ່ເຂດຫ່າງໄກສອກຫຼີກ, ຍັງມີການສວຍໃຊ້ໜ້າທີ່ຕຳແໜ່ງຂອງເຈົ້າໜ້າທີ່ຈຳນວນໜຶ່ງ.

ສຳລັບທິດທາງແຜນການໃນໄລຍະ 6 ເດືອນທ້າຍປີ 2023 ກໍຄືໃນຕໍ່ໜ້າ, ກອງປະຊຸມເຫັນດີເປັນເອກະພາບ ໃຫ້ລັດຖະບານ ກໍຄືທຸກພາກສ່ວນໃນສັງຄົມ ສືບຕໍ່ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ດັ່ງນີ້:

1. ສືບຕໍ່ເພີ່ມທະວີບົດບາດ ແລະ ຄວາມສາມາດໃນການນຳພາ-ຊີ້ນຳ ຂອງຄະນະພັກ ແລະ ອົງການລັດແຕ່ລະຂັ້ນ ໃຫ້ແຂງແຮງຂຶ້ນກວ່າເກົ່າ ໂດຍເຮັດໃຫ້ວຽກງານແກ້ໄຂບັນຫາຢາເສບຕິດກາຍເປັນໜ້າທີ່, ພັນທະ ແລະ ຄວາມຮັບຜິດຊອບ ຂອງທຸກພາກສ່ວນໃນສັງຄົມ; ຖືເອົາບັນຫາແກ້ໄຂຢາເສບຕິດ ເປັນມາດຕະຖານເງື່ອນໄຂໜຶ່ງ ໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຕິດພັນກັບການສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ ເພື່ອເປັນການປຸກລະດົມ, ຊຸກຍູ້ທຸກຄົນເຂົ້າຮ່ວມຢ່າງແຂງແຮງ ແລະ ເປັນຂະບວນການຟົດຟື້ນ;

2. ສືບຕໍ່ສ້າງຄວາມຮັບຮູ້ໃຫ້ສັງຄົມ ດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ, ຜົນຮ້າຍ ແລະ ຄວາມອັນຕະລາຍຂອງຢາເສບຕິດ ດ້ວຍຫຼາຍຮູບແບບ, ຫຼາຍວິທີຕື່ມອີກ ໂດຍຕິດພັນກັບການໂຄສະນາຕົວແບບດີເດັ່ນໃນການຕ້ານຢາເສບຕິດ, ຂະບວນການສ້າງຄອບຄົວ, ບ້ານ, ສຳນັກງານ-ອົງການ, ໂຮງຮຽນ, ໂຮງໝໍ, ສະຖາບັນ, ໂຮງແຮມ, ຮ້ານບັນເທີງ ແລະ ຮ້ານອາຫານປອດຢາເສບຕິດ ໃຫ້ຫຼາຍຂຶ້ນ;

3. ສືບຕໍ່ປັບປຸງບັນດານິຕິກຳທີ່ຈຳເປັນຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ຄົບຖ້ວນ, ລະອຽດ, ຈະແຈ້ງ, ຮັດກຸມ ເປັນຕົ້ນ ນິຕິກຳ ເພື່ອຈັດຕັ້ງປະຕິບັດໂທດປະຫານຊີວິດ, ນິຕິກຳທີ່ຈະບັນຈຸ ປະເພດຢາເສບຕິດທີ່ເກີດຂຶ້ນໃໝ່ ເຊັ່ນ: ນ້ຳໃບກະທ້ອມ, ກາເຟເຕັ້ນ, ຢາສູບໄຟຟ້າ, ປຸ່ມເປົ້າອາຍແກັດກະຕຸ້ນປະສາດ ແລະ ອື່ນໆ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດແກ້ໄຂບັນຫາດັ່ງກ່າວ;

4. ສືບຕໍ່ປັບປຸງກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກ ຂອງພາກສ່ວນເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໂດຍສະເພາະສຸມໃສ່ຂັ້ນເມືອງ, ຂັ້ນບ້ານ ໃຫ້ຫຼາຍຂຶ້ນ ເພື່ອມີກຳລັງແຮງພຽງພໍ ໃນການປະຕິບັດການແກ້ໄຂບັນຫາຢາເສບຕິດ ຢູ່ຂັ້ນຮາກຖານ ໃຫ້ມີຄຸນນະພາບ ແລະມີປະສິດທິຜົນດີຂຶ້ນ. ພ້ອມນີ້, ເອົາໃຈໃສ່ສ້າງຄວາມເຂັ້ມແຂງດ້ານວິຊາສະເພາະໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ຕໍ່ການແກ້ໄຂຄະດີຢາເສບຕິດ ໃຫ້ມີຄວາມເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບຫຼາຍຂຶ້ນ;

5. ໃຫ້ສົມທົບ 3 ຂະແໜງການ (ປ້ອງກັນຄວາມສະຫງົບ, ສາທາລະນະສຸກ, ແຮງງານ-ສະຫວັດດີການສັງຄົມ) ມີການແບ່ງຄວາມຮັບຜິດຊອບກັນຢ່າງລະອຽດ, ຈະແຈ້ງ ໃນການບຳບັດ-ປິ່ນປົວ ຜູ້ທີ່ຖືກເຄາະຮ້າຍ ກໍຄືຜູ້ເສບຢາ ໃຫ້ມີຄຸນນະພາບ, ນັບທັງການຝຶກສີມືແຮງງານ, ສ້າງອາຊີບໃຫ້ເຂົາເຈົ້າເມື່ອເວລາອອກຈາກການບຳບັດປິ່ນປົວໄປແລ້ວ ໃຫ້ມີວຽກເຮັດງານທຳ, ບໍ່ກັບໄປຫຍຸ້ງກ່ຽວກັບຢາເສບຕິດອີກ; ນັບທັງການຄົ້ນຄວ້າວາງມາດຕະການແກ້ໄຂໃນໄລຍະຍາວ ກ່ຽວກັບການສ້າງອາຊີບທີ່ໝັ້ນຄົງ, ສ້າງວຽກເຮັດງານທຳໃຫ້ຊາຍໜຸ່ມ ແລະ ຍິງໜຸ່ມ ໃນສັງຄົມໃຫ້ຫຼາຍຂຶ້ນ;

6. ກະຊວງປ້ອງກັນຄວາມສະຫງົບແລະພາກສ່ວນທີ່ກ່ຽວຂ້ອງຊອກຫາທາງອອກ ແລະ ວິທີການແກ້ໄຂບັນຫາຄວາມແອອັດ ຂອງຜູ້ຕ້ອງຫາຢູ່ສະຖານທີ່ຄຸມຂັງຊົ່ວຄາວຢູ່ຂັ້ນເມືອງ, ຂັ້ນແຂວງ ແລະ ສົມທົບກັບຂະແໜງສາທາລະນະສຸກ ໃນການປະຕິບັດນະໂຍບາຍດ້ານມະນຸດສະທຳຕໍ່ຜູ້ຖືກຕ້ອງຫາ, ນັກໂທດ ໃນຄະດີຢາເສບຕິດ ແລະ ຄະດີອື່ນໆ ໃຫ້ເຂົາເຈົ້າໄດ້ຮັບການປິ່ນປົວສຸຂະພາບໃນເວລາເຈັບເປັນ; ເພື່ອແກ້ໄຂຄວາມແອອັດໃນສະຖານທີ່ກັກຂັງ ຢູ່ທ້ອງຖິ່ນຕ່າງໆ ແລະ ປັບປຸງເງື່ອນໄຂດຳລົງຊີວິດຂອງຜູ້ຖືກຫານັ້ນ, ລັດຖະບານມີແຜນການສະໜອງງົບປະມານທີ່ຈຳເປັນ ໃຫ້ແກ່ຂະແໜງການກ່ຽວຂ້ອງຕາມຄວາມເໝາະສົມ;

7. ສືບຕໍ່ເພີ່ມທະວີໃນການຮ່ວມມືກັບສາກົນ ເພື່ອດູດດຶງເອົາການສະໜັບສະໜູນ, ຊ່ວຍເຫຼືອທາງດ້ານເຕັກນິກ, ວິຊາການ, ແລກປ່ຽນຂໍ້ມູນ-ຂ່າວສານ ແລະ ທຶນຮອນຈາກບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ;

ທັງໝົດທີ່ກ່າວມານັ້ນ, ແມ່ນຜົນຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃນການຄົ້ນພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະເກືອບ 2 ປີຜ່ານມາ.

# ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂະຫຍາຍຕາໜ່າງການແລກປ່ຽນເງິນຕາ 11 ແຫ່ງ

ຕໍ່ຈາກສະບັບກ່ອນ...

- ໄດ້ຊຸກຍູ້ໃຫ້ທະນາຄານທຸລະກິດຂະຫຍາຍການບໍລິການແລກປ່ຽນເງິນຕາຂອງຕົນ ເພື່ອມາທົດແທນບັນດາຮ້ານແລກປ່ຽນຕົວແທນທີ່ໄດ້ຖືກຢຸດຕິເຊິ່ງມາຮອດປັດຈຸບັນມີທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຂະຫຍາຍຕາໜ່າງການແລກປ່ຽນເງິນຕາ 11 ແຫ່ງ ແລະ ຂະຫຍາຍໂມງບໍລິການຢູ່ບາງຫ້ອງແລກປ່ຽນເພື່ອໃຫ້ສອດຄ່ອງກັບຈຸດພິເສດຂອງທີ່ຕັ້ງ ເປັນຕົ້ນ ສະໜາມບິນສາກົນ, ດ່ານຊາຍແດນ, ເຂດຕະຫຼາດ, ເຂດຊຸມຊົນ, ໃນຂະນະທີ່ທະນາຄານທຸລະກິດຈຳນວນໜຶ່ງກຳລັງກະກຽມລະບຽບການພາຍໃນ, ລະບົບໄອທີ ແລະ ເງື່ອນໄຂຕ່າງໆ ເພື່ອຂະຫຍາຍໜ່ວຍແລກປ່ຽນເງິນຕາ. ນອກນັ້ນ, ຍັງມີທະນາຄານທຸລະກິດ 2 ແຫ່ງ ພວມຢູ່ໃນຂັ້ນຕອນພັດທະນາລະບົບບໍລິການຊື້-ຂາຍເງິນຕາລູກຄ້າດ້ວຍກັນຜ່ານລະບົບລະຫວ່າງ Internet ແລະ ໂທລະສັບມືຖື (Foriegn Exchange Trading Platform) ເຊິ່ງຄາດວ່າຈະພ້ອມເປີດໃຫ້ການບໍລິການໃນໄວໆນີ້;

- ໃນໄລຍະ 6 ເດືອນຕົ້ນປີ 2003 ນີ້, ທຫລ ໄດ້ລົງເລິກເຮັດວຽກກັບບັນດາບໍລິສັດສົ່ງອອກສິນຄ້າ ປະມານ 70 ບໍລິສັດ ຈາກຂະແໜງການໄຟຟ້າ, ບໍ່ແຮ່, ກະສິກຳ-ລ້ຽງສັດ, ເຄື່ອງບໍລິໂພກ, ອຸປະກອນກົນຈັກ, ອຸປະກອນໄຟຟ້າ, ເຍື່ອໄມ້, ເຈ້ຍ, ພາລາສະຕິກ, ແກ້ວ, ຕັດຫຍິບ ແລະ ເກີບ ເພື່ອສຶກສາສະພາບການຜະລິດ, ການຊອກຫາ ແລະ ນຳໃຊ້ແຫຼ່ງທຶນ, ແລະ ການສົ່ງອອກ ເພື່ອຊຸກຍູ້ບັນດາບໍລິສັດດັ່ງກ່າວ ນຳແຫຼ່ງລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກເຂົ້າມາ ສປປ ລາວ. ພ້ອມທັງໄລ່ລຽງຕົວເລກກະແສເງິນຕາ ໂດຍອີງໃສ່ຈຸດພິເສດຂອງການສົ່ງອອກຂອງແຕ່ລະຂະແໜງການ ເປັນຕົ້ນການຫັກຕາມສັນຍາສຳປະທານ (CA), ພັນທະກູ້ຢືມ, ພັນທະກັບບໍລິສັດແມ່ ແລະ ອື່ນໆ ຂອງແຕ່ລະຂະແໜງການ ເຫັນວ່າ: ໃນປີ 2022 ມູນຄ່າການສົ່ງອອກທັງໝົດ ມີ 8.198 ລ້ານໂດລາ ໃນນີ້, ເງິນຕາທີ່ຄວນໄດ້ຮັບທີ່ບັນທຶກຜ່ານລະບົບພາສີ ແມ່ນ 5.942 ລ້ານ



ໂດລາ ກວມເອົາ 72% ຂອງມູນຄ່າສົ່ງອອກທັງໝົດ, ແຕ່ຈຳນວນເງິນຕາທີ່ໂອນເຂົ້າມາ ສປປ ລາວ ຕົວຈິງຜ່ານລະບົບທະນາຄານ ພັດມີພຽງແຕ່ 2.780 ລ້ານໂດລາ ກວມເອົາ 46% ຂອງເງິນຕາຕົວຈິງທີ່ຄວນໄດ້ຮັບ.

ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດບັນດາຄາດໝາຍດ້ານເງິນຕາ: ຜ່ານການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການດ້ານເງິນຕາຕ່າງໆ ໃນໄລຍະ 6 ເດືອນຕົ້ນປີ 2023 ຂອງ ທຫລ ສາມາດສັງລວມຜົນໄດ້ຮັບ ດັ່ງນີ້:

- ອັດຕາເງິນເຟີ້ ສະເລ່ຍ 6 ເດືອນຕົ້ນປີ ຢູ່ໃນລະດັບ 38,06%. ມາຮອດປັດຈຸບັນ ເຫັນວ່າສະພາບເງິນເຟີ້ ມີທ່າອ່ຽງຫຼຸດລົງ ຈາກລະດັບສູງສຸດ 41,26% ໃນເດືອນກຸມພາ 2023 ມາເປັນ 28,64% ໃນເດືອນມິຖຸນາ;

- ປະລິມານເງິນ M2 ຮອດທ້າຍເດືອນ 5/2023 ການຂະຫຍາຍຕົວຂອງ M2 ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ແມ່ນຢູ່ໃນລະດັບ 26% ແຕ່ຖ້າທຽບໃສ່ທ້າຍປີ 2022 ແມ່ນຂະຫຍາຍຕົວໃນລະດັບ 7,87%. ຄາດວ່າຮອດທ້າຍເດືອນ 6 ຈະຂະຫຍາຍຕົວໃນລະດັບປະມານ 27% ຫຼື ເພີ່ມຂຶ້ນ 1% ຈາກເດືອນ 5 (ມະຕິສະພາ: ຂະຫຍາຍຕົວບໍ່ເກີນ 26% ທຽບໃສ່ປີຜ່ານມາ);

- ອັດຕາແລກປ່ຽນ ສະເລ່ຍໃນເດືອນ 6/2023 ທຽບໃສ່ທ້າຍປີ 2022 ເຫັນວ່າເງິນກີບມີທ່າອ່ຽງອ່ອນຄ່າ ດັ່ງນີ້:

+ ເງິນກີບ ທຽບເງິນໂດລາ ຂອງລະບົບທະນາຄານ ອ່ອນຄ່າ 5,8% (ຈາກ 17.312 ກີບ ມາເປັນ 18.390 ກີບ/ໂດລາ);

+ ເງິນກີບ ທຽບ ເງິນບາດ ຂອງລະບົບທະນາຄານ ອ່ອນຄ່າ 8,3% (ຈາກ 502 ກີບ ມາເປັນ 548 ກີບ/ບາດ);

+ ສ່ວນຕ່າງອັດຕາແລກປ່ຽນ ລະຫວ່າງ ທະນາຄານທຸລະກິດ ແລະ ຕະຫຼາດ ໃນໄລຍະຕົ້ນປີ ຫາເດືອນ 4/2023 ໂດຍລວມແມ່ນບໍ່ແຕກຕ່າງກັນຫຼາຍ ສະເລ່ຍຕ່ຳກວ່າ 2%, ນັບແຕ່ເດືອນ 5/2013 ເປັນຕົ້ນມາ ເຫັນວ່າສ່ວນຕ່າງອັດຕາແລກປ່ຽນເພີ່ມຂຶ້ນສູງເກີນ 2%;

- ລາຍຮັບຈາກການສົ່ງອອກ ໃນໄລຍະ 5 ເດືອນຕົ້ນປີກະແສລາຍຮັບເງິນຕາທີ່ໂອນເຂົ້າມາຜ່ານລະບົບທະນາຄານປະຕິບັດໄດ້ 1,228 ລ້ານໂດລາ ກວມເອົາ 35% ຂອງມູນຄ່າການສົ່ງອອກທັງໝົດຜ່ານລະບົບພາສີ (3,447 ລ້ານໂດລາ) ຄາດວ່າໃນ 6 ເດືອນຕົ້ນປີຈະປະຕິບັດໄດ້ 36% ຂອງມູນຄ່າການສົ່ງອອກທັງໝົດ;

- ຄັງສຳຮອງເງິນຕາຕ່າງປະເທດ ຮອດທ້າຍເດືອນ 5/2023 ຢູ່ໃນລະດັບ 1.439 ລ້ານໂດລາ, ກຸ້ມການນຳເຂົ້າໄດ້ 4,03 ເດືອນ ແລະ ຄາດວ່າຮອດທ້າຍເດືອນ 6 ຈະສາມາດກຸ້ມການນຳເຂົ້າໄດ້ບໍ່ຫຼຸດ 4 ເດືອນ;

- ຍອດເຫຼືອເງິນຝາກຂອງ ທທກ ຮອດທ້າຍເດືອນ 5/2023 ກວມເອົາ 84% ຂອງ GDP ແລະ ຄາດວ່າຮອດທ້າຍເດືອນ 6 ຈະຢູ່ໃນລະດັບປະມານ 85% ຂອງ GDP;

- ຍອດເຫຼືອສິນເຊື່ອຂອງຂະແໜງການທະນາຄານ ຮອດທ້າຍເດືອນ 5/2023 ກວມເອົາ 57% ຂອງ GDP ແລະ ຄາດວ່າຮອດທ້າຍເດືອນ 6 ຈະຢູ່ໃນລະດັບປະມານ 58% ຂອງ GDP;

- ອັດຕາສ່ວນໜີ້ NPLs ຮອດທ້າຍເດືອນ 5/2023 ຢູ່ໃນລະດັບ 2,12%, ຄາດວ່າຮອດທ້າຍເດືອນ 6 ຈະຢູ່ໃນລະດັບດຽວກັນກັບເດືອນ 5.

ສຳລັບທິດທາງ ແລະ ມາດຕະການແຜນເງິນຕາ 6 ເດືອນທ້າຍປີ 2023: ທຫລ ຈະສູ້ຊົນ ແລະ ດຳເນີນມາດຕະການດ້ານເງິນຕາຕ່າງໆ ດັ່ງລຸ່ມນີ້:

1. ການດຳເນີນນະໂຍບາຍເງິນຕາ

- ສືບຕໍ່ດຳເນີນນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມຫຼາຍຂຶ້ນ ແນ່ໃສ່ຫຼຸດຜ່ອນຄວາມຕ້ອງການເງິນຕາຕ່າງປະເທດໃນສັງຄົມລົງ ເພື່ອຊ່ວຍປະຄັບປະຄອງບໍ່ສ້າງແຮງກົດດັນເຮັດໃຫ້ເງິນກີບອ່ອນຄ່າ, ໃນນີ້ ທຫລ ຈະສືບຕໍ່ຮັກສາອັດຕາດອກເບ້ຍພື້ນຖານ ແລະ ອັດຕາສ່ວນເງິນແຮຝາກບັງຄັບໄວ້ໃນລະດັບເທົ່າເດີມ ແລະ ພິຈາລະນາປັບ ຖ້າເຫັນວ່າຈຳເປັນ;

- ພິຈາລະນາ ອອກພັນທະບັດ ທຫລ ເພື່ອຮັກສາຍອດພັນທະບັດ ທຫລ ໃຫ້ຢູ່ໃນລະດັບ 10,000 ຕື້ກີບ ເພື່ອຄວບຄຸມປະລິມານເງິນ ໃຫ້ຂະຫຍາຍຕົວຕາມທີ່ສະພາຮັບຮອງ ແລະ ບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້;

- ສ້າງເງື່ອນໄຂສະພາບແວດລ້ອມໃຫ້ມີເງິນຕາຕ່າງປະເທດສະໜອງເຂົ້າລະບົບເສດຖະກິດໃຫ້ຫຼາຍຂຶ້ນ;

- ທົບທວນຄືນນະໂຍບາຍອັດຕາດອກເບ້ຍເງິນຝາກສຳລັບສະກຸນເງິນກີບ ແລະ ເງິນຕາຕ່າງປະເທດຂອງລະບົບທະນາຄານ ເພື່ອຫຼຸດຜ່ອນແຮງກະຕຸ້ນຄວາມຕ້ອງການເງິນຕາຕ່າງປະເທດທີ່ບໍ່ຈຳເປັນ;

- ສ້າງຄວາມເຂັ້ມແຂງໃຫ້ແກ່ຄັງສຳຮອງເງິນຕາຕ່າງປະເທດ ໂດຍການດຳເນີນມາດຕະການຢ່າງມີຈຸດສຸມຫຼາຍຂຶ້ນດ້ວຍການປັບປຸງລະບົບການຄຸ້ມຄອງຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ, ນັກລົງທຶນ. ພ້ອມທັງປັບປຸງໂຄງສ້າງຄັງສຳຮອງເງິນຕາຕ່າງປະເທດ ໃຫ້ແທດເໝາະກັບສະພາບການຄ້າ-ການລົງທຶນ ຂອງ ສປປ ລາວ.

- ສືບຕໍ່ດຳເນີນນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ແລະ ຈະຄົ້ນຄວ້າດັດປັບອັດຕາແລກປ່ຽນ ສຳລັບທະນາຄານທຸລະກິດໃຫ້ມີການເຄື່ອນໄຫວຄ່ອງຕົວຂຶ້ນ, ພ້ອມທັງດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້າສິນຄ້າບູລິມະສິດທີ່ຈຳເປັນ;

2. ການຄຸ້ມຄອງເງິນຕາຕ່າງປະເທດ

- ສືບຕໍ່ໃຫ້ສຳເລັດບັນດານິຕິກຳລຸ່ມກົດໝາຍ ຄຸ້ມຄອງເງິນຕາຕ່າງປະເທດ ໂດຍເລັ່ງການຈັດຕັ້ງຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ເຂົ້າສູ່ການຈັດຕັ້ງປະຕິບັດໂດຍໄວ ພ້ອມທັງຈະເລັ່ງດຳເນີນການອອກຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຕິດພັນກັບການລົງທຶນໂດຍກົງລະຫວ່າງປະເທດ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ເຂດເສດຖະກິດພິເສດດອກງິ້ວຄຳ ແລະ ບໍ່ເຕັນແດນງາມ;

- ສືບຕໍ່ລົງເລິກເຮັດວຽກ ແລະ ເຈລະຈາກັບບັນດາບໍລິສັດສົ່ງອອກໃນແຕ່ລະຂະແໜງການຈຸດສຸມ ແນໃສ່ບໍລິສັດທີ່ມີມູນຄ່າສົ່ງອອກສູງ ແຕ່ນຳລາຍຮັບເງິນຕາເຂົ້າມາ ສປປ ລາວ ຍັງຕ່ຳ, ພ້ອມທັງສົມທົບກັບກະຊວງການເງິນ ໄລ່ລຽງມູນຄ່າການນຳລາຍຮັບຕົວຈິງຈາກການສົ່ງອອກສິນຄ້າເຂົ້າມາ ແລະ ຊຸກຍູ້ໃຫ້ບໍລິສັດ ຫັນມາໃຊ້ບັນຊີວິສາຫະກິດ ເພື່ອຮອງຮັບການຊຳລະຄ່າສິນຄ້າສົ່ງອອກ, ຫຼີກລ່ຽງການນຳໃຊ້ບັນຊີບຸກຄົນ; ສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ຈັດຕັ້ງປະຕິບັດການຂຶ້ນທະບຽນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ໂດຍສະເພາະການກຳນົດລະຫັດຜູ້ນຳເຂົ້າ-ສົ່ງອອກ. ສ່ວນການຂຶ້ນທະບຽນຫົວໜ່ວຍສົ່ງອອກ-ນຳເຂົ້າການບໍລິການ ນຳ ທຫລ ແລະ ການສ້າງຖານຂໍ້ມູນການລົງທະບຽນໃຫ້ເຊື່ອມຈອດລະຫວ່າງກັນ;

- ສ້າງຖານເກັບກຳຂໍ້ມູນຜູ້ນຳເຂົ້າ-ສົ່ງອອກລາຍໃຫຍ່ທີ່ມີມູນຄ່າທຸລະກິດ 10 ລ້ານໂດລາ/ປີ ຂຶ້ນໄປ ທີ່ຈະປະກອບມີຂໍ້ມູນລາຍລະອຽດການດຳເນີນທຸລະກິດ, ການຊຳລະ ແລະ ຮັບຊຳລະກັບຕ່າງປະເທດໃຫ້ໄດ້ຢ່າງໜ້ອຍ 100 ບໍລິສັດຂະໜາດໃຫຍ່ ທີ່ກວມເອົາມູນຄ່າການສົ່ງອອກຫຼາຍກວ່າ 70% ຂອງການສົ່ງອອກທັງໝົດ;

- ສືບຕໍ່ສົມທົບກັບບັນດາຂະແໜງການກ່ຽວຂ້ອງ (ຂະແໜງການເງິນ, ອຸດສາຫະກຳ ແລະ ການຄ້າ) ເພື່ອຄົ້ນຄວ້າເຊື່ອມຖານຂໍ້ມູນການນຳເຂົ້າ-ສົ່ງອອກ ທີ່ແຕ່ລະຂະແໜງການຄຸ້ມຄອງນັບຕັ້ງແຕ່ຂັ້ນຕອນການຂຶ້ນທະບຽນຜູ້ນຳເຂົ້າ-ສົ່ງອອກ, ການອະນຸຍາດສົ່ງອອກ-ນຳເຂົ້າຂອງແຕ່ລະຂະແໜງການຕໍ່ກັບສິນຄ້າຄວບຄຸມ, ການແຈ້ງພາສີສົ່ງອອກ-ນຳເຂົ້າຂອງແຕ່ລະຂະແໜງການຕໍ່ກັບສິນຄ້າຄວບຄຸມ, ການແຈ້ງພາສີສົ່ງອອກ-ນຳເຂົ້າດ້ວຍລະບົບຄຸ້ມຄອງພາສີ (ASYCUDA & Lao Natioanal Single Window) ເຊິ່ງລະບົບດັ່ງກ່າວຈະເຊື່ອມກັບຖານຂໍ້ມູນຂອງບັນດາທະນາຄານທຸລະກິດຜ່ານຖານຂໍ້ມູນຂອງ ທຫລ;

- ຊຸກຍູ້ ທທກ ຂະຫຍາຍໜ່ວຍບໍລິການແລກປ່ຽນເງິນຕາຂອງຕົນໃຫ້ຫຼາຍຂຶ້ນ ຢູ່ຕາມສະຖານທີ່ໂຮງແຮມ, ສະໜາມບິນສາກົນ, ດ່ານຊາຍແດນ, ທ່າບົກ ແລະ ສະຖານທີ່ອື່ນໆຕາມການກຳນົດຂອງ ທຫລ, ຕິດຕາມກວດກາການໃຫ້ບໍລິການແລກປ່ຽນເງິນຕາຕ່າງປະເທດຜ່ານເຄື່ອງມືອີເລັກໂຕຣນິກໂດຍທະນາຄານທຸລະກິດ;

- ສືບຕໍ່ປະສານສົມທົບເຈົ້າໜ້າທີ່ຕຳຫຼວດເສດຖະກິດ (ປກສ) ລົງກວດກາເປົ້າໝາຍບຸກຄົນ, ນິຕິບຸກຄົນ ທີ່ສ້າງຄວາມປັ່ນປ່ວນອັດຕາແລກປ່ຽນໃຫ້ເງິນກີບອ່ອນຄ່າເພື່ອເກງກຳໄລ, ການໃຫ້ບໍລິການໂອນຊຳລະຂ້າມແດນທີ່ບໍ່ໄດ້ຮັບອະນຸຍາດ ແລະ ດຳເນີນມາດຕະການຢ່າງເຂັ້ມງວດ ຕໍ່ຜູ້ທີ່ເຄື່ອນໄຫວແລກປ່ຽນເງິນຕາຜິດກົດໝາຍ, ພ້ອມທັງສົມທົບກັບບັນດາຂະແໜງການອອກແຈ້ງການປະກາດຕິດລາຄາສິນຄ້າ ແລະ ບໍລິການເປັນເງິນກີບ.



# ຍ້ອງຍໍຜົນງານຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ

(ສພຊ) ໜ່ວຍພັກຮາກຖານສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ຈັດພິທີມອບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ແລະ ພິທີຍ້ອງຍໍຜົນງານ 5 ປີ ຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ (2016-2020) ທີ່ຫ້ອງວ່າການນະຄອນຫຼວງວຽງຈັນ (ນວ) ໃນເດືອນມິຖຸນາຜ່ານມາ ໂດຍການເປັນປະທານຂອງສະຫາຍ ອານຸພາບ ຕຸນາລົມ ເລຂາທິການສູນກາງພັກ, ເລຂາຄະນະພັກ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ; ມີຄະນະໜ່ວຍພັກ, ຮອງຄະນະປະທານ, ສະມາຊິກພັກ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ພິທີດັ່ງກ່າວ, ສະຫາຍ ນະຄະເສນ ສີຫາລາດ ຮອງເລຂາໜ່ວຍພັກ, ເລຂາທິການສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ຜ່ານບົດສະຫຼຸບໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ແລະ ທິດທາງແຜນການປີ 2023 ໃຫ້ຮູ້ວ່າ: ໃນໄລຍະຜ່ານມາ ໜ່ວຍພັກໄດ້ເອົາໃຈໃສ່ຊີ້ນຳບັນດາຄະນະກຳມະການຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ສົມທົບກັບອົງການປົກຄອງ ນວ ເພື່ອນຳນິຕິກຳເຂົ້າພິຈາລະນາໃນກອງປະຊຸມຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຈຳນວນ 4 ສະບັບ, ໄດ້ອອກນິຕິກຳພາຍໃນຂອງຄະນະປະຈຳສະພາປະຊາຊົນ 12 ສະບັບ, ສົມທົບກັບ



ອົງການປົກຄອງ ນວ ຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ, ເຂົ້າຮ່ວມກອງປະຊຸມທາບທາມຄຳຄິດເຫັນ ແລະ ຄົ້ນຄວ້າປະກອບຄຳເຫັນໃສ່ບັນດາກົດໝາຍສະບັບປັບປຸງ ແລະ ຮ່າງກົດໝາຍ ທີ່ສ້າງໃໝ່ 11 ສະບັບ, ໄດ້ພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນທີ່ນຳເຂົ້າໃນພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 3 ແລະ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຈຳນວນ 15 ຫົວຂໍ້ ແລະ ໄດ້ອອກເປັນມະຕິກອງປະຊຸມເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງ ນວ, ວຽກງານຂີງເຂດຕຸລາການ, ວຽກງານພາຍໃນຂອງສະພາປະຊາຊົນ 22 ເນື້ອໃນ ແລະ ໄດ້ອອກເປັນມະຕິ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ເອົາໃຈໃສ່ຄົ້ນຄວ້າພິຈາລະນາຄຳຮ້ອງຂໍຄວາມເປັນທຳ ແລະ ຄຳສະເໜີຂອງປະຊາຊົນ ໂດຍໄດ້ຮັບຄຳຮ້ອງຂໍຄວາມເປັນທຳທັງໝົດ 198 ເລື່ອງ ສາມາດຄົ້ນຄວ້າພິຈາລະນາແກ້ໄຂ ແລະ ນຳສົ່ງໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂ 140 ເລື່ອງ ເທົ່າກັບ 70% ຂອງຈຳນວນຄຳຮ້ອງທັງໝົດ, ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ 310 ຈຸດ ເທົ່າກັບ 98% ຂອງແຜນການ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 27.695 ຄົນ ແລະ ໄດ້ຮັບຄຳສະເໜີ 512 ຂໍ້.

ຜ່ານການສະຫຼຸບຕີລາຄາ ແລະ ປະເມີນຂະບວນການຮັກຊາດ ແລະ ພັດທະນາ ສາມາດສັງລວມການຍ້ອງຍໍຜົນງານ 5 ປີ (2016-2020) ໃຫ້ບຸກຄົນ ແລະ ໜ່ວຍພັກຄື: ປະເພດຫຼຽນໄຊແຮງງານຊັ້ນ I ມີ 3 ຫຼຽນ, ປະເພດຫຼຽນໄຊແຮງງານ ຊັ້ນ II ມີ 7 ຫຼຽນ ແລະ ຫຼຽນໄຊແຮງງານຊັ້ນ III ມີ 17 ຫຼຽນ, ຫຼຽນກາແຮງງານ 7 ຫຼຽນ ໃບຍ້ອງຍໍລັດຖະບານ 6 ໃບ ແລະ ໃບຍ້ອງຍໍເຈົ້າຄອງ ນວ 2 ໃບ.

# ເປັນຫຍັງເງິນກີບຈຶ່ງອ່ອນຄ່າ

ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ນາງ ວາລີ ເວດສະພົງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ເຊິ່ງມີເນື້ອໃນດັ່ງຕໍ່ໄປນີ້:



ຂ້າພະເຈົ້າເຄີຍສະເໜີມີຄຳເຫັນວ່າການອອກພັນທະບັດ ຢາກຖາມລັດຖະບານຄືນວ່າ ເຮົາໄດ້ປະເມີນຄືນ ຫຼືຍັງ ທີ່ເຮົາອອກພັນທະບັດນີ້ຕອບໂຈດ ຫຼື ຍັງ? ເປັນຫຍັງຈຶ່ງວ່າຈັ່ງຊັ້ນ ປະລິມານ M2 ປັດຈຸບັນນີ້ຢູ່ໃນບ້ານເຮົານີ້ ເຮົາໃຊ້ 4 ສະກຸນເງິນ ນັ້ນໝາຍເຖິງວ່າເຮົາບໍ່ໄດ້ໃຊ້ແຕ່ເງິນກີບ ເຮົາໃຊ້ເງິນ 3, 4 ສະກຸນ ເພາະສະນັ້ນ ເວລາດູດເງິນກີບເຂົ້າໄປ ໃນເບື້ອງຕົ້ນອາດຈະໄດ້ຜົນດີໃນແງ່ຂອງຈິດຕະສາດແຕ່ຫຼັງຈາກນັ້ນເຮົາຈະມາໃຊ້ເກມເກົ່າມັນບໍ່ໄດ້ ຕາມໃນທັດສະນະຂອງຂ້າພະເຈົ້າກໍບໍ່ໄດ້ບອກວ່າໃຜຜິດໃຜຖືກ ອັນນີ້ຕ້ອງຕັ້ງທີມມາສົນທະນາຫາລືກັນ ວ່າການແກ້ໄຂບັນຫານີ້ເຮົາຢາກສະເໜີແບບນີ້ ທາງພາກທຸລະກິດເຮົາຕາງໜ້າສະພາການຄ້າ, ສະມາຄົມທະນາຄານຕ່າງໆເຮົາມາລະດົມສະໝອງກັນ ຕອນນີ້ຂ້າພະເຈົ້າຄິດວ່າແມ່ນແກ້ເກມບໍ່ແມ່ນແກ້ທິດສະດີ ເພາະວ່າເຮົາບໍ່ໄດ້ເຮັດຕາມທິດສະດີລະບົບກົດໝາຍເຮົາກໍບໍ່ໄດ້ໄປຕາມ ອັນນີ້ກໍເປັນໂຕໜຶ່ງທີ່ຂ້າພະເຈົ້າຢາກຕັ້ງຂໍ້ສັງເກດວ່າປະລິມານ M2 ດູດເຂົ້າໄປຄືນຝາກເງິນກີບຢູ່ທະນາຄານກໍຕ້ອງໂຍກເງິນຈາກທະນາຄານໄປຫາຊື້ພັນທະບັດ ເພາະມັນໄດ້ຫຼາຍກວ່າ ສະນັ້ນ ເຮັດໃຫ້ລະບົບເງິນກີບຢູ່ໃນລະບົບທະນາຄານຂາດ ບາດນີ້ຕັ້ງຄຳຖາມວ່າເປັນຫຍັງຂາດແລ້ວເປັນຫຍັງເງິນກີບບໍ່ມີຄ່າເຫັນບໍ່ ເພາະວ່າມີແຕ່ອ້າງເຖິງການສະໜອງ ແລະ ຕ້ອງການ ແຕ່ໃນຄວາມຈິງເປັນຫຍັງເງິນກີບຈຶ່ງບໍ່ມີຄ່າ ກໍເນື່ອງຈາກວ່າເຮົາໃຊ້ຫຼາຍສະກຸນ ເພາະສະນັ້ນບໍ່ມີເງິນກີບຂ້ອຍກໍໃຊ້ເງິນຕາໄດ້ເຮົາບໍ່ໄດ້ຜິດກົດໝາຍແມ່ນເນາະໃຊ້ເງິນຕາ, ເງິນບາດ, ເງິນໂດລາຢູ່ໃນຕະຫຼາດບໍ່ໄດ້ຜິດກົດໝາຍ ນີ້ແຫຼະເປັນຫຍັງເງິນກີບເຮົາບໍ່ມີຄ່າເພາະວ່າພວກເຮົາບໍ່ໄດ້ໃຊ້ເງິນກີບສະກຸນດຽວ ແລະ ເຮົາບໍ່ສາມາດຄວບຄຸມໄດ້ໝົດທຸກພາກສ່ວນທີ່ໃຊ້ເງິນກີບ ແມ່ນກະທັ້ງມີໃບແຈ້ງການອອກມາໃຫ້ເກັບຄ່າໄຟຟ້າເປັນເງິນຕາອີກ ນັ້ນແມ່ນກຳລັງສ່ວນໂຕຂ້າພະເຈົ້າຄິດວ່າເຮົາທຳລາຍສະກຸນເງິນເຮົາເອງ ເຮົາແຮ່ງເອົາເງິນກີບໝົດທຸກຄົນຕ້ອງການເງິນກີບ ອັນນີ້ແມ່ນຢາກຕັ້ງຂໍ້ສັງເກດໃນການດູດ M2 ທີ່ເປັນສະກຸນເງິນກີບ ແຕ່ຢັ້ງຢືນວ່າສະກຸນເງິນໂດລາ, ສະກຸນເງິນຕ່າງປະເທດຢູ່ນອກລະບົບນີ້ຫຼາຍອີ່ຫຼີເນາະ ຂ້າພະເຈົ້າກ່ອນມີຄຳເຫັນຂ້າພະເຈົ້າຍົກຫູຫາບັນດາທະນາຄານ ທີ່ຢູ່ໃນບັນດາເຄືອຂ່າຍຂອງບັນດາທະນາຄານທຸລະກິດ ເຂົາເຈົ້າກໍບອກວ່າເງິນຕາຫຼາຍອີ່ຫຼີຢູ່ນອກລະບົບ ເຮົາຊິເຮັດແນວໃດດຶງເຂົ້າມາ ອັນນີ້ຕ້ອງມານັ່ງລົມກັນ, ຂ້າພະເຈົ້າກໍບໍ່ໄດ້ບອກວ່າຄຳເຫັນຖືກ ຫຼື ຜິດຕ້ອງມານັ່ງສົນທະນາກັນ ແນວໃດກໍຂໍສະເໜີວ່າຕ້ອງໃຫ້ໄດ້ມີການຫາລືກັນ ທ່ານປະທານວ່າເຮົາຊິອອກທາງນີ້ມັນມີຜົນກະທົບຫຍັງ ບໍ່ແຕກຕ່າງຫຍັງກັບທ່ານ ສສຊ ທ່ານໜຶ່ງວ່າມັນມີຂະບວນການທີ່ຕັ້ງລະບົບປັ່ນເງິນຕ່າງໆນີ້ເປັນຂໍ້ມູນທີ່ເຮົາຕ້ອງເອົາມາຄິດເອົາມາຫງ່ຳເນາະ ເພາະວ່າຂ້າພະເຈົ້າຍັງຢັ້ງຢືນວ່າພວກເຮົາຢູ່ນອກລະບົບກັນມາດົນ ພໍທະນາຄານຈະປັບເຂົ້າລະບົບປຶບແນ່ນອນຕ້ອງກະທົບ ແມ່ນແຕ່ພວກເຮົາເອງນີ້ນ່າກໍຕ້ອງໃຫ້ການຮ່ວມມືໃນມາດຕະການທີ່ເຮົາຕ້ອງໃຊ້ເງິນກີບ ເພາະເຮົາມີແຕ່ຄິດວ່າເຮົາຈະກະທົບຂ້າມໄປປະເທດເພື່ອນບ້ານລະເຮົາຊິຫຍຸ້ງຍາກອັນນີ້ອັນນັ້ນທຸກຄົນຕ້ອງໄດ້ຊ່ວຍກັນອັນນີ້ເນາະ ປະເດັນໜຶ່ງຂ້າພະເຈົ້າກໍໄດ້ມີເວລາລົງໄປຫາປະຊາຊົນໄດ້ລະດົມຊ່ວຍທະນາຄານຄືກັນ ຍົກຕົວຢ່າງວ່າຢູ່ປະເທດເພື່ອນບ້ານນີ້ເຮົາເອົາໄປແມ້ເງິນໂດລາ ສະກຸນອື່ນໄປແລກນີ້ບັກຍາກໆ ຕ້ອງມີພາດສະປອດຕ້ອງມີຫຍັງອີກກະທີກນີກນອງ ແຕ່ບາດໄປຈ່າຍນີ້ເຂົາບໍ່ເອົາໃດ ແນວມັນຜິດກົດໝາຍ ນີ້ຄືຄຸນຄ່າຂອງເງິນທີ່ຂ້າພະເຈົ້າຢາກກັບມາເບິ່ງຢາກປະເມີນຄືນວ່າການອອກພັນທະບັດນີ້ໃນການອອກມາດຕະການມັນຕິດພັນກັບການໄປປັບເພີ່ມຄ່າອັດຕາສ່ວນເງິນແຮຝາກບັງຄັບທີ່ ທະນາຄານ ແຫ່ງ ສປປ ລາວ ທີ່ໄດ້ລາຍງານວ່າ ຈາກ 5 ເປັນ 5,5 ແມ່ນສະກຸນເງິນກີບ, ຈາກ 5 ເປັນ 8 ເປັນສະກຸນເງິນຕ່າງປະເທດ ນັ້ນຢາກບອກວ່າມັນໄປກະທົບລະບົບບັນດາທະນາຄານທຸລະກິດ ວ່າມັນເປັນເຂົາເອີ້ນວ່າຝາກປ່ອຍກູ້ ແລະ ກໍເປັນຜົນສະທ້ອນໄປນຳກັນ ເພາະສະນັ້ນ ທະນາຄານເອກະຊົນກໍບໍ່ຢາກດູດເງິນເຂົ້າ ເພາະວ່າດູດມັນກໍມີຄວາມສ່ຽງໃນອັດຕາເງິນກີບທີ່ຈະມາປ່ອຍກູ້ຕໍ່ ເພາະສະນັ້ນມັນກໍຈະກາຍເປັນຊ່ອງວ່າງ ໃນຊ່ວງໜຶ່ງທີ່ເຂົາຈະບໍ່ກ້າປ່ອຍເງິນດ້ວຍພາວະເສດຖະກິດຕອນນີ້ໃຜກະຢ້ານເປັນເງິນກູ້ເກັບຄືນບໍ່ໄດ້ ມັນກໍເລີຍກາຍເປັນວ່າລະບົບເສດຖະກິດເຮົາແມ່ນຝືດກັບເຝື້ໄປນຳກັນ ອັນນີ້ແມ່ນຂ້າພະເຈົ້າຢາກຕັ້ງຂໍ້ສັງເກດ ບາດນີ້ຂ້າພະເຈົ້າເຊື່ອວ່າມັນຈະມີວິທີການດູດເງິນຕາເຂົ້າລະບົບ ຕ້ອງໄດ້ມານັ່ງລົມກັນອັນນີ້ມັນເປັນເລື່ອງເຕັກນິກທີ່ຕ້ອງລົມຍາວພໍສົມຄວນ.

ອີກໂຕທີ 3 ຢາກໃຫ້ເບິ່ງຄືນວ່າການຊື້-ຂາຍເງິນຄຣິບໂຕເຄີເຣນຊີ (ສະກຸນເງິນດິຈິຕອນ) ໂຕນີ້ແມ່ນເປັນຫ່ວງຫຼາຍເປັນຫ່ວງແທ້ໆ ຢາກໃຫ້ທົບທວນຄືນວ່າເຮົາຊິໄດ້ຫຍັງຈາກໂຕນີ້ ຖ້າຜູ້ໃດຕິດຕາມຂ່າວແມ່ນໄດ້ມີການປັບໃໝ ອັນນີ້ມັນຕິດພັນກັບເງິນຄຣິບໂຕເຄີເຣນຊີ ອັນນີ້ຢາກໃຫ້ປະເມີນຄືນແທ້ໆເນາະວ່າມັນຈະມີຂໍ້ດີຂໍ້ເສຍແນວໃດ ຖ້າເຮົາຄຸມເກມບໍ່ໄດ້ແມ່ນມັນຈະໄປກັນໃຫຍ່ເລີຍໃນເລື່ອງຂອງເງິນຕາ ເພາະວ່າໂຕນີ້ກໍເປັນທາງອອກໜຶ່ງທີ່ຖ້າເຮົາມາຊື້-ຂາຍນີ້ນ່າ ເຮົາຈະຄຸມໄດ້ສໍ່າໃດ ອັນນີ້ຂ້າພະເຈົ້າຢາກຂໍຝາກ.

ສະນັ້ນ, ອີກໂຕໜຶ່ງແມ່ນຂ້າພະເຈົ້າວ່າປັດຈຸບັນນີ້ມີຫຼາຍຊ່ອງທາງທີ່ດູດເງິນຕາອອກການຊື້-ຂາຍຄຳກໍເຊັ່ນກັນ ຢາກຮູ້ວ່າເຮົາໄດ້ນຳເຂົ້າຄຳຫຼາຍສໍ່າໃດນັ້ນແມ່ນໃຫ້ໄປກວດຢູ່ເວັບໄຊສ໌ຮ້ານຄຳຂອງບໍລິສັດ ຂ້າພະເຈົ້າຂໍອະນຸຍາດຈື່ບໍ່ໄດ້ຊີສິ່ງໃຫ້ຕາມຫຼັງ ວ່າການສົ່ງຄຳເຂົ້າມານີ້ຫຼາຍປານໃດແລ້ວເງິນຕາເຮົາກໍອອກໄປຫຼາຍທໍ່ນັ້ນແລ້ວມັນສ້າງເສດຖະກິດບໍ່ ອັນນີ້ກໍແມ່ນການແລກປ່ຽນອີກແບບໜຶ່ງ ບາດນີ້ຢາກຂໍສະເໜີອີກວິທີໜຶ່ງວິທີແກ້ໄຂ ອີກໂຕໜຶ່ງແມ່ນມີເພສໜຶ່ງທີ່ເຂົາເຈົ້າບອກວ່າປະເທດລາວໃຊ້ເງິນຢວນ ລັດຖະບານຕ້ອງໄດ້ອອກມາແກ້ເພາະວ່າມັນສ້າງຄວາມເສຍຫາຍ, ມັນສ້າງຄວາມບໍ່ເຊື່ອໝັ້ນໃຫ້ສະກຸນເງິນກີບໂຕນີ້ແມ່ນເຮົາຢູ່ເສຍໆບໍ່ໄດ້ຕ້ອງໄດ້ອອກມາແກ້ວ່າບໍ່ແມ່ນຄວາມຈິງອັນນັ້ນອັນນີ້ ອັນນີ້ເຮົາມິດຢູ່ບໍ່ໄດ້ ຂ້າພະເຈົ້າຂໍສະເໜີນະໂຍບາຍລົດ EV ລົດໄຟຟ້າເຮົາຜະລິດໄຟຟ້າໄດ້ເອງເຮົາເປັນການທີ່ສົ່ງເສີມໄຟຟ້າໃນປະເທດສະນັ້ນນະໂຍບາຍທີ່ລັດຖະບານມີແລ້ວລົດໄຟຟ້ານີ້ນ່າຂໍໃຫ້ອັດເຕັມໆເລີຍ ໝາຍຄວາມວ່າເພື່ອຫຼຸດການນຳເຂົ້ານ້ຳມັນແລ້ວຊິເຮັດແນວໃດນັ້ນຕ້ອງໄດ້ມາລົມກັນອັນນີ້ຕ້ອງໄດ້ມາລົມກັນໃນການລົງທຶນຕ່າງໆຂ້າພະເຈົ້າໝັ້ນໃຈວ່າຢ່າງໜ້ອຍມັນກໍຊ່ວຍໃນການກົດດັນໃນເລື່ອງການໃຊ້ເງິນຕາ ສຸດທ້າຍແມ່ນການສົ່ງອອກທີ່ໄດ້ເງິນເຂົ້າແຕ່ 30% ຢາກໃຫ້ແຂງແຮງແທ້ໆວ່າສະພາໄດ້ອະນຸມັດໄປແລ້ວ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາແມ່ນເຈົ້າເຊັນສັນຍາໄປແລ້ວແຕ່ຊິໃຫ້ອີກຝ່າຍໜຶ່ງຕາຍໃນເລື່ອງທຸລະກິດໃນໂລກນີ້ເຂົາເຈົ້າບໍ່ເຮັດທ່ານປະທານ ເຮົາເຈລະຈາຄືນໄດ້ ໂດຍສະເພາະເຈລະຈາບັນດາແຮ່ທາດ ບັນດາອັນໃດທີ່ເຮົາໄດ້ປຽບເອີ້ນມາລົມກັນປ່ຽນເປັນເງິນກີບ.

# ສພຂ 2 ແຂວງ ສຳເລັດກອງປະຊຸມໃຫຍ່ໜ່ວຍຮາກຖານຊາວໜຸ່ມ ຄັ້ງທີ III

(ສພຊ) ສະພາປະຊາຊົນແຂວງ (ສພຂ) ຫົວພັນ ແລະ ວຽງຈັນ ໄດ້ສຳເລັດການດຳເນີນກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ຂອງໜ່ວຍຊາວໜຸ່ມ ສພຂ ຂອງຕົນ ເຊິ່ງໜ່ວຍຊາວໜຸ່ມ ສພຂ ຫົວພັນ ໄດ້ຈັດຂຶ້ນໃນວັນທີ 23 ມິຖຸນາ 2023 ທີ່ຫ້ອງປະຊຸມ ສພຂ ຫົວພັນ ພາຍໃຕ້ການເປັນປະທານຂອງສະຫາຍ ຄອນສະຫວັນ ຂັນທະວີໄຊ ເລຂາໜ່ວຍຊາວໜຸ່ມ ສພຂ; ເຂົ້າຮ່ວມມີສະຫາຍ ວິງເພັດ ບຸນມະນີ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານຊາວໜຸ່ມແຂວງ, ສະຫາຍ ສົມສັກ ດອນຈານິດ ກຳມະການພັກແຂວງ, ເລຂາໜ່ວຍພັກ, ຮອງປະທານ ສພຂ; ມີຜູ້ຕາງໜ້າຈາກໜ່ວຍຊາວໜຸ່ມອົງການພາຄີ ເປັນຕົ້ນແມ່ນຄະນະໜ່ວຍຊາວໜຸ່ມອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ ແລະ ກອງພັນ 19 ພ້ອມດ້ວຍສະມາຊິກຊາວໜຸ່ມພາຍໃນໜ່ວຍ ເຂົ້າຮ່ວມ 31 ສະຫາຍ ຍິງ 13 ສະຫາຍ.

ວາລະກອງປະຊຸມ, ຕາງໜ້າຄະນະໜ່ວຍຊາວໜຸ່ມ ສພຂ ໄດ້ຂຶ້ນຜ່ານຮ່າງບົດລາຍງານການເມືອງທັງສອງພາກ ພ້ອມທັງຜ່ານບົດສຳຫຼວດການນຳພາ-ຊີ້ນຳຂອງຄະນະໜ່ວຍຊຸດເກົ່າ ເຊິ່ງຍົກໃຫ້ເຫັນຜົນງານດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ສັງເກດຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານໃນໄລຍະ 5 ປີ ຜ່ານມາຢ່າງຖືກຕ້ອງ ແລະ ເລິກເຊິ່ງ ພ້ອມທັງກຳນົດທິດທາງໜ້າທີ່ວຽກງານໃນໄລຍະ 5 ປີຕໍ່ໜ້າ; ຈາກນັ້ນ, ສະມາຊິກຊາວໜຸ່ມໄດ້ພ້ອມກັນປະກອບຄຳຄິດເຫັນຢ່າງກົງໄປກົງມາ ແລະ ຮັບຮອງເອົາບົດລາຍງານການເມືອງທັງສອງພາກ ເພື່ອຈະໄດ້ພ້ອມກັນຈັດຕັ້ງປະຕິບັດຕາມແຜນການທີ່ວາງໄວ້.


ສພຂ ຫົວພັນ

ໂອກາດນີ້, ຄະນະບໍລິຫານງານຊາວໜຸ່ມແຂວງຍັງໄດ້ມອບໃບຍ້ອງຍໍຜົນງານ 5 ປີ ໃຫ້ກັບໜ່ວຍ ແລະ ສະມາຊິກພາຍໃນໜ່ວຍຊາວໜຸ່ມດັ່ງກ່າວ ພ້ອມທັງໄດ້ໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະໜ່ວຍຊາວໜຸ່ມຊຸດໃໝ່ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ຖືກຕ້ອງກັບມາດຖານເງື່ອນໄຂໄດ້ກຳນົດໄວ້ ເຊິ່ງມີຜູ້ສະໝັກ 7 ສະຫາຍ, ຄັດເລືອກເອົາ 5 ສະຫາຍ. ກອງປະຊຸມໃຫຍ່ ຄັ້ງທີ III ໄດ້ເລືອກເອົາສະຫາຍ ຕະວັນທອງ ພັດທະວົງ ເປັນເລຂາໜ່ວຍຊຸດໃໝ່, ສະຫາຍ ນາງ ສຸນິສາ ວິລະທັນ ເປັນຮອງເລຂາ ທັງເປັນປະທານກວດກາໜ່ວຍ, ສະຫາຍ ຄຳເພັງ ລາດທະວີຄຳ ເປັນຮອງເລຂາ, ສະຫາຍ ນາງ ວຽງສອນ ວົງພາສຸກ ແລະ ສະຫາຍ ນາງ ຄອນສີ ມາລີຈັນ ເປັນຄະນະ.

ຕອນທ້າຍ, ກອງປະຊຸມໄດ້ຮັບຟັງການໂອ້ລົມຂອງສະຫາຍ ວິງເພັດ ບຸນມະນີ ເຊິ່ງສະຫາຍໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ໜ່ວຍຊາວໜຸ່ມຍາດມາໄດ້ໃນໄລຍະ 5 ປີ ຜ່ານມາ ທັງໄດ້ເນັ້ນໜັກບາງບັນຫາສຳຄັນ ເປັນຕົ້ນແມ່ນເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກຊາວໜຸ່ມພາຍໃນໜ່ວຍ ຕ້ອງເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ຊ່ວຍເຫຼືອເຊິ່ງກັນແລະກັນ, ມີຄວາມເປັນເອກະພາບກັນ, ປັບປຸງວຽກງານການຕັ້ງເປັນແຕ່ລະໄລຍະໃຫ້ຖືກຕ້ອງ ເໝາະສົມ, ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດເວົ້າລວມ ເວົ້າສະເພາະປະຕິບັດລະບຽບກົດໝາຍຂອງຊາວໜຸ່ມປະຊາຊົນປະຕິວັດລາວ, ເປັນເຈົ້າການນຳກັນໃນການຕ້ານປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ, ສືບຕໍ່ສ້າງເສດຖະກິດຄອບຄົວ ໂດຍຈັດຕັ້ງປະຕິບັດຕາມທິດທາງແຜນການ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ; ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນຊາວໜຸ່ມຜູ້ທີ່ດີເດັ່ນ ໃຫ້ສົມກັບຄຳວ່າ ຊາວໜຸ່ມປຽບເໝືອນດັ່ງນົກອິນຊີທີ່ບໍ່ຫວັ່ນກົວຕໍ່ພາຍຸລົມແດງ ພ້ອມກັນບຸກບືນຕໍ່ໜ້າທີ່ວຽກງານ ເປັນເຈົ້າການຮັກສາມູນເຊື້ອໜ່ວຍຊາວໜຸ່ມ 4 ບຸກໃນຄັ້ງຕໍ່ໆໄປ.

ກ່ອນໜ້ານີ້, ໜ່ວຍຮາກຖານຊາວໜຸ່ມ ສພຂ ວຽງຈັນ ກໍໄດ້ຈັດຂຶ້ນທີ່ຫ້ອງປະຊຸມ ສພຂ ວຽງຈັນ ພາຍໃຕ້ການເປັນປະທານຮ່ວມເປັນຄະນະປະທານຂອງສະຫາຍ ເພັດສະໝອນ ສຸທຳມະວົງ ເລຂາຊາວໜຸ່ມສະພາປະຊາຊົນແຂວງວຽງຈັນ ສະຫາຍ ຄຳເລ້ ໄຊຍະວົງສີ ກຳມະການພັກແຂວງ, ກຳມະການສູນກາງຊາວໜຸ່ມ, ເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວແຂວງວຽງຈັນ, ສະຫາຍ ພັທ. ບຸນນຳ ຈັນທອງສີ ຮອງເລຂາໜ່ວຍພັກ ສພຂ ແລະ ບັນດາທ່ານປະທານໜ່ວຍຮາກຖານກຳມະບານ, ປະທານໜ່ວຍແມ່ຍິງ ສພຂ ວຽງຈັນ; ມີແຂກຖືກເຊີນພ້ອມດ້ວຍສະມາຊິກຊາວໜຸ່ມພາຍໃນ ສພຂ ວຽງຈັນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການເມືອງໃນໄລຍະສະໄໝກອງປະຊຸມໃຫຍ່ຊາວໜຸ່ມຄັ້ງທີ II (2018-2022) ທີ່ຜ່ານມາ ແລະ ທິດທາງແຜນການຄາດໝາຍສູ້ຊົນໃນໄລຍະ 5 ປີຕໍ່ໜ້າ (2023-2028) ໂດຍສະເພາະ ສະໄໝກອງປະຊຸມໃຫຍ່ຄັ້ງທີ III ເຊິ່ງຍົກໃຫ້ເຫັນຕະຫຼອດການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຮາກຖານຊາວໜຸ່ມ ສພຂ ວຽງຈັນ ພາຍໃຕ້ການຊີ້ນຳ-ນຳພາຂອງຄະນະພັກ ບວກກັບການເປັນເຈົ້າການ ຂອງຄະນະໜ່ວຍຊາວໜຸ່ມຮາກຖານ ຕໍ່ກັບສະມາຊິກພາຍໃນ ດ້ວຍການເຂົ້າຮ່ວມເຄື່ອນໄຫວທຸກຂະບວນການທີ່ຕິດພັນກັບວຽກງານວິຊາສະເພາະຂອງຕົນ ແລະ ປະຕິບັດວຽກງານທີ່ການຈັດຕັ້ງຂັ້ນເທິງມອບໝາຍໃຫ້ໄດ້ຮັບຜົນສຳເລັດຕາມໝາຍ, ໂດຍຖືເອົາວຽກງານສຶກສາອົບຮົມການເມືອງ - ແນວຄິດເປັນພື້ນຖານສຳຄັນ ເພື່ອສ້າງໃຫ້ສະມາຊິກພາຍໃນມີຄຸນທາດການເມືອງໜັກແໜ້ນຕໍ່ການຈັດຕັ້ງ, ມີຄຸນສົມບັດສິນທຳປະຕິວັດ, ມີສະຕິລະວັງຕົວຕໍ່ກົນອຸບາຍທັບປຽນໂດຍສັນຕິຂອງສັດຕູຂອງ ແລະ ກຸ່ມຄົນບໍ່ດີ ,ນຳເອົາແນວທາງນະໂຍບາຍຂອງພັກ,ລະບຽບກົດໝາຍຂອງລັດ ໂດຍສະເພາະມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ VI ຂອງອົງຄະນະພັກແຂວງ ແລະ ມະຕິກອງປະຊຸມວິສາມັນຄົບຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ສະໄໝທີ VIII ແລະ ມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ແຂວງວຽງຈັນ ຄັ້ງທີ VIII.

ໜ່ວຍຮາກຖານຊາວໜຸ່ມ ສພຂ ວຽງຈັນ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 4 ບຸກ ຂອງຊາວໜຸ່ມຢ່າງເປັນປົກກະຕິ ໄປຄຽງຄູ່ກັບການຈັດຕັ້ງປະຕິບັດຂະບວນການຂອງກອງອາສາສະໝັກຊາວໜຸ່ມຕະລຸມບອນ, ຜ່ານການຈັດຕັ້ງປະຕິຕົວຈິງ ສາມາດຍາດໄດ້ຮັບທຸງໄຊນາມມະຍົດ 4 ບຸກ ປະຈຳປີ 2020-2022 ສະມາຊິກຊາວໜຸ່ມໄດ້ຮັບການຢັ້ງຢືນ 4 ບຸກ 100% ປຸກລະດົມສະມາຊິກຊາວໜຸ່ມ ປະກອບສ່ວນເຂົ້າໃນການສ້າງກອງທຶນພັດທະນາໄດ້ຊາວໜຸ່ມ 1 ກອງທຶນ,ຕິດພັນກັບການສ້າງຕັ້ງກອງອາສາສະໝັກຊາວໜຸ່ມຕະລຸມບອນໄດ້ 1 ກອງທຶນ ມີສະມາຊິກທັງໝົດ 35 ສະຫາຍ ຍິງ 16 ສະຫາຍ; ຈາກນັ້ນ, ກອງປະຊຸມໄດ້ເປັນເອກະສັນກັນຢ່າງສົມບູນຮັບຮອງເອົາການເລືອກຕັ້ງປ່ອນບັດເລືອກຕັ້ງຄະນະໜ່ວຍຮາກຖານຊາວໜຸ່ມຊຸດໃໝ່ ສະໄໝທີ III ເຊິ່ງປະກອບມີ 3 ສະຫາຍ ເລືອກເອົາສະຫາຍ ຕູ່ລີ ໄຊສົມພອນ ເປັນເລຂາ, ສະຫາຍ ນາງ ພູວຽງ ວົງພະຈັນ ເປັນຮອງເລຂາ ພ້ອມເປັນປະທານກວດກາ, ສະຫາຍ ເພັດພູທອນ ເມືອງປາກ ເປັນຄະນະ, ແຕ່ງຕັ້ງຜູ້ຊ່ວຍ 2 ສະຫາຍຄື: ສະຫາຍ ໄຊຍະພອນ ແສງແກ້ວມີໄຊ ເປັນຜູ້ຊ່ວຍກວດກາ, ສະຫາຍ ແສງປະເສີດ ສຸທຳມະວົງ ເປັນຄະນະກວດກາ.

ຕອນທ້າຍກອງປະຊຸມ, ສະຫາຍ ຄຳເລ້ ໄຊຍະວົງ ໄດ້ໂອ້ລົມຕໍ່ທີ່ປະຊຸມ ເຊິ່ງໄດ້ເນັ້ນໜັກຕໍ່ການເຄື່ອນໄຫວວຽກງານຂອງໜ່ວຍຮາກຖານຊາວໜຸ່ມ ສພຂ ໂດຍສະເພາະກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຕາມແນວທາງຂອງພັກໃນໄລຍະໃໝ່, ໃຫ້ເອົາໃຈໃສ່ຄົ້ນຄ້ວາຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ,ແຜນພັດທະນາຊາວໜຸ່ມ-ເຍົາວະຊົນສູນກາງປະຊາຊົນປະຕິວັດລາວ ແລະ ແຜນພັດທະນາຊາວໜຸ່ມ-ເຍົາວະຊົນຂອງແຂວງວຽງຈັນວາງອອກ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ III ໃຫ້ປາກົດຜົນເປັນຈິງ.


ສພຂ ວຽງຈັນ

## ມອບເຄື່ອງໄຟຟ້າແສງຕາເວັນໃຫ້ກຳລັງປ້ອງກັນຊາດ 2 ເມືອງ



(ສພຊ) ສະມາຊິກສະພາປະຊາຊົນແຂວງອັດຕະປື ພ້ອມດ້ວຍຄະນະ ໄດ້ມອບເຄື່ອງໂຊລາເຊວ ເກັບພະລັງງານແສງຕາເວັນ ໃຫ້ກຳລັງປ້ອງກັນຊາດ 2 ເມືອງຄື: ທະຫານຮາບ 235 ທີ່ຂຶ້ນກັບກອງບັນຊາການທະຫານເມືອງພູວົງ ຈຳນວນ 3 ຊຸດ ແລະ ທະຫານຮາບ 233 ທີ່ຂຶ້ນກັບກອງບັນຊາການທະຫານເມືອງສະໜາມໄຊຈຳນວນ 3 ຊຸດ, ເຊິ່ງລວມມູນຄ່າ 30 ກວ່າລ້ານກີບ ເພື່ອໄປຕິດຕັ້ງຢູ່ກົມກອງດັ່ງກ່າວ ຈຳນວນ 6 ຕົ້ນ ໃນນັ້ນ, ມີຫຼັກເສົາ, ອຸປະກອນເກັບໄຟ, ແຜງເປືອງທາງ ເຊິ່ງມອບ-ຮັບຄັ້ງນີ້ ໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື ແລະ 2 ກຳລັງປ້ອງກັນຊາດຂອງສອງເມືອງ.

# ລັດຕ້ອງຄຸ້ມຄອງແຮງງານເຂົ້າສູ່ລະບຽບການໃຫ້ເຂັ້ມງວດ



ທ່ານ ປອ. ໄຊບັນດິດ ຣາຊະພົນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີເນື້ອໃນດັ່ງລຸ່ມນີ້:

ຂ້າພະເຈົ້າຄິດວ່າຊັບພະຍາກອນມະນຸດແມ່ນສຳຄັນຫຼາຍ ປະເທດເຮົາຈະມີຄວາມຈະເລີນໄດ້ ຊັບພະຍາກອນທາງດ້ານມະນຸດພວກເຮົາຕ້ອງມາກ່ອນ ຈຶ່ງຢາກແລກປ່ຽນກ່ຽວກັບຕົວເລກທີ່ທາງກະຊວງແຮງງານເພິ່ນໄດ້ກຳນົດອອກມານີ້. ສຳລັບຢູ່ປະເທດລາວເຮົາມີພົນລະເມືອງຢູ່ປະມານ 7,4 ລ້ານຄົນ ໃນນັ້ນ, ຜູ້ທີ່ຢູ່ໃນເກນອອກແຮງງານແຕ່ 15 ປີ ຂຶ້ນໄປມີຢູ່ 5,3 ລ້ານຄົນ ຫຼືວ່າທຽບເທົ່າກັບ 71,6%, ແຕ່ພົນລະເມືອງທີ່ກຳລັງແຮງແທ້ໆແມ່ນມີແຕ່ 2,5 ລ້ານຄົນ ຫຼືວ່າ 47% ຜູ້ທີ່ເຮັດວຽກເຂົ້າຢູ່ໃນຕຳແໜ່ງພາຍໃນ ແລະ ຕ່າງປະເທດທີ່ມີເງິນເດືອນ. ນອກຈາກນັ້ນ, ແມ່ນຜູ້ປະກອບອາຊີບອິດສະຫຼະ ເຮັດວຽກດ້ວຍຕົນເອງທີ່ບໍ່ມີເງິນເດືອນ ກວມເອົາ 66,5% ເຊິ່ງແຍກອີງປະກອບກຳລັງດັ່ງກ່າວຄື: ຂະແໜງກະສິກຳ 56,9%, ອຸດສາຫະກຳ 10,2% ແລະ ບໍລິການ 32,9% ໃນນີ້, ມີຜູ້ວ່າງງານ 61 ພັນຄົນ ຫຼື 2,4% ເຊິ່ງມີອາຍຸລະຫວ່າງ 15-24 ປີ ເຊິ່ງເປັນຊາວໜຸ່ມທີ່ກຽມເຂົ້າຕະຫຼາດແຮງງານຈຳນວນ 24 ພັນກວ່າຄົນ. ເລື່ອງແຮງງານຂອງພວກເຮົາແມ່ນຂາດແຄນຫຼາຍ ເຊິ່ງຫຼັກໆຜູ້ທີ່ໄປເຮັດວຽກຢູ່ຕ່າງປະເທດໂດຍສະເພາະປະເທດໄທ ຜູ້ທີ່ໄປທັງໝົດປະມານ 3 ແສນຄົນ, ໃນນັ້ນ, 96 ພັນກວ່າຄົນແມ່ນໄປຖືກຕ້ອງຕາມລະບຽບກົດໝາຍ ແລະ ອີກ 2 ແສນກວ່າຄົນແມ່ນບໍ່ຖືກຕ້ອງ. ນອກຈາກນັ້ນແລ້ວ ໄປເຮັດວຽກຢູ່ປະເທດເກົາຫຼີ ລວມທັງໝົດປະມານ 2.600 ກວ່າຄົນ ມີຍິງຢູ່ 864 ຄົນ ແລະ ປະເທດຍີ່ປຸ່ນລວມທັງໝົດປະມານ 700 ກວ່າຄົນ ໃນນັ້ນມີຍິງ 256 ຄົນ ເຊິ່ງສ້າງລາຍຮັບເຂົ້າມາປະເທດລາວເຮົາປະມານ 35 ລ້ານໂດລາ ຕໍ່ເດືອນ ຫຼື ທຽບເທົ່າກັບ 464 ລ້ານໂດລາຕໍ່ປີ ແຕ່ບໍ່ຮູ້ວ່າຜ່ານທາງໃດ ການໂອນເງິນເຂົ້າມາ ເຂົາລັດເຮົາບໍ່ ຫຼືວ່າເຂົ້າປະຊາຊົນໂດຍກົງ ແຕ່ແນວໃດກໍຕາມ ກໍຖືວ່າເປັນການສ້າງລາຍຮັບ. ໃນໄລຍະສຸດທ້າຍນີ້ແມ່ນມີການປະກາດເອົາຄົນໄປເຮັດວຽກຢູ່ຕ່າງປະເທດເຮັດໃຫ້ມັນມີຂະບວນການ, ມີແຮງງານມີວຽກປະຈຳຢູ່ແລ້ວ ຄອນແຄນ ເພາະວ່າຢາກໄດ້ເງິນເດືອນສູງ ເຮັດໃຫ້ມີຜົນກະທົບຕໍ່ແຮງງານຢ່າງໜັກ ແລະ ນອກຈາກນັ້ນ ບັນດາໂຮງງານ, ບັນດາບໍລິສັດຕ່າງໆໄດ້ເກີດມີການຍາດແຍ່ງແຮງງານເຊິ່ງກັນແລະກັນ ໄດ້ມີການຍາດເອົາບຸກຄະລາກອນຜູ້ນັ້ນມາໃສ່ຜູ້ນີ້ ມາຈາກໂຮງງານນັ້ນມາຈາກບໍລິສັດນີ້ ເຮັດໃຫ້ສະພາບຂອງໂຮງງານຫຼືບໍລິສັດຕ່າງໆ ມີຄວາມສັບສົນຫຼາຍ ຈຶ່ງຢາກສະເໜີໃຫ້ທາງພາກລັດຖະບານຄົ້ນຄວ້າຄືນຕື່ມເບິ່ງວ່າ ເຖິງຈະມີການນຳສົ່ງພະນັກງານໄປເຮັດວຽກຢູ່ຕ່າງປະເທດທີ່ສ້າງລາຍຮັບສູງນີ້ກໍດີ ແຕ່ວ່າຂະບວນການຕ່າງໆນັ້ນ ບໍ່ຢາກໃຫ້ກະທົບເຖິງແຮງງານທີ່ມີຢູ່ລາວແລ້ວ ເຊິ່ງວ່າແຮງງານກໍມີໜ້ອຍຢູ່ແລ້ວ ອີກດ້ານໜຶ່ງຢາກສະເໜີທາງພາກລັດຖະບານວ່າ ສຳລັບໂຮງງານ, ໂຮງຈັກທີ່ມາເປີດໃໝ່ ເພາະວ່າພວກເຮົາໄດ້ລະດົມນັກລົງທຶນຕ່າງປະເທດເຂົ້າມາ ບໍ່ມີຄົນງານໃຫ້ເຂົາ, ເຂົາຢາກໄດ້ 2 ພັນຄົນ ມີແຕ່ 400-500 ແລະ ເຮົາຊິທົດແທນໃຫ້ຄືແນວໃດ ເປັນໄປໄດ້ບໍ່ນຳເອົາແຮງງານຕ່າງປະເທດເຂົ້າມາ ແຕ່ວ່າໃນການນຳແຮງງານຕ່າງປະເທດດັ່ງກ່າວເຂົ້າມານີ້ ຢາກຂໍນະໂຍບາຍໃນການເຮັດໜັງສື ເພາະວ່າການເຮັດໜັງສືນຳເຂົ້າແຮງງານຕ່າງປະເທດເຂົ້າມາ ຖືວ່າແພງຫຼາຍມີຫຼາຍຂັ້ນຕອນຜ່ານຫຼາຍການຈັດຕັ້ງ ປກສ, ແຮງງານ, ກະຊວງການຕ່າງປະເທດ ແລະ ອື່ນໆ ອັນນີ້ແມ່ນເປັນບັນຫາໜັກຫຼາຍ ຈຶ່ງຢາກສະເໜີໃຫ້ທາງລັດຖະບານຊ່ວຍຄົ້ນຄວ້າເຮັດແນວໃດໃຫ້ມີແຮງງານລາວກັບຄືນມາ ດຽວນີ້ຢູ່ທາງພາກໃຕ້ພາກກາງລົງໄປຢູ່ແຖວເຂດຊົນນະບົດ ແມ່ນບໍ່ມີຊາວໜຸ່ມ, ຊາວໜຸ່ມດັ່ງກ່າວກໍບໍ່ຮູ້ວ່າໄປເຮັດຫຍັງຢູ່ໃສ ອີກດ້ານໜຶ່ງອີກຍັງເກີດປາກົດການຫຍໍ້ທໍ້ທີ່ວ່າບໍ່ພາກັນເຂົ້າໂຮງຮຽນ ຢູ່ໃນໂຮງຮຽນກໍມີການຫຼຸດຈຳນວນພົນ ຈົດເຂົ້າຈຳນວນ ຫຼືວ່າເຂົ້າມະຫາວິທະຍາໄລກໍຕາມ ຫຼືວ່າຊິເຂົ້າວິຊາຊີບກໍເຊັ່ນດຽວກັນ ເຮັດໃຫ້ຫຼຸດຜ່ອນຫຼາຍເລື່ອງຈຳນວນດັ່ງກ່າວນີ້ ແລະ ໄລຍະທ້າຍໆມານີ້ ພວກເຮົາກໍໄດ້ມາຄົ້ນຄວ້າກັນເລື່ອງຄ່າແຮງງານຂັ້ນຕ່ຳ ສຳລັບຄ່າແຮງງານຂັ້ນຕ່ຳທາງພາກທຸລະກິດພວກເຮົາຄິດວ່າ ເລື່ອງຂຶ້ນເງິນເດືອນໃຫ້ມັນເໝາະສົມນັ້ນ ມັນບໍ່ມີບັນຫາ ສຳຄັນຕ້ອງຄວບຄຸມລາຄາສິນຄ້າໃຫ້ໄດ້ ຖ້າວ່າຂຶ້ນເງິນເດືອນໄປແລ້ວ ລາຄາສິນຄ້າສູງຂຶ້ນໄປຈະບໍ່ມີຄວາມໝາຍຫຍັງ ຖືວ່າຍັງເສຍປຽບຢູ່ຄືເກົ່າ ສະນັ້ນ, ມັນຈຶ່ງຮຽກຮ້ອງໃຫ້ຫຼາຍພາກສ່ວນຂອງພາກລັດຕ້ອງໄດ້ປຶກສາຫາລື ສ້າງໜ່ວຍງານຄົ້ນຄວ້າຄັກແນ່ພ້ອມກັນ ເພື່ອເຮັດໃຫ້ລາຄາສິນຄ້າບໍ່ໃຫ້ຂຶ້ນ ແຕ່ຂຶ້ນເງິນເດືອນໄດ້ເພື່ອໃຫ້ສາມາດລ້ຽງກຸ້ມຕົນເອງໄດ້ ຂ້າພະເຈົ້າຄິດວ່າຊັບພະຍາກອນມະນຸດເປັນບັນຫາສຳຄັນ ຖ້າວ່າເປັນວາລະແຫ່ງຊາດໃນຊຸດຕໍ່ໄປໄດ້ຈະເປັນການດີ ເພື່ອຈະຊ່ວຍເຮັດໃຫ້ປະເທດພວກເຮົາໄດ້ພັດທະນາສ້າງເສດຖະກິດນຳເອົາການລົງທຶນຕ່າງປະເທດເຂົ້າມາໄດ້ຕື່ມ.

ນອກຈາກນີ້ ພວກເຮົາກຳລັງກຽມທີ່ຈະອອກຈາກປະເທດດ້ອຍພັດທະນາ ຫຼືວ່າປ່ຽນຈາກສະຖານະການປະເທດດ້ອຍພັດທະນາ ແຕ່ການຈະອອກຈາກປະເທດດັ່ງກ່າວ ຈຳເປັນຈະຕ້ອງໄດ້ປະຕິບັດຕາມລະບຽບຫຼັກການຂອງຜູ້ມາປະເມີນ ແລະ ຢູ່ໃນນັ້ນກໍແມ່ນມີຫຼາຍໆຢ່າງທີ່ພວກເຮົາຍັງບໍ່ທັນກຽມພ້ອມ ຂ້າພະເຈົ້າຄິດວ່າຍັງມີຫຼາຍແຂວງ ຫຼາຍບ້ານ, ຫຼາຍເມືອງ ຍັງມີຄວາມທຸກຍາກຫຼາຍ ຄັນຊັ້ນແລ້ວເຮັດຈັ່ງໃດເພື່ອຊິໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກນີ້ໄດ້ ເຮົາຈະຕ້ອງໄດ້ສ້າງຄວາມເຂັ້ມແຂງໃຫ້ກັບທາງບ້ານ, ທາງເມືອງ ສ້າງວຽກເຮັດງານທຳໃຫ້ຊາວໜຸ່ມໄດ້ຢູ່ ໃຫ້ມີການລົງທຶນເຂົ້າມາໃໝ່ ຊິເຮັດແນວໃດກໍເຮັດ ແຕ່ວ່າໃຫ້ມັນມີວິທີການທີ່ຈະດຶງດູດໃຫ້ຄົນຢູ່ບ້ານເຮົາໃຫ້ໄດ້ຫຼາຍຂຶ້ນຕື່ມ.

ອັນສຸດທ້າຍທີ່ຢາກປະກອບຕື່ມ ແມ່ນເຮັດແນວໃດກໍຕາມ ໃນເມື່ອວ່າປະເທດເຮົາພັດທະນາໄປໃນອະນາຄົດ ແນ່ນອນວຽກໃໝ່ຈະເກີດຂຶ້ນ ຊິແມ່ນວຽກທາງດ້ານໄອທີ, ຊິແມ່ນວຽກທາງດ້ານກະສິກຳສະອາດ ກະສິກຳທັນສະໄໝ, ວຽກບໍລິການໂລຈິສຕິກ ຫຼື ໂຮງແຮມອື່ນໆ ກໍແມ່ນຕ້ອງການແຕ່ວິທະຍາສາດ ຈັ່ງຊັ້ນແລ້ວເຮົາຄວນກຽມຄົນເຮົາໃຫ້ພ້ອມຕໍ່ກັບການລົງທຶນອັນໃໝ່.

## ແຮງງານເປັນບັນຫາໜຶ່ງທີ່ ສສຊ ສະເໜີໃຫ້ລັດຖະບານແກ້ໄຂດ່ວນ

ທ່ານ ຄຳປະສິດ ເທບວົງສາ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ໄດ້ປະກອບຄຳເຫັນກ່ຽວກັບເສດຖະກິດແຫ່ງຊາດ ໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ເຊິ່ງທ່ານໄດ້ມີຄຳເຫັນວ່າ:



ກ່ຽວກັບບັນຫາແຮງງານທີ່ບໍ່ພຽງພໍ ເຊິ່ງມີຜົນກະທົບຕໍ່ເສດຖະກິດແຫ່ງຊາດ ໂດຍພື້ນຖານແລ້ວ ເຫັນດີຕໍ່ບົດລາຍງານຂອງລັດຖະບານ ແລະ ບົດຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ແຕ່ຂໍແລກປ່ຽນບາງບັນຫາທີ່ກ່ຽວກັບບັນຫາແຮງງານ ທີ່ມີຜົນກະທົບຕໍ່ເສດຖະກິດ, ໃນບົດລາຍງານຂອງທ່ານນາຍົກລັດຖະມົນຕີ ທີ່ກ່ຽວກັບບັນຫາແຮງງານທີ່ຫຼັ່ງໄຫຼໄປເຮັດວຽກຢູ່ປະເທດເພື່ອນບ້ານນັ້ນ ເນື່ອງຈາກສະພາບເງິນກີບອ່ອນຄ່າ ກ່ຽວກັບບັນຫານີ້ ຂ້າພະເຈົ້າສັງເກດເຫັນວ່າໃນປັດຈຸບັນກະຊວງແຮງງານກຳລັງໂຄສະນາລະດົມແຮງງານລາວເຮົາອອກໄປໃຊ້ແຮງງານພາຍນອກ, ນະໂຍບາຍນີ້ ຈະບໍ່ສວນທາງກັບຄວາມເປັນຈິງບໍ? ເພາະວ່າປັດຈຸບັນນີ້ ໂຮງຈັກໂຮງງານຢູ່ໃນລາວເຮົາຂາດແຮງງານຢ່າງໜັກໜ່ວງ ຢາກໃຫ້ກະຊວງທີ່ກ່ຽວຂ້ອງເບິ່ງນະໂຍບາຍນີ້ຄືນ ແລະ ປະເມີນຄືນວ່າເຮົາໄດ້ປຽບຫຍັງ ແລະ ເສຍປຽບຫຍັງຖ້າເຮົາສົ່ງແຮງງານໄປ ເພາະບັນຫານີ້ປະເທດເພື່ອນບ້ານກໍພົບບັນຫາຄືກັນ ເວລາສົ່ງແຮງງານໄປເກົາຫຼີ ເພາະສ່ວນຫຼາຍກໍກັບມາຄືນໝົດເພາະວ່າມັນບໍ່ຄຸ້ມ.

ສ່ວນແຮງງານໃນຂົງເຂດທຸລະກິດ SME ຮ້ານຄ້າຕ່າງໆຜູ້ປະກອບການກໍພົບບັນຫາຂາດແຄນແຮງງານຄືກັນ ເຊັ່ນດຽວກັບພວກເຮົາມາເບິ່ງວ່າຍ້ອນຫຍັງຈຶ່ງຂາດແຄນແຮງງານນັ້ນ ເຮົາຈະເບິ່ງຢູ່ 2 ບັນຫາທີ່ມີຜົນກະທົບໂດຍກົງ.

**ບັນຫາທີ 1** ແມ່ນຄ່າໄຟຟ້າລາຄາສູງ: ການຄຳນວນຄ່າໄຟຕໍ່ຫົວໜ່ວຍທຸລະກິດອາດຈະບໍ່ເໝາະສົມຄວນແຍກເປັນລະອຽດຂອງເພດທຸລະກິດແບບຍ່ອຍໃຫ້ເໝາະສົມກັບລາຍຮັບກັບຜົນກຳໄລຂອງຜູ້ປະກອບການຕົວຈິງ ເພາະບາງທຸລະກິດລາຍຮັບບໍ່ສູງ ພັດຈ່າຍຄ່າໄຟສູງໂພດ ມັນເຮັດໃຫ້ທຸລະກິດ ຫຼື ຜູ້ປະກອບການນັ້ນຂາດທຶນ ບັນຫານີ້ຕ້ອງເບິ່ງຄືນກ່ຽວກັບອັດຕາການເກັບຄ່າໄຟ.

**ບັນຫາທີ 2** ຄືການເກັບພາສີອາກອນ ຮ້ານຄ້າໃນປັດຈຸບັນ ຕາມລະບຽບຫຼັກການອາດຈະບໍ່ແທດເໝາະກັບຂະໜາດ ແລະ ລາຍຮັບຂອງຜູ້ປະກອບການຂະໜາດນ້ອຍ ແລະ ຂະໜາດກາງ. ຍົກຕົວຢ່າງ: ຮ້ານກິນດື່ມທີ່ມີລະບົບແລ້ວສ່ວນຫຼາຍແມ່ນເຂົາຈະໃຊ້ແອັບທີ່ເປັນແອັບ food panda ໃນ food panda ນີ້ເຂົາຈະເກັບຄ່າຢູ່ 30-35% ນັ້ນກໍເທົ່າເທົ່າກັບວ່າ food panda ແມ່ນມີຫຸ້ນສ່ວນກັບທຸກຮ້ານອາຫານເກືອບວ່າທຸກຮ້ານອາຫານ 30-35% ພັດບໍ່ເກັບນຳບໍລິສັດດັ່ງກ່າວ ພັດມາເກັບທີ່ໜ້າຮ້ານນັ້ນ ມັນຈະເຮັດໃຫ້ຜູ້ປະກອບການນັ້ນເສຍປຽບ ຢູ່ຍາກ, ພັດກົງກັນຂ້າມທຸລະກິດທີ່ຂາຍອອນລາຍແຕ່ລະມື້ມີລາຍຮັບສູງ ພັດບໍ່ມີລະບົບເພື່ອດຶງດູດເຂົາ ໃຫ້ເຂົາຖອກພັນທະຕົວຈິງ ເພາະສະໄໝນີ້ມັນປ່ຽນຍຸກແລ້ວ ບໍ່ຈຳເປັນຕ້ອງມີໜ້າຮ້ານ ແຕ່ຂາຍຂອງກຳໄລມະຫາສານ ແຕ່ບໍ່ເຄີຍຖອກພັນທະຕາມຕົວຈິງຂອງລາຍຮັບ ຕ້ອງເບິ່ງຄືນນະໂຍບາຍໂຕນີ້.

ສອງບັນຫາດັ່ງກ່າວທີ່ຂ້າພະເຈົ້າເວົ້າມາຫັ້ນ ມັນເຮັດໃຫ້ເຈົ້າຂອງກິດຈະການຕ້ອງປັບຄ່າເງິນເດືອນຂອງພະນັກງານນັ້ນຫຼຸດລົງ ໃຫ້ໜ້ອຍທີ່ສຸດເພື່ອຢູ່ລອດ ສະນັ້ນ, ສຸດທ້າຍແຮງງານກໍຕ້ອງໜີໄປຕ່າງປະເທດຢູ່ດີ ຖ້າວ່າມັນປັບລົງເພື່ອຄວາມຢູ່ລອດຄືກັນ.

ອີກບັນຫາໜຶ່ງ ຫຼາຍກອງປະຊຸມແມ່ນເວົ້າເຖິງການປັບເງິນເດືອນຂັ້ນຕ່ຳໃນປັດຈຸບັນນີ້ ຕາມທີ່ຂ້າພະເຈົ້າຮູ້ອັດຕາເງິນເດືອນຂັ້ນຕ່ຳຂອງກຳມະກອນແມ່ນລ້ານສາມ, ແຕ່ສຳລັບລັດຖະກອນແມ່ນລ້ານສອງ ພວກເຮົາຊິປັບແນວໃດ? ສິເທົ່າໃດຈຶ່ງຄ່ອຍດີ? ການປັບເງິນເດືອນຂັ້ນຕ່ຳນີ້ແມ່ນທາງອອກທີ່ຖືກຕ້ອງແລ້ວບໍ່?, ເປັນຫຍັງຈຶ່ງວ່າແນວນັ້ນ ເພາະຕາມທີ່ຂ້າພະເຈົ້າຮູ້ມາວ່າ ແຮງງານທີ່ໄປເຮັດວຽກຢູ່ເພື່ອນບ້ານນີ້ລາຍຮັບຂັ້ນຕ່ຳຕໍ່ມື້ເຂົາແມ່ນ 220.000 ກີບ ຖ້າທຽບໃສ່ເງິນກີບ, ຖ້າ 30 ມື້ ມັນຈະຕົກຢູ່ 6 ລ້ານ 6 ເຮົາຊິປັບທໍ່ລາຍຮັບນີ້ບໍ່ເພື່ອດຶງດູດແຮງງານ, ຖ້າຄົນທີ່ເຮັດວຽກທົ່ວໄປທີ່ເປັນແນ່ໜ້ອຍໜຶ່ງ ແມ່ນແຮງງານຕົກມື້ໜຶ່ງ 335.000 ກີບ ກໍຄືເດືອນໜຶ່ງເທົ່າລາຍຮັບເຂົາທີ່ຄົນລາວໄປເຮັດວຽກຢູ່ຫັ້ນແມ່ນ 10 ລ້ານກວ່າກີບ ອັນນີ້ບັນຫານີ້ຕ້ອງເບິ່ງຄືນ.

ສຸດທ້າຍຂໍສະຫຼຸບດັ່ງນີ້, ລັດຖະບານເຮົາຄວນພິຈາລະນາໃຫ້ມີນະໂຍບາຍທີ່ເໝາະສົມຕໍ່ການຈັດແຮງງານພາຍໃນໂດຍສົ່ງເສີມ ແລະ ມີນະໂຍບາຍພິເສດຕໍ່ໂຮງງານ, ໂຮງຈັກ ແລະ ທຸລະກິດ SME, ອີກຢ່າງໜຶ່ງເປັນການດຶງດູດໃຫ້ນັກລົງທຶນມາເຮັດ ສ້າງໂຮງຈັກ, ໂຮງງານ ເພາະວ່າປັດຈຸບັນນີ້ແຮງງານເຮົາບໍ່ມີໂຮງຈັກ, ໂຮງງານ ກໍບໍ່ສາມາດເຂົ້າມາລົງທຶນຢູ່ລາວໄດ້ຢູ່ແລ້ວ ເພາະຫຼັກໆແມ່ນບັນຫານີ້ ສະນັ້ນ ໂຕນີ້ພວກເຮົາຕ້ອງເລັ່ງດ່ວນ.




# ກົດໝາຍ ວ່າດ້ວຍວິຈິດສິນ

ຕໍ່ຈາກສະບັບກ່ອນ

### ພາກທີ III
### ການສ້າງຜົນງານດ້ານວິຈິດສິນ ແລະ ວິຈິດສິນທີ່ເປັນສົມບັດມໍ່ລະດົກເມືອງ

**ມາດຕາ 23 ການສ້າງຜົນງານດ້ານວິຈິດສິນ**

ການສ້າງຜົນງານດ້ານວິຈິດສິນ ແມ່ນການສ້າງຜົນງານສິລະປະທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ ບົນພື້ນຖານຫົວຄິດປະດິດສ້າງຂອງຜູ້ສ້າງ ທີ່ອອກມາຈາກອາລົມຈິດ, ປະສົບການ, ການບັນທຶກເຫດການ, ຄວາມຮູ້ສຶກ ທີ່ສະທ້ອນເຖິງສັງຄົມ, ຄວາມເຊື່ອ ແລະ ວິຖີການດຳລົງຊີວິດ ທີ່ບໍ່ຂັດກັບແນວທາງ ນະໂຍບາຍ, ກົດໝາຍ, ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງປະຊາຊົນລາວບັນດາເຜົ່າ.

**ມາດຕາ 24 ການແຂ່ງຂັນສ້າງຜົນງານດ້ານວິຈິດສິນ**

ການແຂ່ງຂັນສ້າງຜົນງານດ້ານວິຈິດສິນ ແມ່ນການຊຸກຍູ້ ແລະ ສົ່ງເສີມ ຫົວຄິດປະດິດສ້າງ, ພອນສະຫວັນຂອງບຸກຄົນທີ່ເປັນນັກວິຈິດສິນອາຊີບ, ເຄິ່ງອາຊີບ ແລະ ສະໝັກຫຼິ້ນ ເພື່ອເຮັດໃຫ້ຜົນງານດ້ານວິຈິດສິນ ອຸດົມຮັ່ງມີ, ມີຫຼາຍສີສັນ ແລະ ຍືນຍົງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈັດຕັ້ງແຂ່ງຂັນຜົນງານດ້ານວິຈິດສິນ ຕ້ອງປະຕິບັດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ເປົ້າໝາຍການແຂ່ງຂັນຜົນງານດ້ານວິຈິດສິນ.

**ມາດຕາ 25 ເປົ້າໝາຍການແຂ່ງຂັນຜົນງານດ້ານວິຈິດສິນ**

ການແຂ່ງຂັນຜົນງານດ້ານວິຈິດສິນ ມີເປົ້າໝາຍ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມຫົວຄິດປະດິດສ້າງ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການສ້າງຜົນງານດ້ານວິຈິດສິນ ໃຫ້ມີຫຼາຍສີສັນ, ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ;
2. ອະນຸລັກຮັກສາ ເອກະລັກ, ມູນເຊື້ອ ທາງດ້ານວັດທະນະທຳ ຂອງຊາດ ແລະ ເຜົ່າ ໃຫ້ຍືນຍົງ;
3. ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນການຟື້ນຟູ, ອະນຸລັກ, ພັດທະນາ ແລະ ຊົມໃຊ້ຜົນງານດ້ານວິຈິດສິນ ໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ.

**ມາດຕາ 26 ວິຈິດສິນທີ່ເປັນສົມບັດມໍ່ລະດົກເມືອງ**

ວິຈິດສິນທີ່ເປັນສົມບັດມໍ່ລະດົກເມືອງ ແມ່ນ ຜົນງານດ້ານວິຈິດສິນ ຊຶ່ງມີຄຸນຄ່າອັນໂດດເດັ່ນ, ພິເສດທີ່ຫາຍາກ ເປັນເອກະລັກຂອງຊາດ, ເປັນທີ່ສັກກາລະບູຊາ, ຄູ່ບ້ານຄູ່ເມືອງ ແລະ ເຊີດຊູຈິດໃຈຮັກຊາດ ແລະ ບ້ານເກີດເມືອງນອນ ເປັນຕົ້ນ ລວດລາຍສິລະປະຂອງອະນຸສາວະລີວິລະບູລຸດ, ສາສະນະສະຖານ, ພະພຸດທະຮູບ ເຊັ່ນ ພະທາດຫຼວງ, ວັດສີສະເກດ, ຫໍພະແກ້ວ, ວັດຊຽງທອງ, ວັດພູຈຳປາສັກ, ໄຫຫີນຊຽງຂວາງ.

ອ່ານຕໍ່ສະບັບໜ້າ

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

# ຕົ້ນປີ 2023 ໄດ້ເຊັນສັນຍາສຳປະທານບໍ່ແຮ່ໃນຮູບແບບທົດລອງ 89 ບໍລິສັດ

ຕໍ່ຈາກສະບັບກ່ອນ...



1.2 ດ້ານພະລັງງານ-ບໍ່ແຮ່:

+ ດ້ານພະລັງງານ: ໃນໄລຍະ 6 ເດືອນຕົ້ນປີ 2023 ສືບຕໍ່ສຸມໃສ່ການຜະລິດພະລັງງານປະຕິບັດໄດ້24.316ລ້ານກິໂລວັດໂມງ ມູນຄ່າ 21.965 ຕື້ກີບ ທຽບໃສ່ 6 ເດືອນຕົ້ນປີ 2022 (23.911 ລ້ານກິໂລວັດໂມງ) ເພີ່ມຂຶ້ນ 1,69%, ມີມູນຄ່າ (18.100 ຕື້ກີບ) ເພີ່ມຂຶ້ນ 21,35% ແລະ ຖ້າທຽບໃສ່ແຜນການປີ (51.134 ລ້ານກິໂລວັດໂມງ) ປະຕິບັດໄດ້ 47,55%, ມູນຄ່າ (41.321 ຕື້ກີບ)ປະຕິບັດໄດ້53,15%; ໃນນີ້ການຜະລິດໄຟຟ້າໄດ້ແບ່ງອອກ ເປັນ 3 ກຸ່ມ: EDL: 28 ລ້ານກິໂລວັດໂມງ (ທຽບໃສ່ 6 ເດືອນຕົ້ນປີ 2022 ເພີ່ມຂຶ້ນ 16,6%), ມູນຄ່າ2,57ຕື້ກີບ; EDL-GEN: 1.721 ລ້ານກິໂລວັດໂມງ (ທຽບໃສ່ 6 ເດືອນຕົ້ນປີ 2022 ເພີ່ມຂຶ້ນ 8,8%), ມູນຄ່າ 820,56 ຕື້ກີບ; PP: 22.162 ລ້ານກິໂລວັດໂມງ (ທຽບໃສ່ 6 ເດືອນຕົ້ນປີ 2022 ຫຼຸດລົງ 2,45%), ມູນຄ່າ 17.277,44 ຕື້ກີບ;

ມາຮອດທ້າຍເດືອນພຶດສະພາ 2023 ແຫຼ່ງຜະລິດພະລັງງານໄຟຟ້າມີທັງໝົດ 94 ແຫ່ງ (ກຳລັງຕິດຕັ້ງ 1 ເມກາວັດຂຶ້ນໄປ) ລວມກຳລັງຕິດຕັ້ງ 11.661,14 ເມກາວັດ, ສາມາດຜະລິດພະລັງງານໄຟຟ້າໄດ້ 58.813,42 GWh/ປີ, ໃນນີ້ພະລັງງານນ້ຳ 81 ແຫ່ງ ກວມ 83%, ພະລັງງານທົດແທນ 12 ແຫ່ງ (ແສງຕາເວັນ 8 ແຫ່ງ ແລະ ຊີວະມວນ 4 ແຫ່ງ) ກວມ 1%, ຄວາມຮ້ອນຖ່ານຫີນ 1 ແຫ່ງ ກວມ 16% ເຊິ່ງເຫັນວ່າຍັງບໍ່ທັນສາມາດປະຕິບັດ ໄດ້ຕາມມະຕິສະພາແຫ່ງຊາດກຳນົດ ເປັນຕົ້ນແມ່ນພະລັງງານທົດແທນ (ສະພາກຳນົດ 11%); ໄດ້ສຳເລັດການເຊັນສັນຍາສຳປະທານ CA ຫຼາຍໂຄງການ ເຊັ່ນ: ໂຄງການເຂື່ອນໄຟຟ້ານ້ຳຂອງປາກລາຍ, ໂຄງການເຂື່ອນໄຟຟ້າເຊກອງ 4A, 4B, ໂຄງການເຂື່ອນໄຟຟ້ານ້ຳພາກປະສົມປະສານກັບພະລັງງານໄຟຟ້າແສງຕາເວັນ, ໂຄງການກໍ່ສ້າງໄຟຟ້າພະລັງງານລົມ ແລະ ອື່ນໆ;

+ ດ້ານບໍ່ແຮ່: ໃນໄລຍະ 6 ເດືອນຕົ້ນປີ 2023 ສາມາດຄາດຄະເນມູນຄ່າໄດ້ 10.805 ຕື້ກີບ ທຽບໃສ່ 6 ເດືອນຕົ້ນປີ 2022 ເພີ່ມຂຶ້ນ 10,8% (ການເພີ່ມຂຶ້ນແມ່ນມາຈາກກິດຈະການບໍ່ແຮ່ປົກກະຕິທີ່ສາມາດຜະລິດໄດ້ຕາມແຜນ ແລະ ຈາກກິດຈະການແບບທົດລອງທີ່ກວມປະມານ 8%) ແລະ ຖ້າທຽບໃສ່ແຜນການປີປະຕິບັດໄດ້ 54,58%; ຂຸດຄົ້ນເພື່ອຈຳໜ່າຍພາຍໃນໄດ້ 156 ລ້ານໂດລາ ທຽບໃສ່ໄລຍະດຽວກັນກັບປີຜ່ານມາ ເພີ່ມຂຶ້ນ 7,58% ເປັນຕົ້ນຫີນກາວ, ແຮ່ເກືອໂປຣຕາສ (ເກືອກາລີ), ຫີນປູນ ທີ່ສະໜອງເຂົ້າໃນໂຮງງານອຸດສະຫະກຳພາຍໃນ;

- ຕັ້ງແຕ່ມື້ປະຕິບັດວາລະແຫ່ງຊາດມາຮອດເດືອນພຶດສະພາ 2023, ໄດ້ເຊັນສັນຍາສຳປະທານບໍ່ແຮ່ໃນຮູບແບບທົດລອງທັງໝົດ 89 ບໍລິສັດ (ແຮ່ເຫຼັກ 38, ແຮ່ຄຳເຄົ້າ 8, ຫີນມາໂບ 2 ແລະ ແຮ່ຄຳຕົກຂ້ອນ 31 ແລະ ແຮ່ຫາຍາກ 10 ບໍລິສັດ) ໃນເນື້ອທີ່ 36.450,11 ເຮັກຕາ ຫຼືເທົ່າກັບ 0,13% ຂອງເນື້ອທີ່ທົ່ວປະເທດ ແຕ່ໃນປະຕິບັດພັນທະດ້ານການເງິນຂອງໂຄງການທົດລອງໃຫ້ລັດຖະບານ ທີ່ໄດ້ມອບເໝົາລ່ວງໜ້າ ແລະ ພັນທະຄ່າຊື້ລິຂະສິດ ແມ່ນທັງໝົດ 109 ບໍລິສັດ (89 ບໍລິສັດທີ່ໄດ້ເຊັນສັນຍາສຳປະທານ, 08 ບໍລິສັດທີ່ຍັງບໍ່ທັນໄດ້ເຊັນສັນຍາສຳປະທານ ແລະ 12 ບໍລິສັດໃນໂຄງການສຳຫຼວດແຮ່ຫາຍາກ) ລວມມູນຄ່າທັງໝົດ ປະມານ 864,7 ຕື້ກີບ ແລະ 85 ລ້ານໂດລາ;

1.3 ດ້ານການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ກາງ ແລະ ການຄຸ້ມຄອງລາຄາສິນຄ້າ: ວຽກພົ້ນເດັ່ນແມ່ນສຸມໃສ່ຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກ ແລະ ໄດ້ສຳເລັດການປັບປຸງດຳລັດວ່າດ້ວຍການກຳນົດຂະໜາດຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 04/ລບ ແລະ ດຳລັດວ່າດ້ວຍ ກອງທຶນສົ່ງເສີມ MSME; ພ້ອມທັງເປີດສູນບໍລິການ SME ເພີ່ມອີກ 1 ແຂວງ (ບໍລິຄຳໄຊ) ລວມເປັນທັງໝົດ 6 ແຫ່ງ ແລະ ສຳເລັດການຈັດຝຶກອົບຮົມກ່ຽວກັບການດຳເນີນທຸລະກິດໃນຫຼາຍແຂວງເປົ້າໝາຍ ເພື່ອເປັນແຮງຜັກດັນໜຶ່ງໃນການສ້າງຜູ້ປະກອບການໃໝ່ ແລະ ສ້າງຄວາມອາດສາມາດ ຫຼື ການຂະຫຍາຍຕົວຂອງທຸລະກິດໂດຍປ່ອຍກູ້ໃນອັດຕາດອກເບ້ຍຕ່ຳ;

- ໃນໄລຍະວາລະແຫ່ງຊາດໄດ້ພະຍາຍາມດັດສົມບໍລິສັດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ໄດ້ 14 ບໍລິສັດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ຈາກ 26 ບໍລິສັດ; ນອກນັ້ນ, ຍັງມີ 27 ບໍລິສັດ ທີ່ຈຳໜ່າຍພາຍໃນປະເທດ ໄດ້ມີຫຼາຍມາດຕະການໃນການແກ້ໄຂບັນຫາການເໜັງຕີງຂອງລາຄາສິນຄ້າ, ລາຄານ້ຳມັນເຊື້ອໄຟ ແລະ ການຄຸ້ມຄອງເງິນຕາຕ່າງປະເທດ;

- ສຳລັບການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ປະກອບການຢູ່ລາວ ແມ່ນສາມາດອະນຸຍາດນຳໃຊ້ກາໝາຍສິນຄ້າໂອດ໊ອບ 68 ຫົວໜ່ວຍ, 285 ຜະລິດຕະພັນ ແລະ ການຍົກສູງປະສິດທິພາບ ແລະ ອຳນວຍຄວາມສະດວກ ໃນການແຂ່ງຂັນ ເພື່ອສົ່ງອອກສິນຄ້າ ໂດຍສຳເລັດການເຈລະຈາເປີດຕະຫຼາດສົ່ງອອກ (ສປ ຈີນ ຈຳນວນ 16 ລາຍການ ລວມ 1 ສັດໃຫຍ່, ຫວຽດນາມ ມີ 16 ລາຍການ ແລະ ໄທ 15 ລາຍການ);

1.4 ດ້ານການທ່ອງທ່ຽວ: ໄດ້ປະຕິບັດມາດຕະການເປີດປະເທດ ແລະ ສະໜັບສະໜູນພາກທຸລະກິດທ່ອງທ່ຽວປັບປຸງຄວາມພ້ອມແຕ່ລະດ້ານ, ສົ່ງອຳນວຍຄວາມສະດວກ ແລະ ເພີ່ມການໂຄສະນາການທ່ອງທ່ຽວໃນຫຼາຍຊ່ອງທາງ ເຊິ່ງເຮັດໃຫ້ໝົດປີ 2022 ມີນັກທ່ອງທ່ຽວທັງໝົດຈຳນວນ 2.979.724 ເທື່ອຄົນ ທຽບໃສ່ແຜນປີ 2022 ປະຕິບັດໄດ້ລື່ນປະມານ 52 % ແລະ ສ້າງລາຍຮັບທັງໝົດປະມານ 537.539.389 ໂດລາ; ໃນນີ້ ນັກທ່ອງທ່ຽວສາກົນມີຈຳນວນ 1.294.365 ເທື່ອຄົນ ທຽບໃສ່ແຜນປີ 2022 ປະຕິບັດໄດ້ລື່ນແຜນ 43 % ແລະໃນໄລຍະ 5 ເດືອນຕົ້ນປີ 2023 ມີນັກທ່ອງທ່ຽວຕ່າງປະເທດເຂົ້າມາທັງໝົດ 1.405.265 ເທື່ອຄົນ, ໃນນີ້ ກວມສັດສ່ວນຫຼາຍກວ່າໝູ່ແມ່ນນັກທ່ອງທ່ຽວຈາກບັນດາປະເທດອາຊຽນ ກວມປະມານ 65%;

1.5 ດ້ານໂຍທາທິການ ແລະ ຂົນສົ່ງ: ສະພາບການຂົນສົ່ງສິນຄ້າແມ່ນມີທ່າອ່ງທ່າທີ່ດີຂຶ້ນ ໂດຍໃນໄລຍະ 6 ເດືອນຕົ້ນປີນີ້ ຄາດຄະເນປະຕິບັດໄດ້ 48,8% ຂອງແຜນການ (ຄາດຄະເນປະຕິບັດໄດ້ 6,23 ລ້ານໂຕນ) ແລະ ການຂົນສົ່ງໂດຍສານຄາດຄະເນປະຕິບັດໄດ້ 44,7% ຂອງແຜນການ (ຄາດຄະເນປະຕິບັດໄດ້ 44,7 ລ້ານຄົນ); ໄດ້ຊຸກຍູ້ໃນການແກ້ໄຂຂໍ້ຫຍຸ້ງຍາກຕ່າງໆ ໃນການບໍລິການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານຜ່ານລົດໄຟລາວ-ຈີນ ເຊິ່ງໄດ້ເຮັດໃຫ້ມູນຄ່າການບໍລິການຂົນສົ່ງຂະຫຍາຍຕົວຢ່າງໄວ ເປັນຕົ້ນ ເພີ່ມຖ້ຽວລົດໄຟຂົນສົ່ງໂດຍສານເພື່ອຮອງຮັບປະລິມານຜູ້ໂດຍສານທີ່ເພີ່ມຂຶ້ນ ປັບປຸງລະບົບການຊື້ປີ້ລົດໄຟໃຫ້ສາມາດຊື້ໄດ້ແບບອອນລາຍ ແລະ ເພີ່ມຈຸດຂາຍປີ້ລົດໄຟຢູ່ສະຖານີຄຳສະຫວາດ, ເປີດຂະບວນໂດຍສານສາກົນລະຫວ່າງສະຖານີຄຸນມິງໃຕ້ ສປ ຈີນ ແລະ ສະຖານີນະຄອນຫຼວງວຽງຈັນ ສປປ ລາວ, ເປີດນຳໃຊ້ສະຖານີຂົນສົ່ງສິນຄ້າ ຄົບທັງໝົດ 11 ສະຖານີ;

ອ່ານຕໍ່ສະບັບໜ້າ...

ອຸດສາຫະກຳ ຈົ່ງຈູ້
中鉅實業
PV
ຮ້ານຄຳພູວົງ
PHOUVONG JEWELRY
SCNG
SOMCHAYNEUK GROUP




# ຈູດປ່າປູກມັນ

# ດົ້ນກົບເມກ



ການຕັດໄມ້-ຈູດປ່າໄມ້ ເພື່ອສ້າງຜືນດິນໃຫ້ກ້ຽງແຫ້ງ ເພື່ອປູກມັນຕົ້ນ ບາງຄົນອາດໄດ້ຜົນກຳໄລໄວໃນການຂາຍມັນຕົ້ນ ແຕ່ຜົນໄລຍະຍາວ 5-6 ປີຕໍ່ໄປ ດິນຕາຍແຫ້ງແລ້ງ; ຜົນຜະລິດໜ້ອຍລົງ ເພາະການປູກມັນຕົ້ນຕ້ອງໄດ້ໃຊ້ຢາ ຫຼື ສານເຄມີ ເພື່ອໃຫ້ໄດ້ຫົວມັນຕົ້ນ ແຕ່ສ້າງຜົນເສຍໃຫ້ດິນໄລຍະຍາວ. ການຕັດໄມ້-ທຳລາຍປ່າ-ຈູດປ່າ ແລ້ວປູກມັນ; ປູກຢາງພາລາ... ອາດໄດ້ຜົນໄວທັນຕາ ແຕ່ຜົນເສຍຍາວນານແຜ່ວົງກວ້າງເຖິງລະບົບນິເວດ.

ການຈູດປ່າ-ທຳລາຍປ່າມັນຄືການຄິດກັບກັນກັບແນວຄິດປູກໄມ້-ປູກປ່າ ເພື່ອຮັກສາທຳມະຊາດ; ຟື້ນຟູປ່າໄມ້ເປັນການສ້າງສິ່ງແວດລ້ອມໃຫ້ມະນຸດຢູ່ຢ່າງປອດໄພໄດ້ ເພາະຢ່າລືມວ່າຕົ້ນໄມ້ແຕ່ລະຕົ້ນ ມັນສາມາດອົມນ້ຳໄວ້ຫຼາຍລິດ ເວລາຝົນຕົກ ທຳມະຊາດມັນຈະເຮັດໜ້າທີ່ຂອງມັນເອງ ຖ້າວ່ານ້ຳຝົນໄຫຼນອງ-ນ້ຳປ່າໄຫຼແຮງ ຍ້ອນວ່າຂາດປ່າໄມ້-ຂາດຕົ້ນໄມ້ອົມນ້ຳໄວ້ ດັ່ງນັ້ນ, ນ້ຳຈະໄຫຼໄວ-ໄຫຼແຮງ ຜົນເສຍຍິ່ງໃຫຍ່ກໍຕາມມາດ້ວຍນ້ຳມືຄົນເຮົາເອງ, ການເຮັດສວນ, ເຮັດກະເສດແບບຄວາມຮູ້ພໍກະເທີນ ຜົນຜະລິດພໍແຕ່ໄດ້ກິນ ຫຼື ບາງທີຜົນຜະລິດໄດ້ໜ້ອຍ ເພາະຂາດຄວາມຮູ້ເລິກເຊິ່ງ ບໍ່ເຂົ້າໃຈລະບົບນິເວດແທ້ຈິງ.

ພື້ນຖານຄົນລາວຍຸກບູຮານ ປູ່-ຍ່າ ເຂົາເຈົ້າຈະຮັກສາທຳມະຊາດ ຕົ້ນໄມ້ໃບຫຍ້າທີ່ເກີດຂຶ້ນ ເຂົາຈະປ່ອຍທຳມະຊາດ ແຕ່ພວກກະເສດຄວາມຮູ້ພໍກະເທີນ ຈະເສຍແຮງໄປກັບການຕັດຫຍ້າ-ເສຍຫຍ້າ; ທຳລາຍພືດພັນທີ່ເກີດຊ້ອນຂຶ້ນມາ ເຊິ່ງບໍ່ເຂົ້າໃຈວ່າທຳມະຊາດມັນຈະເກື້ອກູນກັນໄດ້ດີ ຖ້າດິນບໍ່ງາມ-ດິນບໍ່ຊຸ່ມ; ຜືນນາ, ຜືນສວນຂາດນ້ຳ ກໍເທົ່າກັບຂາດຫົວໃຈກະເສດ ດັ່ງນັ້ນ, ຕົ້ນໄມ້ໃບຫຍ້າ ແລະ ນ້ຳ ຈຶ່ງເປັນປັດໄຈສຳຄັນ ຂອງກະເສດ.

ສັງລວມໄດ້ວ່າ: ໃນນ້ຳມີປາ ໃນນາມີເຂົ້າ ຕ້ອງເຂົ້າໃຈໃຫ້ເລິກເຊິ່ງ ເຮັດນາໄດ້ເພາະມີນ້ຳ; ເຂົ້າງາມເພາະດິນດີ ໃນໄຮ່ນາມີນ້ຳ ມີອາຫານໃຫ້ປູປາກຸ້ງຫອຍອາໄສລ້ຽງຊີວິດ ເປັນລະບົບນິເວດເກື້ອກູນກັນ ແຕ່ຖ້າວ່າມີສານເຄມີໃນນ້ຳ ປາກໍຕາຍ ເຄມີໃນດິນຕົ້ນໄມ້ກໍຕາຍຄົນກິນບໍ່ໄດ້ ເຊິ່ງຕ້ອງໄດ້ຄິດໃໝ່ວ່າເຮັດແບບນັ້ນໂງ່ ຫຼື ສະຫຼາດ?

ສະເໜີແລກປ່ຽນ.

# ບົດບາດແມ່ຍິງໃນການພັດທະນາ

# ຜູ້ອື່ນ

ອີກບໍ່ເທົ່າໃດວັນຂ້າງໜ້າກໍຈະແມ່ນວັນສ້າງຕັ້ງສະຫະພັນແມ່ຍິງລາວ 20 ກໍລະກົດ ດັ່ງນັ້ນ ສະບັບນີ້ຈຶ່ງນຳເອົາບົດກ່ຽວກັບແມ່ຍິງມາໃຫ້ບັນດາທ່ານຜູ້ອ່ານຜ່ານສາຍຕາ ເພື່ອເປັນຂໍ້ມູນພື້ນຖານເລັກໜ້ອຍກ່ຽວກັບແມ່ຍິງ.

ບົດບາດຂອງແມ່ຍິງໃນການພັດທະນາ ກ່ຽວພັນໂດຍກົງກັບເປົ້າໝາຍຂອງການພັດທະນາເສດຖະກິດແລະສັງຄົມຢ່າງກວ້າງຂວາງ ແລະ ເປັນພື້ນຖານເພື່ອພັດທະນາທຸກໆສັງຄົມ; ການພັດທະນາໝາຍເຖິງການພັດທະນາທັງໝົດ ລວມທັງການພັດທະນາທາງດ້ານການເມືອງ, ເສດຖະກິດ ແລະ ດ້ານອື່ນໆຂອງຊີວິດມະນຸດ ຄວນມີການຊັກນຳໃຫ້ຈັດຫາວິທີການຕ່າງໆ ເພື່ອໃຫ້ແມ່ຍິງ ໂດຍສະເພາະແມ່ຍິງທີ່ຍາກຈົນ ຫຼື ຂາດແຄນ ມີຄວາມສາມາດຮຽກຮ້ອງ, ໄດ້ຮັບຜົນສຳເລັດ, ນຳໃຊ້ ແລະ ອ້າງສິດທິກ່ຽວກັບຄວາມສະເໝີພາບ ໃນການກຳໂອກາດດ້ານຕ່າງໆໃຫ້ຫຼາຍຂຶ້ນເລື້ອຍໆ ເວົ້າລວມ ຍິ່ງມີແມ່ຍິງທີ່ສາມາດເຂົ້າຮ່ວມໃນກິດຈະການຂອງສັງຄົມໄດ້ ໃນຖານະເປັນຕົວແທນເອກະລາດທາງດ້ານກົດໝາຍ ຍິ່ງຈະເປັນການປະກອບສ່ວນໃຫ້ຄວາມຮັບຮູ້ກ່ຽວກັບສິດສະເໝີພາບຂອງແມ່ຍິງໃນສັງຄົມໄດ້ຮັບການປະຕິບັດໃນພາກຕົວຈິງເປັນຂັ້ນໆໄປ. ການພັດທະນາຕ້ອງມີມິຕິທາງສິນລະທຳປະກອບພ້ອມ ເພື່ອຮັບປະກັນວ່າ ມີຄວາມຍຸຕິທຳຢ່າງແທ້ຈິງ, ຕອບສະໜອງຕໍ່ຄວາມຕ້ອງການ, ສິດທິຂອງບຸກຄົນ ຄວນນຳເອົາວິທະຍາສາດ ແລະ ເຕັກໂນໂລຊີມາໝູນໃຊ້ ພາຍໃນຂອບເຂດເສດຖະກິດ ແລະ ສັງຄົມ ທີ່ຮັບປະກັນໄດ້ວ່າສິ່ງແວດລ້ອມຈະມີຄວາມປອດໄພສຳລັບທຸກຮູບແບບ ການດຳລົງຊີວິດທີ່ມີຢູ່ໃນໂລກຂອງພວກເຮົາ.

ການສົ່ງເສີມສິດຂອງແມ່ຍິງ ຈະສາມາດດຳເນີນໄດ້ຢ່າງເຕັມສ່ວນ ແລະ ມີປະສິດທິພາບ ໃນພາວະທີ່ມີສັນຕິພາບ ແລະ ຄວາມໝັ້ນຄົງສາກົນ ເຊິ່ງໃນນັ້ນ ສາຍພົວພັນລະຫວ່າງປະເທດຕ່າງໆ ຈະສະແດງອອກບົນພື້ນຖານການເຄົາລົບສິດທິຕາມກົດໝາຍຂອງທຸກປະເທດ ບໍ່ວ່າຈະເປັນປະເທດນ້ອຍ ຫຼື ໃຫຍ່ ແລະ ບໍ່ວ່າເຊື້ອຊາດໃດ ທີ່ມີການປະຕິບັດສິດໃນການກຳນົດໂຊກຊາຕາຂອງຕົນເອງ ກໍຄືເອກະລາດ ອະທິປະໄຕ ຜືນແຜ່ນດິນອັນຄົບຖ້ວນ ແລະ ສິດທິໃນການມີຊີວິດຢູ່ໃນສັນຕິພາບ ພາຍໃນເຂດແດນແຫ່ງຊາດຂອງຕົນ.

ການໃຫ້ແມ່ຍິງປະກອບສ່ວນເຂົ້າໃນການພັດທະນາ ແລະ ເສີມສ້າງສັນຕິພາບ ກໍຄືການສົ່ງເສີມໃຫ້ແມ່ຍິງມີຄວາມສະເໝີພາບກັບເພດຊາຍນັ້ນ ຕ້ອງນຳໃຊ້ຍຸດທະສາດ ແລະ ມາດຕະການຕ່າງໆ ທີ່ກ່ຽວພັນເຖິງຫຼາຍດ້ານ ເປັນທິດທາງໃຫ້ປະຊາຊົນປະຕິບັດ; ຍຸດທະສາດເຫຼົ່ານີ້ ຕ້ອງອີງໃສ່ການພັດທະນາ ແລະ ການນຳໃຊ້ຊັບພະຍາກອນມະນຸດ ໃຫ້ນັບມື້ສູງຂຶ້ນສູ່ລະດັບສູງ ໂດຍແນໃສ່ສົ່ງເສີມຄວາມສະເໝີພາບ ແລະ ການພັດທະນາສັງຄົມ ແລະ ກຸ່ມຄົນຕ່າງໆຢ່າງຕໍ່ເນື່ອງ.

**ຄັດຈາກ: ສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ປີ 1998.**

## ສານປະຊາຊົນ...

(ຕໍ່ຈາກໜ້າ 1)

ເປັນນິຕິກຳ ທີ່ມີຄວາມໝາຍສຳຄັນ ແລະ ເປັນເຄື່ອງມືພື້ນຖານໃນການສ້າງຕັ້ງ ແລະ ພັດທະນາລະບົບສານປະຊາຊົນ ທັງຢູ່ສູນກາງ, ແຂວງ, ກຳແພງນະຄອນ ແລະ ເມືອງ, ເປັນການກຳນົດພາລະບົດບາດ, ໜ້າທີ່ຂອງສານປະຊາຊົນແຕ່ລະຂັ້ນໃນການຕັດສິນຄະດີແລະການປະກອບຄະນະສານຕັດສິນ, ທັງເປັນບ່ອນອີງໃຫ້ສານປະຊາຊົນໄດ້ເຄື່ອນໄຫວປະຕິບັດໜ້າທີ່ ໄດ້ເປັນຢ່າງດີ.

ການປັບປຸງກົດໝາຍວ່າດ້ວຍສານປະຊາຊົນ ໃນແຕ່ລະຄັ້ງມີຄື: ຄັ້ງທີ 1 ໃນປີ 1991 ພາຍຫຼັງຮັບຮອງ ແລະ ປະກາດນຳໃຊ້ລັດຖະທຳມະນູນ ສະບັບທຳອິດ ຂອງ ສປປ ລາວ, ໄດ້ປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 1990 ທີ່ພົວພັນເຖິງການສ້າງຕັ້ງສານປະຊາຊົນ, ການພິຈາລະນາຕັດສິນຄະດີເປັນໝູ່ຄະນະ (ແຕ່ກ່ອນມີຕຸລາການປະຊາຊົນ ປະກອບເປັນຄະນະສານຕັດສິນ), ການຊີ້ນຳການຈັດຕັ້ງສານປະຊາຊົນ ແລະ ອື່ນໆ; ຄັ້ງທີ 2 ໃນປີ 2003 ເພື່ອຮັບປະກັນຄວາມສອດຄ່ອງກັບລັດຖະທຳມະນູນທີ່ໄດ້ຮັບການປັບປຸງ ຈຶ່ງໄດ້ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 1991 ເປັນ 6 ພາກ, 5 ໝວດ 66 ມາດຕາ ເພື່ອແນໃສ່ເຮັດໃຫ້ລະບົບການຈັດຕັ້ງສານປະຊາຊົນມີຄວາມໜັກແໜ້ນ, ເຂັ້ມແຂງ, ຍົກສູງປະສິດທິພາບໃນການບໍລິການຮັບໃຊ້ປະຊາຊົນດ້ານວຽກງານຍຸຕິທຳ; ຄັ້ງທີ 3 ໃນປີ 2009 ໄດ້ມີການທົບທວນລະບົບການຈັດຕັ້ງຂອງສານປະຊາຊົນເມືອງ ເພື່ອໃຫ້ສອດຄ່ອງກັບການປັບປຸງກົງຈັກບໍລິຫານລັດຂັ້ນເມືອງ ຕາມນະໂຍບາຍຂອງລັດຖະບານ ຈຶ່ງໄດ້ສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາອະນຸມັດໂຮມການຈັດຕັ້ງຂອງສານປະຊາຊົນຂັ້ນເມືອງ ມາເປັນສານປະຊາຊົນເຂດ ເພື່ອເພີ່ມສິດອຳນາດຂອງສານປະຊາຊົນເຂດ ແລະ ທັນງົບປະມານຂອງສານປະຊາຊົນທົ່ວປະເທດຂຶ້ນກັບສາຍຕັ້ງສານປະຊາຊົນສູງສຸດ ຕາມມະຕິຕົກລົງສະບັບເລກທີ 113/ຄປຈ, ລົງວັນທີ 28 ພຶດສະພາ 2009 ຂອງຄະນະປະຈຳສະພາແຫ່ງຊາດ, ສະນັ້ນ ຈຶ່ງໄດ້ປັບປຸງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 2003 ເຊິ່ງປະກອບມີ 9 ພາກ, 5 ໝວດ ແລະ 66 ມາດຕາ; ຄັ້ງທີ 4 ໃນປີ 2017 ພາຍຫຼັງລັດຖະທຳມະນູນ ໄດ້ຮັບການປັບປຸງໃນປີ 2015 ຈຶ່ງໄດ້ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 2009 ຄືນໃໝ່ ເພື່ອເຮັດໃຫ້ການຈັດຕັ້ງສານປະຊາຊົນ ມີຄວາມໜັກແໜ້ນ, ເຂັ້ມແຂງ ເຊິ່ງໃນນັ້ນໄດ້ສ້າງຕັ້ງຄະນະສານປົກຄອງຂຶ້ນຢູ່ໃນລະບົບສານປະຊາຊົນ, ເຮັດໃຫ້ກົດໝາຍສະບັບນີ້ ປະກອບມີ 9 ພາກ, 5 ໝວດ ແລະ 69 ມາດຕາ; ຄັ້ງທີ 5 ໃນປີ 2022 ເພື່ອຮັບປະກັນການແບ່ງຂັ້ນຄຸ້ມຄອງ ແລະ ກະຈາຍອຳນາດໃຫ້ສານ

ອ່ານຕໍ່ສະບັບໜ້າ...




# ວິທີເຮັດວຽກ

**ພາກທີ 4**
**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**ຈ) ສຸດຈະລິດທຳ**

ແມ່ນບໍ່ໂລພາ ຢາກໄດ້ຊື່ສຽງ ຕຳແໜ່ງ, ບໍ່ໂລພາຢາກໄດ້ເງິນຄຳ, ບໍ່ໂລພາຢາກໄດ້ຄວາມສຸກສະບາຍ, ບໍ່ໂລພາຢາກໃຫ້ຜູ້ອື່ນຍ້ອງຍໍຕົວເອງ. ເປັນດັ່ງນັ້ນ ແມ່ນແຈ້ງໃສສະອາດບໍ່ເປັນຄົນຊົ່ວຊ້າໂສມົມຈັກເທື່ອ ມີແຕ່ຄວາມໂລພາແນວດຽວ ຄືໂລພາຢາກຮຽນ, ຢາກເຮັດວຽກ, ຢາກກ້າວໜ້າ ເຊິ່ງເປັນຄວາມໂລພາທີ່ຖືກຕ້ອງ ເພາະມັນເປັນປະໂຫຍດໃຫ້ທັງຕົວເອງ ແລະ ທັງສ່ວນລວມ: ນັ້ນແມ່ນຄຸນສົມບັດຂອງພາກປະຕິວັດ ມັນບໍ່ແມ່ນຄຸນສົມບັດແບບເກົ່າ, ມັນແມ່ນຄຸນສົມບັດແບບໃໝ່, ແມ່ນຄຸນສົມບັດອັນຍິ່ງໃຫຍ່ ມັນບໍ່ແມ່ນເພື່ອໜ້າ ເພື່ອຕາ, ຊື່ສຽງສ່ວນຕົວ ມັນແມ່ນເພື່ອຜົນປະໂຫຍດສ່ວນລວມຂອງໝົດທັງພັກ ຂອງປະເທດຊາດ ແລະ ມະນຸດຊາດທັງໝົດ: ມັນກໍເປັນຄືກັນກັບຫ້ວຍນ້ຳ ເຊິ່ງຕ້ອງມີບໍ່ ຈຶ່ງມີນ້ຳໄດ້, ຖ້າບໍ່ມີບໍ່ນ້ຳແລ້ວຫ້ວຍນັ້ນກໍແຫ້ງ. ຕົ້ນໄມ້ຕ້ອງມີກົກ ຖ້າມີແຕ່ກົກບໍ່ມີຮາກ ກົກໄມ້ກໍແຫ່ວແຫ້ງ; ຄົນຜູ້ເປັນນັກປະຕິວັດ ກໍຕ້ອງມີຄຸນສົມບັດ, ຖ້າບໍ່ມີຄຸນສົມບັດ ນັ້ນແມ່ນຈະເກັ່ງກ້າສາມາດພຽງໃດ ກໍບໍ່ນຳພາປະຊາຊົນໄດ້ ໃນການທີ່ຢາກປົດປ່ອຍຊາດ, ຢາກປົດປ່ອຍມະນຸດຊາດອອກຈາກຄວາມບໍ່ຍຸດຕິທຳ ເຊິ່ງເປັນວຽກການອັນໃຫຍ່ຫຼວງນີ້, ຖ້າພວກເຮົາຫາກເຮັດແຕ່ຕາມຄວາມຄິດຂອງຕົນເອງ ບໍ່ມີຄຸນສົມບັດ, ບໍ່ມີຄວາມຮູ້ດ້ານສິນທຳເປັນພື້ນຖານ, ຖ້າຕົວເຮົາເອງຫາກຍັງມີຄວາມຊົ່ວ, ເປັນມົນທິນເສົ້າໝອງຢູ່ໃນຕົວແລ້ວ ຈະເຮັດວຽກການປະຕິວັດນີ້ບໍ່ໄດ້.

ອ່ານຕໍ່ສະບັບໜ້າ...

# 10 ໂຣກ

ໂດຍ: ສາວເໜືອ



## ສຸກສະບາຍຫາຍໂຣຄ

**1. ມືຊາ:** ເປັນການອັກເສບຂອງເອັນຫຸ້ມຂໍ້ມື, ເສັ້ນເອັ້ນນິ້ວມື້. ປັດຈຸບັນ, ພະຍາດນີ້ມັກພົບຫຼາຍເນື່ອງຈາກວ່າເທັກໂນໂລຊີເຂົ້າມາມີສ່ວນໃນຊີວິດປະຈຳວັນເຊັ່ນ: ການນຳໃຊ້ເຄື່ອງຄອມພິວເຕີ, ການຈັບເໜົາໃນທ່າເດີມໆເປັນເວລາດົນ ເຮັດໃຫ້ກ້າມເນື້ອກົດທັບເສັ້ນປະສາດ ແລະ ເສັ້ນເອັນອັກເສບ ເຊິ່ງເຮັດໃຫ້ເກີດອາການປວດຂອງປາຍປະສາດນິ້ວມື.

**2. ພະຍາດຕໍ້ຫີນ ແລະ ຕາມົວ:** ໂຣກນີ້ ມັກເກີດຂຶ້ນກັບຜູ້ທີ່ມີອາຍຸ 40 ປີຂຶ້ນໄປ ເຊິ່ງມີຄວາມສ່ຽງຫຼາຍໃນການເປັນພະຍາດຕໍ້ຫີນ ຫຼື ກຳລັງເປັນໂຣກນີ້ໂດຍບໍ່ຮູ້ຕົວ; ຜູ້ທີ່ເປັນໂຣກນີ້ ຖ້າບໍ່ໄດ້ຮັບການປິ່ນປົວຢ່າງຖືກວິທີ ອາດເຮັດໃຫ້ຕາບອດໄດ້; ສາເຫດຕົ້ນຕໍຂອງໂຣກນີ້ ເກີດຈາກການໃຊ້ສາຍຕາເປັນເວລາດົນໆ, ການອັກເສບ ຫຼື ຕິດເຊື້ອຂອງແກ້ວຕາ ຈາກການໃຊ້ຄອມແທັກເລນ ດັ່ງນັ້ນ, ແຕ່ລະຄົນຄວນກວດສຸຂະພາບຕາທຸກໆ 2 ປີ ເພື່ອປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງໃນການເກີດໂຣກຕໍ້ຫີນ.

**3. ໜື້ອໃນຖົງນ້ຳບີ:** ເກີດຈາກການກິນອາຫານທີ່ມີໄຂມັນຫຼາຍເປັນປະຈຳ ເຊິ່ງມັກພົບໃນເພດຍິງທີ່ມີອາຍຸ 40 ປີຂຶ້ນໄປ ແລະ ຄົນຕຸ້ຍ ນອກຈາກນີ້, ຍັງມີປັດໄຈອື່ນໆອີກເຊັ່ນ: ກຳມະພັນ, ການອັກເສບຂອງຖົງນ້ຳບີ ແລະ ການກິນຢາຄຸມກຳເນີດເປັນເວລາດົນ; ເມື່ອເປັນໜື້ອແລ້ວ ຖ້າບໍ່ຟ້າວປິ່ນປົວອາດຈະກໍ່ໃຫ້ເກີດອາການຊຳເຮື້ອຕາມມາອີກດ້ວຍ.

**4. ພົກຍ່ຽວອັກເສບ:** ມັກເກີດກັບຜູ້ທີ່ນັ່ງເຮັດວຽກເປັນເວລາດົນໆ ຫຼື ບຸກຄົນທີ່ມັກເດີນທາງໄກ ຕ້ອງອົດຖ່າຍເບົາ ເຊິ່ງເປັນສາເຫດຂອງພົກຍ່ຽວອັກເສບ ໂດຍເກີດຈາກເຊື້ອແບກທີເຣຍເຂົ້າໄປຕາມທໍ່ຍ່ຽວແລ້ວກໍ່ໃຫ້ເກີດການອັກເສບ ມັກເກີດນຳເພດຍິງຫຼາຍກວ່າເພດຊາຍ.

**5. ອາການຕຶງຄຽດ ແລະ ນອນບໍ່ຫຼັບ:** ມັກເກີດຂຶ້ນກັບຄົນທີ່ເຮັດວຽກ ບໍ່ວ່າຄົນທີ່ເລີ່ມເຮັດວຽກໃໝ່ໆ ຫຼື ຄົນທີ່ເຮັດວຽກມາເປັນສິບໆປີ ບາງຄົນອາດຈະບໍ່ຮູ້ຕົວເລີຍວ່າຕົນເອງກຳລັງປະເຊີນກັບອາການຕຶງຄຽດ ທີ່ກຳລັງເກີດຂຶ້ນກັບຕົນເອງ ວິທີການຫຼີກລ່ຽງອາການຕຶງຄຽດທີ່ງ່າຍທີ່ສຸດຄື: ຮູ້ຈັກຜ່ອນຄາຍກັບໜ້າທີ່ ແລະ ປະວຽກຂອງຕົນເອງ ອອກໄປຍ່າງຈັກ 10 ນາທີ ເຊິ່ງເປັນການຜ່ອນຄາຍອີກວິທີໜຶ່ງ.

**6. ຄວາມດັນເລືອດສູງ:** ເປັນໄພງຽບທີ່ບໍ່ສະແດງອາການ ແລະ ມັກພົບກັບຜູ້ທີ່ມີອາຍຸ 40 ປີຂຶ້ນໄປ ອັນເກີດຈາກປັດໄຈຫຼາຍຢ່າງເຊັ່ນ: ໂຣກອ້ວນ, ຄວາມຕຶງຄຽດ, ຮັບປະທານອາຫານທີ່ມີຣົດເຄັມ, ສູບຢາ, ດື່ມເຫຼົ້າ ຫຼື ຜູ້ທີ່ເຮັດວຽກຢູ່ກັບໂຕະເປັນປະຈຳ ຈະມີຄວາມສ່ຽງຫຼາຍກວ່າຜູ້ທີ່ເຮັດວຽກໃຊ້ກຳລັງ; ຄວາມດັນເລືອດສູງບໍ່ພຽງແຕ່ເລື່ອງຄວາມດັນ ແຕ່ຍັງອາດນຳໄປສູ່ໂລກເສັ້ນເລືອດໃນສະໝອງແຕກ, ອຳມະພຶດ, ອຳມະພາດ, ໝາກໄຂຫຼັງ, ພິການ ແລະ ຫົວໃຈວາຍ ໄດ້ອີກດ້ວຍ.

**7. ໂຣກອ້ວນ:** ຈາກການວິໄຈທາງການແພດຫຼ້າສຸດພົບວ່າ ໂຣກອ້ວນມັກເກີດກັບຄົນໄວເຮັດວຽກເຊິ່ງເປັນບໍ່ເກີດຂອງໂລກອື່ນໆອີກເຊັ່ນ : ໂຣກເບົາຫວານ, ໂຣກຫົວໃຈ, ໄຂມັນໃນຫຼອດເລືອດຫຼາຍ ແລະ ຄວາມດັນເລືອດສູງ; ຜູ້ທີ່ເປັນໂຣກອ້ວນ ຄວນເອົາໃຈໃສ່ເລື່ອງອາຫານການກິນເປັນພິເສດ ຄວນປຶກສາເລື່ອງໂພຊະນາການ ແລະ ຫາເວລາອອກກຳລັງກາຍຢ່າງສະໝໍ່າສະເໝີ.

**8. ໂຣກກະເພາະ:** ມັກເກີດກັບຄົນທີ່ກິນອາຫານບໍ່ເປັນເວລາ, ຄົນທີ່ບໍ່ມີເວລາ, ຟ້າວຟັ່ງຈົນຫຍໍ້າອາຫານບໍ່ແຫຼກ ຄົນທີ່ມີອາການເຄັ່ງຕຶງຮຸນແຮງ ຈົນອາຫານບໍ່ຍ່ອຍ ແລະ ຄົນທີ່ສູບຢາ ແລະ ດື່ມເຫຼົ້າຫຼາຍ ມັກສ່ຽງກັບການເປັນໂຣກກະເພາະ ແລະ ອາດນຳໄປສູ່ການເກີດມະເຮັງກະເພາະອາຫານ.

**9. ປວດຫຼັງ:** ການໃຊ້ຊີວິດຢູ່ໜ້າຈໍຄອມພິວເຕີມື້ລະ 8 ຊົ່ວໂມງ ຫຼື ຫຼາຍກວ່ານັ້ນ ພ້ອມທັງການໃສ່ເກີບສົ້ນສູງເລື້ອຍໆ ອາດເປັນສາເຫດສຳຄັນຂອງອາການປວດຄໍ, ບ່າໄຫຼ່, ຫຼັງ, ແຂນ-ຂາ ແລະ ສະໂພກ ອັນເນື່ອງມາຈາກໂຣກກ່ຽວກັບກະດູກສັນຫຼັງ ຜູ້ທີ່ມີອາການປວດດັ່ງກ່າວ ຄວນໄປພົບແພດ ຫຼື ຜູ້ຊ່ຽວຊານສະເພາະ ເພື່ອວິເຄາະອາການປວດ ແລະ ຮັກສາໃຫ້ຖືກຕ້ອງ.

**10. ເຈັບຫົວ (ໄມເກຣນ):** ເປັນໂຣກຊະນິດໜຶ່ງ ທີ່ມີຄົນປ່ວຍເປັນຈຳນວນຫຼາຍ ຜູ້ປ່ວຍຈະຮູ້ສຶກວ່າເມື່ອນັ່ງເຮັດວຽກທີ່ເຄັ່ງຄຽດຈະຮູ້ສຶກປວດບໍລິເວນຂະມັບດ້ານໜ້າຫົວ ຫຼື ດ້ານຫຼັງຕົ້ນຄໍ. ອາການປວດດັ່ງກ່າວ ຄືສັນຍານເຕືອນໃຫ້ຜູ້ປ່ວຍຮູ້ເຖິງສະພາບສ່ຽງຕໍ່ການເປັນໂຣກໄມເກຣນ ການພັກຜ່ອນບໍ່ພຽງພໍ, ແສງແດດກ້າ, ຄວາມຮ້ອນ ແລະ ອາການຂາດຮໍໂມນບາງຊະນິດ ກໍເປັນປັດໄຈກໍ່ໃຫ້ເກີດອາການປວດຫົວໄມເກຣນໄດ້ຄືກັນ.

ໃນວົງການແພດ ມັກກວດພົບໂຣກ 10 ຊະນິດ ທີ່ມັກຄຸກຄາມຊີວິດຄົນໄວເຮັດວຽກ ເຖິງເວລາແລ້ວທີ່ພວກເຮົາຄວນໃຫ້ເວລາກັບຕົນເອງ ແລະ ກັບມາສຳຫຼວດຄວາມຜິດປົກກະຕິຂອງຮ່າງກາຍ ເພື່ອຈະໄດ້ຮູ້ວ່າຮ່າງກາຍກຳລັງສົ່ງສັນຍານເຕືອນອັນໃດແດ່ກ່ອນທີ່ທຸກຢ່າງຈະຊ້ຳເກີນກວ່າຈະແກ້ໄຂ.

## ອາດ ກະວີລາວ

# ແມ່ຍິງລາວ

#ອານົງເດດ ສິງດາລັກ

❊ ປະຫວັດຈາລຶກໄວ້ ໃນແຜ່ນດິນຄຳ
ວິລະກຳສະຕີລາວ ຊ່າລືໄກກ້ອງ
ປະຊາ ສັນລະເສີນຍ້ອງ ຄຸນຄວາມງາມຂອງແມ່
ສົມເປັນວິລະສະຕີອີງອາດແທ້ ຫານກ້າຄູ່ຊາຍ

❊ ຫຼາຍເຫດການບອກແຈ້ງ ຄວາມເກັ່ງຍິງລາວ
ນັບແຕ່ຄາວສູນເສຍ ໄຮ່ນາຕາກ້າ
ເຜດຜີມານເຂັນຂ້າ ຣາວີເຮືອນຊານມຸ່ນ
ເປົ້າກະສຸນຄວາຈັບປືນແລ່ນເຂົ້າ ສະໜາມສູ້ຍາດໄຊ

❊ ແມ່ບໍ່ຍອມພ່າຍແພ້ ເສຍທ່າຄົນພານ
ແມ່ອາດຫານຊານໄຊ ທຽບທຽມຊາຍແທ້
ບໍ່ອ່ອນແອພໍໜ້ອຍ ທາງກັນດານກໍເດີນຜ່ານ
ລຳລຽງອາຫານ ປືນກະບອກໃຫຍ່ນ້ອຍ ຍໍຍູ້ຝ່າຍທະຫານ ເຮົານາ

❊ ແມ່ລະດົມຮຽກເອີ້ນ ມວນໝູ່ປະຊາຊົນ
ທັງລະດົມຂົນຂວາຍ ຮັກຫອມເມືອງບ້ານ
ລູກຫຼານນິຍົມຍ້ອງ ສະຕີລາວຫຼາຍທ່ານ
ປ້າຄຳຫຼ້າ, ຄຳສຸກ, ຄຳແພງຄົນເກັ່ງກ້າ ເປັນແກ້ວແວ່ນແຍງ ແທ້ໃດ

❊ ແມ່ຍິງລາວຮອບຮູ້ ສົມຊື່ວິລະຊົນ
ແມ່ສະຫຼາດແຫຼມຄົມ ສຶກສາຄວາມຮູ້
ຄຸນສົມບັດມີພ້ອມ ຄຳຂວັນສາມດີຄູ່
ປະພຶດໂຕດີເດັ່ນກ້າວ ກຳລັງຊຸ້ນໃຫຍ່ສູງ ກໍມີ

❊ ແມ່ຮັກແພງລູກເຕົ້າ ເໝືອນດັ່ງດວງຕາ
ຮັກສາມີຂອງຕົນ ປຽບດັ່ງດວງໃຈນັ້ນ
ແມ່ຂະຫຍັນຮຽນໄດ້ ສາດຕະສິນຫຼາຍຢ່າງ
ສົມທີ່ຄົນຍົກຍ້ອງ ວິລະກຳສະຕີລາວເລີດລ້ຳ ຈະເລີນແທ້ສູ່ແນວ ແທ້ນາ

❊ 20 ກໍລະກົດຍື່ນຕ້ອນ ກະວີສົ່ງພອນໄຊ
ໃຫ້ແມ່ຍິງລາວເຮົາ ຈົ່ງບັນລຸຜົນງານດ້ວຍ
ໃຫ້ແມ່ຍິງລາວພານພໍ້ ແນວດີມີໂຊກ
ເປັນຮົ່ມໂພໃຫຍ່ກວ້າງ ປະຊາໄດ້ເພິ່ງອີງ ນັ້ນທ້ອນ!



## ໜັກຫາຍ ສະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❊ **ຂໍ່ມ**ເຊີຍວັນສ້າງຕັ້ງສະຫະພັນແມ່ຍິງລາວ ທີ່ຈະໝູນວຽນມາບັນຈົບຄົບຮອບ 68 ປີ (20 ກໍລະກົດ 1955-20 ກໍລະກົດ 2023) ເປັນເຫດການເດັ່ນກ້າວ ສິດຍິງເທົ່າທຽມຊາຍ ການງານໂອນມອບໝາຍ ດັ່ງດຽວສະເໝີດ້ານ ທັງວັດທະນະທຳພ້ອມ ຍິງຊາຍຄຽງຄູ່ ຄຽງຂ້າງຊູຊ່ອຍຊ້ອນ ສັງຄົມກ້າວຮຸ່ງຈະເລີນ ວ່ານາ! ຂ້າຂໍອວຍພອນໃຫ້ ບານແມ່ທັງຫລາຍ ມີຄວາມສຸກສົມຫວັງ ເທື່ອແຮງແຂງເຂັ້ມ ກາຍແລະໃຈໂດຍດ້ານ ຜົວພັນຜູດຜ່ອງ ທັງການງານພຽບພ້ອມ ເງິນຄຳລົ້ນອັ່ງຄັ່ງ ນັ້ນທ້ອນ!

❊ **ອາ**ທິດທີສອງຂອງກອງປະຊຸມສະພາແຫ່ງຊາດ ຜ່ານພົ້ນໄປ ໂດຍຂ້າງໃນເຕັມໄປດ້ວຍບັນຍາກາດຄຶກຄື້ນ ສສຊ ກ່າວມີຄຳເຫັນ ທຸກປະເດັນອາຈາ ເພື່ອປະຊາລາວລ້ວນ ໝົດທັງມວນສະເໜີເນັ້ນ ຫຼາຍປະເດັນພົ້ນເດັ່ນ ເຮັດເພື່ອພົງພີ່ນ້ອງ ປະຊາເຊື້ອຊາດລາວ ຊົມເຊີຍ!

😊 ຊວນຍິ້ມ 😊

# ແອ່ນຕຸ້ງ

### ເພື່ອຄວາມສະບາຍໃຈ

ເມຍທ້າວກ່ອກໄປຫ່ຽວຄຽງຈັບໄດ້ພຽງສາມມື້ ກໍໂທຫາຜົວ

+ ອາໂຫລອ້າຍກ່ອກຫອາ
- ເອີ! ມີຫຍັງ?
+ ງົວເຮົາເປັນແນວໃດ?
- ຕາຍໂຕໜຶ່ງ ອີກໂຕໜຶ່ງກຳລັງເຫງົາ
+ ເຈົ້າກະຈັ່ງແມ່ນໂພດ ແທນທີ່ຊິເວົ້າໃຫ້ຂ້ອຍສະບາຍໃຈ ບອກວ່າມັນກຳລັງກິນຫຍ້າຢູ່ແຄມນາລະກະແລ້ວ
- ຮ້ວາຍ! ແນວມັນຕາຍແທ້ເບາະ
+ ແມ່ຂ້ອຍເດເປັນແນວໃດ?
- ບໍ່ຕ້ອງຫ່ວງເພີ່ນກຳລັງກິນຫຍ້າຢູ່ແຄມທົ່ງນາພຸ້ນ
+ !!



### ຄະຕິເຕືອນໃຈ

#ດອກຫຍ້າ

ແມ່ນວ່າມີຄວາມຮູ້ ເຕັມພຸງພຽງປາກ ກໍດີທ້ອນ
ສອນໂຕເອງບໍ່ໄດ້ ໃຜຊິຍ້ອງວ່າດີ




# "ກົດໝາຍວ່າດ້ວຍການພົວພັນກັບຕ່າງປະເທດ" ຂອງຈີນ

ອີງຕາມການລາຍງານເມື່ອອາທິດຜ່ານມາ ໃຫ້ຮູ້ວ່າ: ກົດໝາຍວ່າດ້ວຍການພົວພັນກັບຕ່າງປະເທດຂອງສາທາລະນະລັດປະຊາຊົນຈີນ ຈະເລີ່ມມີຜົນບັງຄັບໃຊ້ຢ່າງເປັນທາງການນັບແຕ່ວັນທີ 1 ກໍລະກົດ 2023 ເປັນຕົ້ນໄປ ເຊິ່ງແມ່ນກົດໝາຍວ່າດ້ວຍການພົວພັນກັບຕ່າງປະເທດສະບັບທຳອິດຂອງຈີນ ທີ່ມີລັກສະນະພື້ນຖານ, ລັກສະນະໂຄງການແລະລັກສະນະສັງລວມ, ແມ່ນຜົນສຳເລັດທີ່ສຳຄັນຂອງຈີນ ໃນດ້ານການປັບປຸງລະບົບກົດໝາຍກ່ຽວກັບການພົວພັນກັບຕ່າງປະເທດໃຫ້ສົມບູນ ແລະ ຍົກສູງລະດັບວຽກງານກັບຕ່າງປະເທດທັນເປັນການຄຸ້ມຄອງຕາມກົດໝາຍ ພ້ອມທັງເປັນຂີດໝາຍສຳຄັນໃນປະຫວັດສາດຂອງປະເທດຈີນໃນດ້ານການສ້າງກົດໝາຍກ່ຽວກັບການພົວພັນກັບຕ່າງປະເທດ.

ລາຍງານຍັງໃຫ້ຮູ້ຕື່ມວ່າ: ກົດໝາຍສະບັບນີ້ ແມ່ນກົດໝາຍສະບັບໃໝ່ທີ່ຮອບດ້ານ, ແມ່ນກົດໝາຍສະບັບທຳອິດທີ່ມີລັກສະນະພື້ນຖານທີ່ເນັ້ນເຖິງທິດທາງນະໂຍບາຍ, ຫຼັກໝັ້ນຕາມຫຼັກການ ແລະ ລະບົບລະບຽບການພົວພັນກັບຕ່າງປະເທດຂອງຈີນ, ທັງໄດ້ວາງບົດບັນຍັດທົ່ວໄປກ່ຽວກັບການພົວພັນກັບຕ່າງປະເທດຂອງຈີນ.

ນອກນັ້ນ, ຍັງໄດ້ມີການວິເຄາະວ່າ ບາງຄົນຂອງປະເທດຕາເວັນຕົກເຫັນວ່າການປະຕິບັດ ກົດໝາຍວ່າດ້ວຍການພົວພັນກັບຕ່າງປະເທດ ຈະເຮັດໃຫ້ການພົວພັນກັບຕ່າງປະເທດຂອງຈີນ ເຄັ່ງຕຶງຂຶ້ນຫຼາຍກວ່າເກົ່າ ແຕ່ຄວາມຈິງພັດກົງກັນຂ້າມກັບຄວາມເຫັນດັ່ງກ່າວ, ກົດໝາຍສະບັບນີ້ ເນັ້ນໜັກວ່າປະເທດຈີນຍຶດໝັ້ນນະໂຍບາຍການຕ່າງປະເທດໂດຍສັນຕິພາບ ແລະ ເປັນເຈົ້າຕົນເອງ, ຍຶດໝັ້ນຫຼັກ 5 ປະການໃນການຢູ່ຮ່ວມກັນໂດຍສັນຕິ: ຍຶດໝັ້ນເດີນຕາມເສັ້ນທາງພັດທະນາໂດຍສັນຕິ, ຍຶດໝັ້ນນະໂຍບາຍເປີດປະຕູສູ່ພາຍນອກ, ຍຶດໝັ້ນຍຸດທະສາດເປີດປະຕູ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ.

ກົດໝາຍວ່າດ້ວຍການພົວພັນກັບຕ່າງປະເທດ ຂອງຈີນ ມີຜົນບັງຄັບໃຊ້ຢ່າງເປັນທາງການ, ໄດ້ສະແດງໃຫ້ເຫັນເຖິງຄວາມຕັດສິນໃຈອັນເດັດດ່ຽວຂອງປະເທດຈີນ ເພື່ອປົກປັກຮັກສາລະບົບສາກົນທີ່ຖືອົງການສະຫະປະຊາຊາດເປັນແກນກາງ ແລະ ລະບຽບການສາກົນທີ່ຖືກົດໝາຍສາກົນເປັນພື້ນຖານ.

ນັກວິເຄາະຊີ້ໃຫ້ເຫັນວ່າ, ການເຜີຍແຜ່ ແລະ ປະຕິບັດກົດໝາຍດັ່ງກ່າວ ບໍ່ພຽງແຕ່ແມ່ນໝາກຜົນສຳຄັນດ້ານການສ້າງສາການຄຸ້ມຄອງຕາມກົດໝາຍກ່ຽວກັບຕ່າງປະເທດຂອງຈີນເທົ່ານັ້ນ, ຍັງເປັນໝາກຜົນສຳຄັນຂອງປະເທດຈີນໃນຖານະເປັນປະເທດໃຫຍ່ທີ່ມີຄວາມຮັບຜິດຊອບ ແລະ ຊຸກຍູ້ໃຫ້ການພົວພັນສາກົນທັນເປັນແບບປະຊາທິປະໄຕ, ແລະການຄຸ້ມຄອງຕາມກົດໝາຍໂດຍຜ່ານການຄົ້ນຄວ້າ ແລະ ພຶດຕິກຳຂອງຕົນ, ທັງໄດ້ປະກອບສ່ວນເຂົ້າໃນການປົກປັກຮັກສາລະບຽບການສາກົນ ແລະ ຊຸກຍູ້ການພັດທະນາຂອງໂລກ.

# ລັດຕ້ອງສົ່ງເສີມການຜະລິດສິນຄ້າສາມາດແຂ່ງຂັນກັບສາກົນ


ທ່ານ ຄຳແສນ ສີສະວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ໄດ້ປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ທີ່ໄດ້ລາຍງານໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍມີເນື້ອໃນດັ່ງນີ້:

ບັນຫາທຸລະກິດພາຍໃນພວກເຮົາບໍ່ສາມາດແຂ່ງຂັນໄດ້ກັບບໍລິສັດຕ່າງປະເທດ ອັນນີ້ແມ່ນເປັນບັນຫາທ້າທາຍໃຫ້ແກ່ພວກເຮົາທີ່ຈະໄດ້ສືບຕໍ່ບັນຫາທີ່ມັນເກີດຂຶ້ນ ເຮົາຊິເຫັນວ່າການນຳເຂົ້າຂອງພວກເຮົານີ້ພວກເຮົາຕ້ອງໄດ້ປະເມີນເບິ່ງສະພາບການພັດທະນາການຄ້າຂອງແຕ່ລະປະເທດຢູ່ໃນພາກພື້ນ ໂດຍສະເພາະແມ່ນຕິດຈອດກັບພວກເຮົານີ້ ເພາະວ່າບົດສະຫຼຸບຂອງລັດຖະບານເຫັນວ່າຍັງຕີລາຄາສະພາບເສດຖະກິດລວມ ແຕ່ສະພາບການຄ້າຂອງປະເທດຢູ່ໃນພາກພື້ນຂອງພວກເຮົາກຳລັງດຳເນີນນະໂຍບາຍການສົ່ງອອກ ແລະ ລົງທຶນຕ່າງປະເທດຢ່າງແຂງແຮງ ເຂົາຈະເຮັດແນວໃດໃຫ້ມີການລົງທຶນຕ່າງປະເທດໃຫ້ຫຼາຍທີ່ສຸດ ຈະເຮັດແນວໃດໃຫ້ມີການສົ່ງອອກສິນຄ້າ ຄອງເອົາຕະຫຼາດຂອງປະເທດບ້ານໃກ້ເຮືອນຄຽງ ຫຼືຂອງໂລກໃຫ້ຫຼາຍຂຶ້ນ ແມ່ນການແກ່ງແຍ່ງແຂ່ງຂັນກັນທີ່ສຸດ ໃນຂະນະດຽວກັນນັ້ນ ປະເທດພວກເຮົາຍັງກຳລັງອອກນະໂຍບາຍສົ່ງເສີມການຜະລິດທົດແທນ ນະໂຍບາຍພວກເຮົາອອກມາເຂົາເຈົ້າເອົາໄປແກ້ໂຈດໝົດວ່າຈະເຮັດແນວໃດ ຕົວຢ່າງວ່າເຂົາເຄີຍຄອງສິນຄ້າຢູ່ປະເທດເຮົາ ເຄີຍນຳບ້ານເຮົາເປັນຕະຫຼາດຈຳໜ່າຍສິນຄ້າແລ້ວ ເຮົາຈະແກ້ເກມແນວໃດ ເຂົາຮູ້ກ່ອນແລ້ວ ເຂົາວາງກ່ອນແລ້ວ ໂດຍສະເພາະວ່າການວາງອັດສິດເມັດເງິນ ການສົ່ງເສີມສິນຄ້າຂາອອກຂອງເຂົາເຈົ້າເຮົານະໂຍບາຍ 3% ໃນການສົ່ງເສີມຜະລິດພາຍໃນ ເຂົາພັດນະໂຍບາຍການສົ່ງເສີມສິນຄ້າ 1% ຕົວຢ່າງວ່າຈັ່ງຊັ້ນ ຍ້ອນສາເຫດອັນນັ້ນ ຂ້າພະເຈົ້າຄິດວ່າພວກເຮົາມີສິ່ງທ້າທາຍຫຼາຍ ພວກເຮົາຕ້ອງສືບຕໍ່ຊອກຫາວິທີທາງເຮັດແນວໃດສົ່ງເສີມການຜະລິດພາຍໃນໃຫ້ມັນໄດ້ ແລະ ຂ້າພະເຈົ້າຢາກຂໍສະເໜີບາງວິທີແກ້ໄຂດັ່ງຕໍ່ໄປນີ້:

**ອັນທີໜຶ່ງ** ຕໍ່ກັບກະຊວງການເງິນ ຢາກສະເໜີໃຫ້ຂຶ້ນພາສີ ພາຫະນະນຳເຂົ້າທີ່ບໍ່ຮັບໃຊ້ການຜະລິດໂດຍກົງ ຢາກໃຫ້ຂຶ້ນຫຼາຍເປີເຊັນໂລດ ເພາະວ່າລັດເຮົາຊິໄດ້ເງິນຄັນຂຶ້ນຫຼາຍ 300%, 400% ເພາະວ່າດຽວນີ້ເຮົາຊິເຫັນວ່າລົດຫຼູນີ້ຫຼາຍລົດພາຫະນະບາງຄອບຄົວນຳໃຊ້ ຜູ້ໜຶ່ງໃຊ້ 2 ຄັນ, 3ຄັນ, 4 ຄັນ, 5ຄັນ ການນຳໃຊ້ພາຫະນະເພີ່ມຂຶ້ນ ນ້ຳມັນເພີ່ມຂຶ້ນ ໝາຍຄວາມວ່າເງິນຕາເຮົາໄຫຼອອກເທົ່ານັ້ນ ເຮົາໄດ້ພາສີແຕ່ 20% ຫຼືວ່າ 30% ຕໍ່ນ້ຳມັນ ແຕ່ກົງກັນຂ້າມເຂົາໄດ້ຕົ້ນທຶນມັນເທົ່າໃດ ໄດ້ກຳໄລເທົ່າໃດ ຕົວຢ່າງ: ຂ້າພະເຈົ້າຢາກໃຫ້ມີໂກຕ້າ ຫຼືວ່າຂຶ້ນພາສີ ຫຼືວ່າຈຳກັດໂກຕ້າ.

**ອັນທີສອງ** ຂຶ້ນພາສີສິນຄ້າອຸປະໂພກ-ບໍລິໂພກທີ່ບໍ່ນອນຢູ່ໃນລາຍການຂອງຂົງເຂດການຄ້າເສລີ (AFTA) ທີ່ບໍ່ມີການຍົກເວັ້ນ ເຮົາຄວນຈະຂຶ້ນ ເພາະວ່າເປັນການແຂ່ງຂັນສິນຄ້າພາຍໃນ ຫຼາຍປະເທດເຂົາຈະຂຶ້ນ. ນອກນັ້ນ, ສະເໜີໃຫ້ຂຶ້ນ ເອີ້ນວ່າ: ມູນຄ່າເພີ່ມສຳລັບສິນຄ້າຕ່າງປະເທດຂໍໃຫ້ບວກໃສ່ 20%, 30% ໃຫ້ລາຄາແພງກ່ອນລາຄາສິນຄ້າພາຍໃນຂອງພວກເຮົາ ການຜະລິດພາຍໃນພວກເຮົາຈຶ່ງຈະສາມາດແຂ່ງຂັນໄດ້ ອັນນີ້ຕໍ່ກະຊວງການເງິນ.

**ອັນທີສາມ** ຕໍ່ກັບລົງທຶນຕ່າງປະເທດ ຢາກສະເໜີໃຫ້ລັດຖະບານກວດເບິ່ງຄືນ ເພາະວ່າອັນໃດໃຫ້ຕ່າງປະເທດລົງທຶນໄດ້ ອັນໃດບໍ່ໃຫ້ຕ່າງປະເທດລົງທຶນໄດ້ ເພາະວ່າກົດໝາຍການລົງທຶນມີແລ້ວ ແຕ່ວ່າ ຂ້າພະເຈົ້າຍັງເຫັນຢູ່ວ່າບາງອັນທີ່ພວກເຮົາຫ້າມ ແຕ່ວ່າຍັງມີຕ່າງປະເທດເຮັດຢູ່ ຕົວຢ່າງວ່າການນຳສິນຄ້າຈາກຕ່າງປະເທດມາຈຳໜ່າຍ ໂດຍແມ່ນຄົນຕ່າງປະເທດເອງຫຼາຍປະເທດ ເພິ່ນບໍ່ໃຫ້ເຮັດ ມາຈຳໜ່າຍໂດຍກົງ ຕ້ອງແມ່ນຜ່ານນາຍໜ້າຄົນລາວ ຫຼືວ່າເປັນຮ້ານຄົນລາວ ອັນນີ້ແມ່ນເຂົາເຈົ້ານຳເອົາສິນຄ້າມາຂາຍເອງ ເກັບເງິນເອງ ແລ້ວຊື້ເອົາເງິນຕາຕ່າງປະເທດແລ້ວກັບຄືນປະເທດເຂົາເອງ ອັນນີ້ພວກເຮົາຍັງຫຼາຍ ໝາຍຄວາມວ່າເຂົາມາເກັບກຸ້ງເກັບຊົວບ້ານເຮົາໄປໝົດ ອັນນີ້ຢາກໃຫ້ເບິ່ງຄືນໃນການສົ່ງເສີມການລົງທຶນຕ່າງປະເທດ ອັນໃດທີ່ເຂົາເຮັດໄດ້ ອັນໃດທີ່ເຂົາເຮັດບໍ່ໄດ້ ສ່ວນຫຼາຍທຸລະກິດຂະໜາດນ້ອຍ-ຂະໜາດກາງ (SME) ຢາກໃຫ້ສົ່ງເສີມຄົນລາວເຮົານີ້ເຮັດ ແລະ ສິນຄ້າໃດທີ່ຕ່າງປະເທດມາລົງທຶນແລ້ວ ຜະລິດໄປຂາຍຕ່າງປະເທດແມ່ນສົ່ງເສີມ ແຕ່ສິນຄ້າໃດທີ່ມາລົງທຶນຢູ່ລາວ ແລະ ຜະລິດຂາຍໃຫ້ຄົນລາວ ອັນນີ້ພວກເຮົາບໍ່ໄດ້ປຽບ ປັດຈຸບັນນີ້ພວກເຮົາເຫັນຫຼາຍບັນດາທ່ານທີ່ເຂົ້າໄປຕະຫຼາດຕ່າງໆ ເຫັນແຕ່ສິນຄ້າຕ່າງປະເທດໝົດ ສິນຄ້າລາວບໍ່ຢາກມີ ຄັນຢາກເຮັດແນວນັ້ນແທ້ໆ ກໍນຳເຂົ້າມາແລ້ວໃຫ້ຄົນລາວເປັນເຈົ້າຂອງ ເປັນຜູ້ຂາຍ ຍັງໄດ້ສ່ວນຕ່າງ ໝາຍຄວາມວ່າຍັງໄດ້ລາຍຮັບເພີ່ມຂຶ້ນຈາກພາສີ ແລະ ຍັງໄດ້ໃຫ້ຜູ້ປະກອບການຄົນລາວແດ່ ແຕ່ກ່ອນເຮົາບໍ່ໄດ້ເຮັດແນວນີ້ ແຕ່ດຽວນີ້ມີຕ່າງປະເທດຂາຍເອງ ອັນນ້ອຍໆມີຕ່າງປະເທດຂາຍເອງ.

**ອັນທີສີ່** ຢາກໃຫ້ກວດເບິ່ງການລົງທຶນຕ່າງປະເທດດ້ານທີ່ມັນມີກຳໄລ ຫຼືວ່າເປັນເສດຖະກິດຢາກໃຫ້ມີການຖືຫຸ້ນລັດວິສາຫະກິດ ຖືວ່າຄົນລາວຕ້ອງຖືຫຸ້ນຮ່ວມກັນພັດທະນາ ຢ່າງຕ່ຳສຸດແມ່ນ 40% ສ່ວນຫຼາຍແມ່ນຝ່າຍລາວເຮົາມີແຕ່ 20%, 10% ຢູ່ນາຍໜ້າຊື່ໆ ອອກຊື່ໃຫ້ຊື່ໆ ອັນນີ້ພວກເຮົາເສຍປຽບ ສ່ວນແບ່ງກໍເສຍປຽບ ແລະ ການເອົາວັດຖຸດິບອອກກໍເສຍປຽບ ແລະ ເຮົາຢາກໃຫ້ຕ້ອງມີກົດໝາຍ ເວົ້າຢ່າງຈະແຈ້ງວ່າຕ້ອງຍົກເປີເຊັນຂຶ້ນໃຫ້ມັນຫຼາຍ.

ຕໍ່ກັບການສົ່ງເສີມຜະລິດຕະພັນພາຍໃນ ຫຼືວ່າຜູ້ລົງທຶນພາຍໃນ ຢາກສະເໜີໃຫ້ເພີ່ມມາດຕະການໃນການແຂ່ງຂັນ ພວກເຮົາຖືວ່າເສຍປຽບໃນການແຂ່ງຂັນນີ້ຫຼາຍ ໂດຍສະເພາະແມ່ນການປົກປ້ອງສິນຄ້າການນຳເຂົ້າ ແລະ ຕົ້ນທຶນການຜະລິດ ຢາກໃຫ້ສືບຕໍ່ສົ່ງເສີມ ແລະ ທຸລະກິດຂອງຄົນລາວທີ່ສາມາດທຳການຜະລິດໃນຮູບການຕ່າງໆ ຂະໜາດນ້ອຍຢູ່ນຳແຂວງ ຢູ່ນຳເມືອງຕ່າງໆ ຢາກໃຫ້ຄົນລາວເປັນເຈົ້າຂອງ ອັນນີ້ຢາກໃຫ້ເບິ່ງຄືນ ທຸລະກິດຂະໜາດໃຫຍ່ ຢາກໃຫ້ເຮັດທຸລະກິດທີ່ສົ່ງອອກໄດ້.

ອັນຕໍ່ມາຢາກສະເໜີໃຫ້ສະພາແຫ່ງຊາດ ຫຼື ວ່າລັດຖະບານອອກຂໍ້ກຳນົດ ຫຼືວ່າດຳລັດວ່າດ້ວຍການສົ່ງເສີມການນຳໃຊ້ສິນຄ້າພາຍໃນ ເພາະວ່າຫຼາຍປະເທດທີ່ມີເສດຖະກິດນຳໜ້າເຂົາເຈົ້າກໍຍັງເຮັດ ໂຄງການຂອງລັດຈະຈັດກິດຈະກຳ ຈະຊື້ອຸປະກອນຮັບໃຊ້ຕ່າງໆ ຕ້ອງຊື້ການຜະລິດພາຍໃນກ່ອນອື່ນໝົດ ເອົາພາສີຂອງປະຊາຊົນໄປ ຕ້ອງໄປຊື້ສິນຄ້າຂອງປະຊາຊົນ ແຕ່ວ່າເອົາພາສີຂອງປະຊາຊົນໄປແລ້ວ ພັດໄປຊື້ສິນຄ້າຕ່າງປະເທດ ຕົວຢ່າງວ່າ ອັນນີ້ຢາກໃຫ້ມີດຳລັດອັນໜຶ່ງອອກ.

ຕໍ່ກັບທະນາຄານແຫ່ງຊາດ ຂ້າພະເຈົ້າເຫັນວ່າການຄຸ້ມຄອງເພິ່ນສະເໜີມື້ເຊົ້າກໍເຫັນວ່າດີແລ້ວ ແຕ່ວ່າອັນ ໜຶ່ງທີ່ທະນາຄານຄຸມບໍ່ໄດ້ຄືວ່າ ຮ້ານຂາຍເຄື່ອງໜຶ່ງຢາກໃຫ້ທະນາຄານຄຸມໂຕສິນຄ້ານຳ ຕົວຢ່າງວ່າ ຮ້ານຂາຍລົດ ເພິ່ນຕ້ອງການທຶນໝູນວຽນ.

## ປະເມີນ...

(ຕໍ່ຈາກໜ້າ 1)

ແລະ ສະບັບເລກທີ 31/ສປສ, ລົງວັນທີ 23 ທັນວາ 1989 ເຊິ່ງໄດ້ປະກາດໃຊ້ໂດຍລັດຖະດຳລັດ ຂອງປະທານປະເທດສະບັບເລກທີ 05/ປທທ ແລະ 07/ປທທ, ລົງວັນທີ9 ມັງກອນ 1990 ແລະ ໄດ້ຖືເອົາວັນທີ 9 ມັງກອນ 1990 ເປັນວັນສ້າງຕັ້ງອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ຢ່າງເປັນທາງການ.

ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ສະບັບດັ່ງກ່າວ ປະກອບມີ VI ພາກ, 27 ມາດຕາ ແລະ ອົງການໄອຍະການປະຊາຊົນ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. ຂັ້ນສູນກາງມີອົງການອະທິໄອຍະການປະຊາຊົນ, ຂັ້ນທ້ອງຖິ່ນ ມີອົງການໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ອົງການໄອຍະການປະຊາຊົນເມືອງ, ເທດສະບານ.

ສ່ວນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບທຳອິດ ປະກອບມີ VIII ພາກ, 10 ໝວດ ແລະ 96 ມາດຕາ. ກົດໝາຍສະບັບດັ່ງກ່າວ ໄດ້ກຳນົດສິດ, ໜ້າທີ່ ແລະ ຫຼັກການພື້ນຖານໃນການດຳເນີນຄະດີອາຍາ, ສິດ ແລະ ພັນທະ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ, ບັນດາມາດຕະການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ, ຂັ້ນຕອນຕ່າງໆຂອງການດຳເນີນຄະດີອາຍາ ນັບແຕ່ຂັ້ນຕອນສືບສວນ-ສອບສວນ, ຂັ້ນຕອນສັ່ງຟ້ອງ ແລະ ຂັ້ນຕອນຕັດສິນຂອງສານ, ສິດໃນການຕິດຕາມກວດກາຂອງອົງການໄອຍະການປະຊາຊົນ, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ອື່ນໆ.

ເພື່ອເຮັດໃຫ້ລະບົບການຈັດຕັ້ງຂອງອົງການໄອຍະການປະຊາຊົນມີຄວາມຮັດກຸມ, ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງປະເທດ. ປີ 2003 ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໄດ້ຮັບການປັບປຸງຄັ້ງທີໜຶ່ງ ຕາມມະຕິຂອງສະພາແຫ່ງຊາດ ສະບັບເລກທີ 06/ສພຊ, ລົງວັນທີ 21 ຕຸລາ 2003 ປະກອບມີ VII ພາກ, 8 ໝວດ ແລະ 56 ມາດຕາ. ພ້ອມກັນນັ້ນ, ກໍໄດ້ປ່ຽນຊື່ຈາກ "ອົງການອະທິໄອຍະການ" ມາເປັນ "ອົງການໄອຍະການປະຊາຊົນສູງສຸດ" ແລະ ໄດ້ປັບປຸງລະບົບການຈັດຕັ້ງຂອງອົງການໄອຍະການຄືນໃໝ່ ແນໃສ່ເຮັດໃຫ້ອົງການໄອຍະການປະຊາຊົນແຕ່ລະຂັ້ນ ສາມາດເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍ.

ປີ 2009 ຄະນະປະຈຳສະພາແຫ່ງຊາດ ໄດ້ອອກມະຕິຕົກລົງ ສະບັບເລກທີ 113/ຄປຈ, ລົງວັນທີ 28 ພຶດສະພາ 2009 ວ່າດ້ວຍການໂຮມສານປະຊາຊົນເມືອງ ແລະ ອົງການໄອຍະການປະຊາຊົນເມືອງເຂົ້າເປັນສານປະຊາຊົນເຂດ ແລະ ອົງການໄອຍະການປະຊາຊົນເຂດ ພ້ອມທັງຫັນງົບປະມານຂອງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ໃຫ້ຂຶ້ນກັບສາຍຕັ້ງແລະ ໃນປີດຽວກັນນີ້ ຄະນະປະຈຳສະພາແຫ່ງຊາດ ໄດ້ອອກມະຕິຕົກລົງ

ອ່ານຕໍ່ສະບັບໜ້າ...



ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ຂໍ້ຫ້າມ ສຳລັບນັກທ່ອງທ່ຽວ



ເຊື່ອວ່າຂາປະຈຳ ໜັງສືພິມ **"ຜູ້ແທນປະຊາຊົນ"** ຄົງໄດ້ອ່ານເລື່ອງທີ່ຜູ້ຂຽນຝອຍໃນສະບັບປະຈຳອາທິດຜ່ານມາທີ່ໄດ້ປຽບທຽບ "ຜູ້ນຳທ່ຽງ" ວ່າຄືຫູ, ຕາ ແລະ ແຂນຂາຂອງວຽກທ່ອງທ່ຽວ ກໍຄືນັກທ່ອງທ່ຽວທັ້ນລະ. ສ່ວນສຳລັບມື້ນີ້, ຂໍຍົກຕົວຢ່າງຂໍ້ຫ້າມສຳລັບນັກທ່ອງທ່ຽວທີ່ປະຕິບັດກັນຢູ່ບາງປະເທດ ເຊັ່ນ:

**ທີ່ ສປຈີນ** ເມື່ອປະມານສີ່ຊ້າຫ້າປີຜ່ານມາ, ທາງການຈີນໄດ້ອອກກົດລະບຽບເຫຼັກ ເພື່ອຄວບຄຸມນັກທ່ອງທ່ຽວຈີນ ບໍ່ໃຫ້ເຮັດແນວແຕກປອກ ນອກທາງ ເວລາໄປເຄື່ອນໄຫວທ່ອງທ່ຽວຢູ່ພາຍໃນ ແລະ ຕ່າງປະເທດ ຄຽງຄູ່ກັບລະບຽບການຄຸ້ມຄອງ-ຄວບຄຸມແຂກ ຫຼື ນັກທ່ອງທ່ຽວຕ່າງປະເທດ ທີ່ເຂົ້າໄປ ສປຈີນ. ສຳລັບຢູ່ຕ່າງປະເທດນັ້ນທາງການຈີນ ໄດ້ມອບໃຫ້ບັນດາສະຖານທູດຈີນເປັນຜູ້ຕິດຕາມການປະພຶດຂອງນັກທ່ອງທ່ຽວຈີນ ເພື່ອບໍ່ໃຫ້ລະເມີດຂໍ້ຫ້າມ ເຊັ່ນ ລະເມີດລະບຽບກົດໝາຍ, ຮີດຄອງປະເພນີຂອງປະເທດທີ່ໄປທ່ອງທ່ຽວ, ການກໍ່ອາຊະຍາກຳຕ່າງໆທີ່ພົວພັນກັບຢາເສບຕິດ, ການພະນັນ, ການຕົ້ມຕຸ໋ນ, ໂສເພນີ, ການຄ້າມະນຸດ. ນອກຈາກມອບໃຫ້ສະຖານທູດເປັນຫູເປັນຕາແລ້ວ, ທາງການຈີນກໍຍັງມີກົນໄກຮ່ວມມືປະສານງານກັບເຈົ້າໜ້າທີ່ກ່ຽວຂ້ອງປະເທດປາຍທາງການທ່ອງທ່ຽວອີກດ້ວຍ. ສາເຫດທີ່ນຳໄປສູ່ການອອກກົດລະບຽບເຫຼັກດັ່ງກ່າວມີຫຼາຍ ແຕ່ຂໍຍົກຕົວຢ່າງ ກໍລະນີນັກທ່ອງທ່ຽວຈີນສາດນ້ຳຮ້ອນໃສ່ ນາງ ອາກາດ ການບິນໄທ ເມື່ອ 5 ປີຜ່ານມາຍ້ອນຕ້ອງການປ່ຽນບ່ອນນັ່ງໃນເຄື່ອງບິນແຕ່ຖືກປະຕິເສດ. ນອກນັ້ນ ກໍມີກໍລະນີນັກທ່ອງທ່ຽວຈີນສອງຄົນ ສະແດງທ່າຂ່ຳນັບແບບຮິດເລີ ຢູ່ບໍລິເວນຕຶກລັດຖະສະພາເຢຍລະມັນ ທີ່ແບກແລງ ຈີນຖືກປັບໃໝ ແລະ ເນລະເທດ. ການສະແດງທ່າທາງທີ່ເປັນສັນຍາລັກຂອງພວກຟາດຊິດຮິດເລີນັ້ນ ມັນຂັດກັນກັບກົດໝາຍເຢຍລະມັນ ຢ່າງຮ້າຍແຮງ. ສ່ວນນັກທ່ອງທ່ຽວຕ່າງປະເທດທີ່ໄປທ່ອງທ່ຽວໃນຈີນນັ້ນກໍຕ້ອງປະຕິບັດຕາມຂໍ້ຫ້າມທີ່ກ່າວມາຂ້າງເທິງນັ້ນເຊັ່ນກັນ. ໃນໄລຍະຜ່ານມາເຄີຍມີກໍລະນີ ນັກທ່ອງທ່ຽວຕ່າງປະເທດ ຂອກຊື້ວັດຖຸມີຄ່າທາງປະຫວັດສາດ ເຊັ່ນ ຫີນ-ດິນຈີ່ ຈາກກຳແພງໃຫ່ຍບ່ອນເປ່ເພຍັງບໍ່ທັນໄດ້ບູລະນະສ້ອມແຊມຄືນ. ນອກຈາກນັ້ນກໍຍັງມີນັກທ່ອງທ່ຽວມີຈັງໄຮໃຊ້ວັດຖຸຂີດຂຽນ ຫຼື ຄວດຊື່ຂອງພວກຕົນໄວ້ຢູ່ຕາມສະຖານທີ່ຕ້ອງຫ້າມຕ່າງໆ.

**ທີ່ປະເທດຝຣັ່ງ** ເມື່ອ 3 ປີ ກ່ອນໜ້ານີ້, ທາງການຝຣັ່ງໄດ້ຊຳລະສະສາງໜ່ວຍກະແຈຫຼາຍພັນຊຸດທີ່ປິດຕາຍຢູ່ຮາວ ຫຼື ເສົາບັນດາຂົວຂ້າມນ້ຳແຊນ ຢູ່ນະຄອນຫຼວງປາຣີ. ໜ່ວຍກະແຈເຫຼົ່ານີ້ແມ່ນບັນດານັກທ່ອງທ່ຽວຄູ່ບ່າວສາວ ພາກັນປິດຕາຍໄວ້ ແລ້ວໂຍນລູກກະແຈລົງນ້ຳ. ການເຮັດແບບນີ້ແມ່ນເພື່ອເປັນສັນຍາລັກຄວາມຮັກອຳມະຕະເໝືອນກັບໜ່ວຍກະແຈທີ່ປິດຕາຍໄວ້. ທາງການຝຣັ່ງເຫັນວ່າຈຳນວນໜ່ວຍກະແຈທີ່ເພີ່ມຂຶ້ນຈະເຮັດໃຫ້ຂົວທົນນ້ຳໜັກບໍ່ໄຫວຈຶ່ງໄດ້ຈັດການຕັດອອກຈົນແປນເອີດເຕີດ ແລ້ວປະກາດຂໍ້ຫ້າມນັກທ່ອງທ່ຽວເອົາໜ່ວຍກະແຈໄປເກາະຫ້ອຍ ແລະ ປິດຕາຍຕາມຂົວຂ້າມນ້ຳແຊນອີກຕໍ່ໄປ. ສ່ວນຢູ່**ປະເທດມຽນມາ**ນັ້ນ ຂໍ້ຫ້າມສ່ວນໃຫ່ຍພົວພັນກັບການປະພຶດທີ່ບໍ່ເໝາະສົມຂອງນັກທ່ອງທ່ຽວ ຢູ່ຕາມສະຖານທີ່ສັກກາລະບູຊາເຊັ່ນວັດ, **ຢູ່ກຳປູເຈຍ** ຂໍ້ຫ້າມເນັ້ນເລື່ອງການນຸ່ງຖືໂປ້ເປືອຍຕາມສະຖານທີ່ປະຫວັດສາດ-ວັດທະນະທຳ, **ຢູ່ໄທ** ທາງການເອົາໃຈໃສ່ຄວບຄຸມການຊື້-ຂາຍ ສິນຄ້າປອມ, ສິນຄ້າລະເມີດລິຂະສິດ, ໂດຍໄດ້ອອກຄຳເຕືອນນັກທ່ອງທ່ຽວຕ່າງປະເທດບໍ່ໃຫ້ຫຼົງກົນລວງໄປຊື້ສິນຄ້າຫຼູແຕ່ເປັນຂອງປອມ, ສ່ວນຜູ້ຂາຍສິນຄ້າປອມກໍຈະໄດ້ຮັບໂທດຕາມກົດໝາຍ. ທາງການໄທຖືວ່າສິນຄ້າປອມຍ້ອມແມວເຫຼົ່ານີ້ ຈະເຮັດໃຫ້ປະເທດໄທເສຍຊື່ສຽງຍ້ອນ ແລະ ຈະເຮັດໃຫ້ນັກທ່ອງທ່ຽວຫຼາບບໍ່ຢາກໄປທ່ອງທ່ຽວຢູ່ປະເທດໄທອີກ. **ຢູ່ສິງກະໂປ** ຢູ່ຫຼາຍສະຖານທີ່ທ່ອງທ່ຽວມີການຫ້າມກິນ, ດື່ມ ແລະ ສູບຢາ. ຢູ່**ປະເທດອິດຕາລີ** ໂດຍສະເພາະແມ່ນຢູ່ນະຄອນຫຼວງໂຣມ ນັ້ນກໍ່ມີການຫ້າມນັກທ່ອງທ່ຽວລາກຫີບລໍ້ຕາມບ່ອນຕຶກທ່ອງທ່ຽວບູຮານ ທີ່ສຳຄັນເພື່ອປ້ອງກັນບໍ່ໃຫ້ມີຮອຍຂູດ, ຫ້າມກິນດື່ມຕາມສະຖານທີ່ດັ່ງກ່າວ ແລະ ຫ້າມສວຍໂອກາດອາບນ້ຳ-ຊັກເຄື່ອງຢູ່ຕາມນ້ຳພຸ. ຂໍ້ຫ້າມເຫຼົ່ານີ້ມີບົດລົງໂທດຕໍ່ຜູ້ລະເມີດດ້ວຍການປັບໃໝ.

(ເຊີນອ່ານບົດ ໂຄງການບ້ານທ່ອງທ່ຽວ ເພື່ອເກັບກ່ຽວຜົນປະໂຫຍດ ໃຫ້ຊາວບ້ານ ໃນສະບັບໜ້າ).




## ເພື່ອຄວາມປອດໄພຂອງເຈົ້າເອງ

*#ບ່າວກະບື*

ຍິງສາວຄົນໜຶ່ງ ຮັບສະແດງຮູບເງົາໃນສາກພະຈົນໄພ. ໃນເນື້ອເລື່ອງ, ມີສາກໜຶ່ງທີ່ນາງຕ້ອງໄດ້ໂດດລົງນ້ຳຈາກໜ້າຜາທີ່ສູງຊັນ. ຫຼັງຈາກທຳຄວາມຮູ້ຈັກກັບສະຖານທີ່ບ່ອນນາງຈະໂດດແລ້ວ, ນາງກໍຮີບແລ່ນໄປຫາຜູ້ສ້າງຟີມຮູບເງົາທັງເວົ້າຂຶ້ນວ່າ:

"ນ້ອງບໍ່ໂດດດອກ ນ້ຳຢູ່ຕີນຜາເທິ່ນຕື້ນໂພດ, ເລິກພຽງແຕ່ 30 ເຊັນທີ່ນັ້ນ !"

ຜູ້ສ້າງຟີມເວົ້າຂຶ້ນວ່າ: "ດີລະດ, ນັ້ນກໍເພື່ອຄວາມປອດໄພຂອງນ້ອງເອງ, ພວກເຮົາບໍ່ຢາກໃຫ້ນ້ອງຕາຍດິກນ້ຳຊັ້ນບ່າ".

## FOR YOUR OWN SAFETY

*# BAOKBU*

A young girl was to be starred in the adventure film. There was a place in the script where the girl was to jump from a high cliff into the water. When the girl was shown round the place, she ran to the producer and said:

"I won't make a jump. The water is too shallow, only 30 centimeters deep at the bottom of the hill !"

That's right " said the producer, " That is for your own safety, we don't want you to get drowned !"

ອ່ານມ່ວນ ຊວນຍິ້ມ



ຄວັນລົດດຳທຳລາຍບັນຍາກາດຂອງການສັນຈອນ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ :
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກິ່ງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ນາງ ນິດຕາ ຄຸນປາກດີ